# ນິທານ

# ນາງແຕງອ່ອນ

ເຫຼັ້ມ ໒

ຂອງ

## ກົມວັນນະຄະດີ

ພິມເທື່ອທີ ໑ ຈຳນວນ ໓,໐໐໐ ສະບັບ

ທີ. ໓໑. ພືສຈິກາ ໑໙໓໗

ນິທານ

# ນາງແຕງອ່ອນ

ເຫຼັ້ມ ໒

ຂອງ

## ກົມວັນນະຄະດີ

ພິມເທື່ອທີ ໑ ຈຳນວນ ໓,໐໐໐ ສະບັບ

ທີ ໓໑ ພຶສຈິກາ ໑໙໕໗

# ໜັງສືແຕງອ່ອນ ເຫຼັ້ມ ໒

## ບັ້ນ ໑໑ ຣິສກຸມພາຣໍາໄຣຫາບາງແຕງອ່ອນ

ບັດນີ້ຈັກກ່າວເຖິງພຣະຣັດສີເຈົ້າ ກຸມພາຫງວທ່ອງ ກ່ອນແລ້ວ
ພຣະກໍຫາລູກໄມ້ ທັງມື້ຄໍ່າຈອນ
ແລ້ວລ່ວງລ້າ ຄືນທີ່ອາສົມ
ພຣະກໍແກວ ໆ ສຽງ ຮຽກເຮວຫານ້ອງ
(ມາເປີກອງແພງແກ້ວ ບາງຊີນ້ອງພີ່ ກູເອີຍ
ພຣະພີ່ມາຣອດແລ້ວ ບາງແກ້ວປູ່ໃສ ພີ່ເດ)
ເຈົ້າຮີບມາຮັບອ້າຍ ໜັກເນື້ອຍນິວຕາ ແຫ້ບາ
ພີ່ກໍເດີນໄພໜາ ບໍ່ສະບາຍທັງມື້
ພຣະກໍຮຸບແຮງເອີ້ນ ຫາບາງອິດອ່ອນ
ບໍ່ ຍິນສຽງຕ່ອນຕໍ້ ບາງນ້ອຍຍງບເປັນ
ອັນວ່າຕາໃສເຈົ້າ ຄະນຶງໃຈນີມາກ
ປາງນີ້ບາງໄປເກັບດອກໄມ້ ຕືນຕ້າຍທ່ງວຕາຍ ບໍ່ປ່າແລ້ວ
ແຕ່ນັ້ນຕາປະໄສເຈົ້າ ທັນຢໍາເຮວຮີບ

| | |
|---|---|
| ເຈົ້າກໍພັບຖືບເທົ້າ | ເຖິງແທ້ທີບາງ |
| (ໄປຮອດຫ້ອງ | ຫີບແທ່ງບາງເຊົາ |
| ຕາຫຼຽວຫາ | ເຫຼືອກນອງຂວາຊ້າຍ) |
| ພໍປະມານໄດ້ | ແຮງມານ້ອຍບຶ່ງ |
| ແລ້ວຈຶ່ງລຸກຍ່າງຍ້າຍ | ຫານ້ຳອາບໂສງ |
| ເຈົ້າກໍຄອງຫານ້ອງ | ຊີ່ຂາວໜັກເໜື່ອຍ ເສັ່ງແລ້ວ |
| ພໍເມື່ອແສງຄ່ຳຄ້ອຍ | ມົວໄມ້ມືດດົງ |
| ອັນວ່າທິງທັນເຈົ້າ | ຣັດສີສິບຄະນິງນາກ |
| ກໍຫາກພິດປລາດແທ້ | ປານນີ້ບໍ່ມາ ບເດ |
| ຄວນກູໄປຫາເອີ້ນ | ນຳນາງດູກ່ອນ |
| ຫຼອນວ່າໄປທ່ຽວຫຼີ້ ນ | ດົງກວ້າງຄວ່າຫຼົງ ບໍ່ຮູ້ |
| ແຕ່ນັ້ນອົງຣັດສີເຈົ້າ | ເຣວຣີບພລັນໄປ |
| ເຖິງກາງໄພ | ຮຽກຫານາງແກ້ວ |
| ບໍ່ໄດ້ຍິນສຽງເຈົ້າ | ນາງງາມສງັດຢູ່ |
| ອັນວ່າຜູ້ທີ່ເຫງົ້າ | ຣັດສີເຈົ້າຫງ່ວມເຫງົາ |
| ພຣະກໍເອົາກີນເຂົ້າ | ໄພພະນອມນຳກູກ ໄປນັ້ນ |
| ຕລອດທັງແງ່ເງື້ອມ | ແຖວໄມ້ຮຽກຫາ |
| ກໍບໍ່ພາກົດແທ້ | ສຽງຄືນຂານຕອບ ທີ່ໃດນັ້ນ |
| ພຣະກໍເທາະຫອບເຕັ້ນ | ຄືນນັ້ນທ່ຽວຫາ |
| ທຸກຂອກຫ້ວຍ | ເຫວຮ່ອມວັງຣີ |
| ຈອມກີ ຣີ | ຊອກຫານາງແກ້ວ |

ກໍຫາກຣຸບແຮງແລ້ວ ຫາບາງໃນປ່າ
ເຈົ້າກໍຮ້ອງຮ່ຳໄຫ້ ຫານ້ອງຮ່ຳໄຮ
ໂອນໍເວນໃດເດ ມາໄກພັດພາກ ກັນນີ້
ຫາກວ່າຫຸກນຶ່ງແລ້ວ ຊິແຖມຊ້ຳຕື່ມສອງ ແລະນໍ
ອັນນຶ່ງລືວ່າເສືອສາງຊ້າງ ຄະບາໜີເໜືອບປ່າ
ຫຼື ວ່າຜີຮ່າຮ້າຍ ກິນແລ້ວບອດບາງ ນັ້ນລື
ກໍບໍ່ເຫັນຮອຍແຫ້ ໄຫຼນອງເລືອດເຮັ້ງ ທີ່ໃດນັ້ນ
ອັນວ່າສົບເສື້ອຜ້າ ເຫຼືອໄວ້ກໍບໍ່ມີ
ອັນນຶ່ງຮູ້ວ່າທັສດີລີງຜ້າຍ ເວຫາຫງູ ມຄາບ ໄປລື
ລືວ່າບາດເຣດຮ້າຍ ເອົາເຈົ້າຈຸ່ມວັງ ນັ້ນເດ
ກໍບໍ່ມີຕ່າງແຫ້ ຫາງທ່າຫງວລີງ
ເລີຍບໍ່ເຫັນຮອຍຕີນ ໄຕ່ລີງຄີນນ້ຳ
ຮູ້ວ່າຜີມາບຂ້າມ ໄພສິບມາຮອດ
ເອົາບອດແກ້ວ ແພງລ້ານດ່ວນໜີ ນັ້ນລື
ກໍບໍ່ຮູ້ແຫ່ງຫ້ອງ ຫາຊອກອິດແດວນ ບຶງແລ້ວ
ກໍຫາກຣຸບແຮງຫິວ ທ່ຽວຫາບາງແກ້ວ
ພຣະຈິງຄືນມາຫ້ອງ ໂຮງຫັນຂອງເກົ່າ
ເຈົ້າກໍເຊທ່າວລົ້ມ ວິນສມ້ອຍເນື້ອບລີງ ຫັ້ນແລ້ວ
ແຕ່ນັ້ນພໍຄາວແລ້ວ ຄອງສະຕິລຸກນັ່ງ
ທັງເລົ່າຍັ່ງ ໆ ໄຫ້ ຫານ້ອງບໍ່ເຊົາ
ໂອນໍເວນໃດນໍ ເຖິງກູຂ້ຽວຂຸ່ນ ສັນນີ້

ຊູ່ມື້ນ້ອງກໍອອດ ໆ ເວົ້າ ບ່ຳອ້າຍບັ່ງຫັນ ແຫນາ
ບັດນີ້ນ້ອງເລົາປະພີໄວ້ ໜີໄປຕາຍຈາກ ເສັຽບໍ
ນ້ອງຫາກພາກພີໄວ້ ດົງກວ້າງຜູ້ດຽວ ແຫ້ບໍ
ຄ້ອນວ່າພຣະຈົມແລ້ວ ຄ່ອຍບັ້ງພາວະວາ
(ທົງຫວງຫຸກ ປູ່ດຽວໜອງໜ້ອນ
ຈອນໃຈສ້າງ ສິບທັນເຊົ້າຄ່ຳ)
ຍັງເລົາຄຶດຮອດນ້ອງ ນົງໜ້າບໍ່ລືມ
ເທື້ອນີ້ໝົດບົດບັ້ນ ກຸມພາຫຸກຂະເວດ
ໄວ້ແຕ່ພໍສ່ຳນີ້ ຖວາຍໄທທີຄວນ ກ່ອນແລ້ວ ຯ

## ບັ້ນພຣະອິນອົງບອກໃຫ້ທ້າວເກດສຸຣິວົງຍານບຳເອົາແມ່

ບັດນີ້ຈັກກ່າວເຖິງຫ້ອງ ອິນທາເທວະຣາດ ກ່ອນແລ້ວ
ຍາມນັ້ນຄວັນມືດກຸ້ມ ເຖິງເຈົ້າເທພອິນ
ພຣະຈົງຫຼົງແລປ້ຽນ ລົງມາພາຍລຸ່ມ
ກໍຈົງເຫັນບາດນ້ອຍ ໄປຄ້າງຄ່ວງນານ
ພຣະກໍເຫຼືອໃຈແຫ້ ນະໂບຂັນຈິດບ່າ
ອິນກໍຮ້ອນເຣ່ງຂ້ຽວ ຈຳນ້ອງດ່ວນລົງ
ເຈົ້າຈົງໄປບອກທ້າວ ພຣະເກດສຸຣິວົງ
ຈຳອົງຂຽວ ສືບເອົາປ່າຊ້າ
ຄືນມາຫ້ອງ ສະເວີຍເມືອງທົງແທ່ນ

ເຈົ້າປ່າຊ້າ ທະຍານລ້ຳລ່ວງລິງ ນ້ອງເອີຍ
ແຕ່ນັ້ນຫັສໄນເຈົ້າ ເທເວດລິງເປືອງ
ເຖິງຈອມເມືອງ ຮອດປາວປາງແກ້ວ
ຫັສໄນເອົ້າ ເຖິງນາບິນບອກ
ເລົ່າເຫດໃຫ້ ນາຮູ້ທ່າງກາງ
ຂ້ອຍນີ້ ຊື່ວ່າຫັສໄນທ້າວ ເທເວດແນວອິນ
ເປັນທີ່ຕາ ແຫ່ງອິນອິງເຈົ້າ
ນາບອກເຈົ້າ ຮູ້ທ່າງພໍປະມານ
ຂ້ອຍກໍເຫັນນາງຄານ ປູ່ປາວປາງເສື້ອ
ອັນວ່າສີໃສແກ້ວ ນາດາດິນແມ່ ນານັ້ນ
ນາງກໍທຸກຍາກຮ້າຍ ຂລັງແຄ້ນຄັ່ງທວງ
ນາງກໍໄປຕິກກ້າ ຂິງເຂດເມືອງນີ
ຊື່ວ່ານັນທະພານຂວາງ ເຂດນານສວາງເສື້ອ
ອັນວ່າຫັດຈັກທ້າວ ຂຸນນານລັກລອບ
ມັນຈອບໄດ້ ນາງແກ້ວດ່ວນໜີ ເຈົ້າເອີຍ
ແຕ່ນັ້ນພູມີໄດ້ ຍິນຄຳຮ້ອນເຮ່ງ
ນາເຄ່ງຂ້ຽວ ຖາມຊັ້ນຊ່ອງທາງ
ອັນວ່ານັນທະພານທ້ອງ ຫິນໄດແດນທີນ ໄດນັ້ນ
ຂໍໃຫ້ເທເວດທ້າວ ແໜຮູ້ທ່າງທາງ ແດ່ຖ້ອນ
ແຕ່ນັ້ນຫັສໄນທ້າວ ໄຂກອນບິນບອກ
ໃຫ້ເຈົ້າໄປຊື່ນີ້ ປ່າເວັ້ນພິກທາງ ແທ້ເນີ

ໃຫ້ເຈົ້າລອດໜ່ວຍແກ້ວ ໃສ່ສ່ອງດາວພຣະກາຍ
ຫາກຈັກເຫັນເມືອງນານ ດັ່ງໃຈຈິງອ້າງ
ຄ້ອມບອກແລ້ວ ລາຈາກອິງກະສັດ
ພຣະກໍເດີນເວຫາ ຫອບທະຍານຜັນຜ້າຍ
ເລີຍລ່ວງລ້ຳ ເຖິງຍອດດາວະດຶງ
ເຖິງວິມານ ແທ່ນຄຳລາຍລ້ອມ
ກໍຫາກບໍຣະບວນບັ້ນ ຫັສໄນລິງບອກ
ແລ້ວທໍ່ນີ້ ຖວາຍໃຫ້ທືຄວນ ກ່ອນແລ້ວ ฯ

# ບັ້ນທ້າວເກດສຸຣິຍົງຍານໄປບຳຫາແມ່

ບັດນີ້ຈັກກ່າວເຖິງພຣະເກດສຸຣິຍົງຍານເຈົ້າ ຄະນຶງການຮ້ອນເຮົ່ງ ກ່ອນແລ້ວ

ທ້າວກໍໄຫວ້ແມ່ລ້ຽງ ນາງແກ້ວຍອດສວັນ
ເທື່ອນີ້ລູກກໍຮ້ອນເຮົ່ງຂ້ຽວ ເຖິງແມ່ມາດາ
ເພາະເພິ່ນນີ້ເວຮາ ຈ່ອງຈູງຈຳໃຊ້
ລູກຈັກໜີໄກເຈົ້າ ຈອມຄຸນພຣະແມ່ ກ່ອນແລ້ວ
ຈັກໄດ້ເດີນດຸ່ງດັ້ນ ດອນແກ້ວແມ່ຕົນ
ຖ້າບໍ່ໄດ້ຍອດແກ້ວ ຕົນແມ່ມາເມືອງ ເມື່ອໃດ
ລູກຈັກທວນສົງຄາມ ຕ່າງແຂວງຂໍໄດ້
ແຕ່ນັ້ນນາງກະສັດໄຫ້ ຖແລງຄຳບົນບອກ
ບັດນີ້ດີຂນາດແທ້ ຈອມເຈົ້າປ່າລາ ແມ່ເນີ

ອັນວ່າພຣະອົງສິບກ້າ ແສງສອນອັນປະເສີດ
ເຈົ້າແມ່ທຽນແທນຂ້າງ ເອົາໄວ້ປ່າວາງ ແມ່ເນີ
ອັນນຶ່ງບານເດີນດ້າວ ດາລະວັງແວນຖື
ຍັກນັ້ນເດີນດຸ່ງດັ້ນ ຫາເນື້ອຊູ່ວັນ ແມ່ແລ້ວ
ໃຫ້ເຈົ້າເອົາພີເສື້ອ ຮັກສາເມືອງໄປເພື່ອນ
ພໍປາກຕ້ານ ດອນຫ້າວເພື່ອນທາງ ລູກເອີຍ
ອັນນຶ່ງປ່າໄດ້ເຫຼືອພອກພົ້ນ ເຫັນແກ່ຄວາມນອນ ແມ່ເນີ
ຄັນວ່າເຂົາມາຫຼອນ ເນື້ອນອນມີຮູ້
ຄັນວ່ານາຄານຫ້າວ ນອນລົງໃຫ້ພີຢູ່
ຖ້າວາພີເມື້ອນແລ້ວ ນາຫ້າວປູ່ຍານ ແມ່ເນີ
ອັນນີ້ແມ່ສັ່ງເຈົ້າ ເຈົ້າຈື່ຈຳເອົາ
ປ່າໄດ້ມົວເມົາຫຼັບ ບໍ່ດີລະວັງໄວ້
ນາງກໍນາຍເອົາຜ້າ ພູສາຍບໍ່ຍື່ນ
ໃຫ້ແຈ່ມເຈົ້າ ນາຫ້າວເອື້ອນແຍງ
ແມ່ນວ່ານານຫຼາຍລົ້ນ ເຫຼືອອັກໄຂລ້ານຕື່ວ ກໍດີ
ໃຫ້ເຈົ້າໄກວແກວ່ງຜ້າ ຕາຍມ້ວຍບໍ່ຫຼໍ ແທ້ແລ້ວ
ກັບທັງນໍຣະກົດແກ້ວ ຫັນມະໂຮງລູກປະເສີດ
ແມ່ກໍເອົາຍື່ນໃຫ້ ນາຫ້າວພາບນານ
ແມ່ນວ່ານານມາລ້ອນ ນາຄານລ້ານຕື່ວ ກໍດີຖ້ອນ
ປ່າໄດ້ປຸດປ່ອນປ້ານ ມັນແທ້ທີ່ໃນ ລູກເອີຍ
ແມ່ນວ່າມັນຈັກທຳຣິດທີໃຫ້ ຕົວດຽວແສນຮູບ ກໍດີຖ້ອນ

24/VII
ຫ້າມຈຳໜ່າຍ

ດັ່ງວ່າມັນເຂົ້າໃກ້ ບາຍຖິ້ມດອກແຫວນ ແມ່ເນີ
ຫາກຈັກບັງເກີດຂຶ້ນ ເປັນເຫດໄຟເຜົາ
ຝູງໝູ່ນາງມົວມຸດ ຕຸ່ມຕາຍຫາຍສ້ຽງ
ຄ້ອນວ່າແມ່ສັ່ງແລ້ວ ທ້າວເລົາອຳລາ
ບາກໍບໍ ມືທູນ ຂາບນາງສວັນຟ້າ
ບາຄານທ້າວ ປະດັບດີຕົກແຕ່ງ
ພຣະຂັນສອດຄ້ອງ ຖຽນໝັ້ນຜູກແອວ
ແລ້ວກໍບາຍເອົາແກ້ວ ທະນູສອນເຫຼັ້ນປະເສີດ
ທ້າວກໍທິງຂີ່ມ້າ ຜີເສື້ອລ່ວງຕາມ
ແຕ່ນັ້ນກັລເບດແກ້ວ ນາງເທພລີລາ
ນາງກໍ ຄືນເມືອເມືອງສວັນ ຮ່ວມແບບພຣະອິນເຈົ້າ
ນາງກໍຫາຍຄຳເສົ້າ ໂສກາກັ້ນໂສກ
ທໍ່ແຕ່ຄຶດຮອດທ້າວ ກຸມານນ້ອຍຜູ້ດຽວ
ນາງກໍທິ້ງລ່ຳຢ້ຽນ ສອງໜໍ່ກະສັດຕາ
ສອງກໍພາກັນເດີນ- ປ່າໄພພະນອມໄມ້
ແລເຫັນຍອດຊໍ່ຊ້ອງ ຜາຕໍ່ລຽນຕໍ ແລເບີ
ສອງກໍພາກັນລັດ- ເລ່ງໄປປຳໄປ້
ກໍຫາກວອຍ ໆ ຂ້າມ ພູສູງແສນງ່ອນ
ຮອດຫ້ວຍນ້ຳ ເຊົາຫັ້ນສວ່າງແດວນ
ດັ່ງວ່າມີແຮງແລ້ວ ເຊົາແຮງຄາວນຶ່ງ
ນ້ອຍນຶ່ງໄດ້- ແຮງແລ້ວເລົາໄປ

ກໍຈຶ່ງກາຍແດນດ້າວ　　ພູສູງຫຼາຍຍ່ານ
ເດັຽລະດາດກ້ອນ　　ຜາລ້ານລ່ວງກາຍ
ຫຼາຍວັນໄດ້　　ຫຼາຍຄືນຄາວເຄ່ງ
ເດືອນນຶ່ງໄດ້　　ຂຽວລ້ານລ່ວງໄປ
ເລີຍເລົ່າເຖິງແຫ່ງຫ້ອງ　　ຂິງເຂດອິງຣັດສີ
ຫາກແມ່ນຕາປະໄສ　　ແຫ່ງລຸງບາທ້າວ
ແຕ່ນັ້ນບາໄທທ້າວ　　ທັງຜີໄປຮອດ
ຂາກໍແລຄ່ວງຄຸ້ມ　　ຣັດສີເຈົ້າຮຸ່ງເຮືອງ
ດີແກ່ຍອດພຸ່ງພົ້ນ　　ແກມຊ່ອງຍາງສູງ
ລາຍເດືອເກາະ　　ກ່ຽວກັບເປັນຖ້ານ
ອັນວ່າບາຄານທ້າວ　　ທັ້ງຜີຫຼີງລ່ຳ
ໃຜຜູ້ມາກໍ່ສ້າງ　　ປາງແກ້ວປ່ຽວພອຍ ນໍ້ເດ
ຮ້ອຍທີຍັກຜດຮ້າຍ　　ຕົວຊື່ກຸມພົນ ບໍ່ຢ່າແລ້ວ
ມາຢູ່ກາງໄພສົນ　　ຈອບກິນຄົນໃບ້ ນັ້ນລື
ຫຼື ວ່າປາງກະສັດໄທ້　　ຕາປະໄສວິນັຍສູດ
ມາຢູ່ສ້າງ　　ສິນແກ້ວນັ່ງທັມ ນັ້ນລື
ແຕ່ນັ້ນທ້າວກໍຜູກມ້າໄວ້　　ຜີຢູ່ຮັກສາ
ຄັນວ່າສັດຕູມາ　　ຢ່າວາງຕົວມ້າ
ນ້ອງຈັກໄປປອງຢ້ຽມ　　ປາງທອງດູກ່ອນ
ຈັກວ່າປາງເລີດລ້ຳ　　ມັນນັ້ນຊື່ລື ບໍ່ຮູ້
ແຕ່ນັ້ນເໜືອຫົວເຈົ້າ　　ກຸມ່ານເປາະປ່ອງ

ທ້າວກໍຫຼິງລ່ຳປ້ຽມ ເຫັນຖ້ວນຊູ່ເຊີງ
ອັນນີ້ເປັນຊາດຊັ້ນ ແນວໜໍ່ຊີງຫັນ ແຫ້ແລ້ວ
ບາຄານຄຶດ ໃຄ່ໃນຣັດສີເຈົ້າ
(ຄຶດໃຄ່ຄວນຫົວຫຼີ້ນ ລອງຊົມຊ້ອນຊື່ນ
ໃນປອກເຈົ້າ ຣັດສີຫຼີ້ນສວ່າງໃຈ)
ທ້າວຄຶດແລ້ວ ກົນເລດອຸບາຍ
ຫຼຽວຕາຫຼິງ ລ່ຳປາງດູຖ້ວນ
ກໍຈຶງເຫັນບັງໄມ້ ທັນດັງອິງປູ່
ຊັນແນະໄວ້ ທາງເຂົ້າຂອກປະຕູ
ປະກໍບາຍເອົາໄມ້ ນາດີເຕາະຕ່ອນ
ຄ້ອນເທົ້າລົ້ມ ຣັດສີເຈົ້າຕື່ນຣິນ
ແຕ່ນັ້ນອີງຣັດສີເຈົ້າ ໄຂຕູມາເບິງ
ທ້າວຣີບລີ້ ນອນສົ້ງເບິງຣັດສີ
ພຣະຣັດສີເຈົ້າ ຄະນຶງໃຈມີມາກ
ຣ້ອຍວ່າບັກໜຸ່ມນັ້ນ ເອົານ້ອງແຫ່ງກູ ບໍ່ປ່າແລ້ວ
ເຈົ້າກໍໄປວຽນອ້ອມ ລຽນຂອກແດນອາສົມ
ພຣະກໍພູນ ໆ ສຽງ ອ່ານມົນວຽນອ້ອມ
ທັງອະຣືອະແຣມພ້ອມ ຄາຖາດີໂອມອ່ານ
ທ້າວກໍເປາະປ່ອງເຂົ້າ ສາລາກວ້າງລ່ຳແປງ
ກໍຈຶງເຫັນໜັງກ້ຽງ ຈົມມະຂັນປູ່
ພູວະນາດທ້າວ ສວາຍເປື້ອງປິ່ນເສັງ

ບາກໍເອົາເທິງປີ້ນ    ລົງໄປໄວ້ລຸ່ມ
ແລ້ວເລົ່າຫັກພິດໄມ້    ຖິມແລ້ວເລົ່າໜີ
(ແຕ່ນັ້ນພຣະອັດສີເຈົ້າ    ມາຮອດຫຼີ ງດູ
ກໍຈຶງເຫັນຫັນດັງ    ຕ່າງຕາຕີນເຈົ້າ
ຄຶດວ່າຜີສວາງເສື້ອ    ທໍາກົນການຫຼອກ
ມັນຫາກກົນບ້ອງແກ້ວ    ຊຶມາຊ້ຳຕີນກູ ແລະບໍ)
ຄ້ອນວ່າເຈົ້າຄຶດແລ້ວ    ອິນເພີກອິນສາ
ອິນສວາຫະ    ບໍ່ຫຼໍ ຕິງສ້ຽງ
ແລ້ວເລົ້າຄືນມາຫ້ອງ    ສາລາຂອງເກົ້າ
ຈັນມະຂັນແປ່ປີ້ນ    ເປັນໜ້າປລາດໃຈ
(ໃຜຜູ້ເຮັດດັ່ງນີ້    ກົນເລດມາຍາ
ມັນເລົ້າມາລວງໃຍ    ແຫ່ງກູເປັນກະດໍ້
ມັນສັງຈອງຫອງແທ້    ໃຍກູດູໝິນ)
ເຮັດຜາບແຜ້    ກູທ້າວບັງຫັນ ນີ້ເດ
ຢ້ານແມ່ນປີສາເສື້ອ    ເອົານາງລັກລອບ ໄປນັ້ນ
ມັນຫາກຍັງບໍ່ແລ້ວ    ຊິເອົາຊ້ຳແຫ່ງກູ ແລະບໍ
ເອົາກໍເອົາສາທ້ອນ    ໃຫ້ມັນສວ່າງທິງທຸກ
ຕາງໃຫ້ຕາຍບໍານາງ    ສວ່າງກໍໃຈລາງແລ້ວ
ແຕ່ນັ້ນບາຄານທ້າວ    ຟັງຄໍາຣັດສີຈົ່ມ
ກໍຫາກດູປລາດແທ້    ບາທ້າວຮ່ຳຄະນຶງ
ອັນນີ້ຫາກແມ່ນຣຶສີເຈົ້າ    ຕີນລຸງອ້າຍແມ່ ກູແລ້ວ

ບານເມືອກູປອກຫຼີ້ນ    ຣັກສີເຈົ້າຮ່ຳໄຣ ດັ່ງນີ້
ຄວນກູໄປຫາເຈົ້າ    ອິງຣັກສີຖາມເຫດ ດູຖ້ອນ
ຈັກວ່າດແລະຮ້າຍ    ພາຍຫນ້າກໍໃຫ້ເຫັນ ຊອບແລ້ວ
ແຕ່ນັ້ນນາຄານຫ້າວ    ປະນິມມືແລ້ວນັ່ງ
ຫຍັບເຂົ້າໃກ້    ຣັກສີເຈົ້າຟັ່ງເຟືອນ
ອັນວ່າອິງຣັກສີເຈົ້າ    ເຫັນນາຍປ້ານສັ່ນ
ດັ່ນ ໆ ໄຫ້    ກິວປ້ານສັ່ນສາບຸ
ພຣະກໍກິວວາຍແຫ້    ຂິນພອງລຸກເບືອກ
ຄຶດຂະນ່າປ້ານ    ພຣະອິງເຈົ້າຮ່ຳໄຣ
ນຶງຫາກເອົານ້ອງແກ້ວ    ນາງນາດກູໄປ
ນັງບໍ່ສິນໃຈນຶງ    ຊິຕ່າວເອົາກູຊ້ຳ
ນຶງຫາກເປັນແນວເຊື້ອ    ຜີມານນິເດດ
ກັບເພດພ້ຽງ    ເປັນຫ້າວຫຼອກຫຼອນ
ນຶງຫາກເຫັນເຄີຍໄດ້    ຫຽວມາຫ້ຽມເກົ້າ
ກູຫາກຮູ້ເພດພ້ຽງ    ຜີເຫົ້າຊູ່ເຊີງ ຖ້ອນແລ້ວ
ແຕ່ນັ້ນນາຄານຕ້ານ    ຕາມການຕ້ານກ່າວ
ບອກຂ່າວໃຫ້    ຣັກສີເຈົ້າປ່າກິວ ພຣະເອີຍ
ຂ້ານີ້ຫາກແມ່ນແນວນານເຊື້ອ    ອິງອາດໃພທິນານ
ລິງມາໃນສິງສານ    ຜານມານີທັງຖ້ານ
ຂ້ານີ້ມິໃຊ່ແນວນານເຊື້ອ    ຜີມານກະທຳເພດ ສັງແລ້ວ
ບໍ່ໃຊ່ຜີເພດເສື້ອ    ສາງຮ້າຍປ່າກິວ ພຣະເອີຍ

| | |
|---|---|
| ຂ້ານີ້ແນວກະສັດໄທ້ | ນະຄອນສີສເວີຍຣາດ ພາຍພຸ້ນ |
| ຫໍ່ວ່າປິດຕຸຣາດຣ້າຍ | ຈຳໃຫ້ພາກເມືອງ |
| ອັນວ່າມາດາຂ້າ | ນາງງາມແຕງອ່ອນ |
| ພໍ່ສົ່ງໃຫ້ | ຕີຊ້ຳໄລ່ໜີ ແຫ້ແລ້ວ |
| ຂ້າກໍບັງອ່ອນນ້ອຍ | ບໍ່ຮູ້ຮ່ອມທາງເດີນ |
| ກໍຫາກເນີນນານເຫິງ | ຖ່າຍຣະດູດິນໄດ້ |
| ຈິນວ່າສັງຂານຂ້າມ | ຣະດູເດືອນແຖມຖ່າຍ ມານັ້ນ |
| ແປດຂວບເຂົ້າ | ຣະດູໄດ້ຖ່າຍມາ ນີ້ແລ້ວ |
| ບັດນີ້ເຫເວດເຈົ້າ | ຕົນຊື່ຫັສໄນ |
| ລົງມາໄຂອາການ | ບອກຄວາມພໍ່ຮູ້ |
| ວ່າມີຫັຖຈັກທ້າວ | ບັນທະພານແດນທີບ |
| ມາລັກດັ້ນ | ເອົາແກ້ວແມ່ໄປ ວ່ານາ |
| ນາງກໍຕົກເຂດຫ້ອງ | ຫິນແຫ່ງນໍຣະໂຄ |
| ຊື່ວ່າບັນທະພານຂວາງ | ເຂດນານສວາງເສື້ອ |
| ຂ້າຈິ່ງຫິງຄຳແຄ້ນ | ນະໂນຂັນຈິດບ່າ |
| ກໍຈິ່ງຮ້ອນເຮັ່ງຂ້ຽວ | ຂຽວລ້ານລ່ວງມາ ນີ້ແລ້ວ |
| ເມື່ອນັ້ນອົງຣັດສີເຈົ້າ | ຟັງພາກບາຖແລງ |
| ຫາກແມ່ນແນວນາມເຣົາ | ກິ່ງພິງພັນເຊື້ອ |
| ອົງຣັດສີເຈົ້າ | ບິນດີຊົມຊື່ນ |
| ເຈົ້າຫາກເປັນຊາວຊັ້ນ | ຫຼາຍຫຼ້າລູກລຸງ ແຫ້ແລ້ວ |
| ອັນວ່າກະສັດຕີແກ້ວ | ນາງງາມແຕງອ່ອນ |

ນາງຫາກແມ່ນນ້ອງຫຼ້າ    ເຮົາແທ້ທ່ຽງຈິງ
ພຣະຄ່ອຍເວົ້າ    ຄວາມເກົ່າຫຼັງມາ
ຈາຄຳທຸກ    ຕໍ່ຫຼານຄືຄ່ອຍ
ເຈົ້າກໍເວົ້າແຕ່ເຄົ້າ    ເທົ້າບອດເປັນຊີ
ເປັນຣັດສີ    ຢູ່ໃນດົງກວ້າງ
ຕັ້ງຫາກເຫິງນານໄດ້    ສາມປີທັດທ່ຽງ
ມີແຕ່ສອງພີ່ນ້ອງ    ທົງສ້າງສືບທັມ
(ທຸກຄ່ຳເຊົ້າ    ສອງພໍ່ພາວະນາ)
ວັນນຶ່ງລຸງໄປຫາ-    ເຜືອກມັນມາລ້ຽງ
ເດີນດົງດ້າວ    ຫາມັນໃນປ່າ
ວັນຂ້ອນຄ້າຍ    ຄືນຫ້ອງແຫ່ງດົນ
ລຸງກໍຫາມາໄດ້    ບັ້ງເຄື້ອງຂອງສັນ
ກັລຍານາງ    ຢູ່ສາລາຄອຍຖ້າ
ຄັນວ່າຕາວັນຄ້ອຍ    ພໍແລງລຸງຕ່າວ ມານັ້ນ
ນາງກໍຫາດອກໄມ້    ຄອຍຖ້າຊູ່ວັນ
ນັບວ່າສາມປີແລ້ວ    ບັ້ງຄົງຄອຍຢູ່
ກໍບໍ່ເຈັບປ່ວຍໄຂ້    ໃນເນື້ອສິ່ງໃດ
ບາດວ່າເລີຍລ່ວງເຂົ້າ    ປີສີ່ມາເຖິງ ດັ່ງນັ້ນ
ລຸງກໍເດີນດົງຫາ    ເຜືອກມັນມາລ້ຽງ
ທັງເລົ້າເກັບໝາກໄມ້    ທັງໝູ່ຜົລມັນ
ທັງນາວກາບ    ໝາກໄພແກມກ້ຽງ

ພໍເມື່ອຕາວັນຄ້ອຍ　　ຄອຍລົງລັບລ່ຽມ ໄປນັ້ນ
ລຸງກໍຄືນຄອບຫ້ອງ　　ສາລາກວ້າງຄ່ຳຈອບ
ເລີຍບໍ່ເຫັນແກ່ນແກ້ວ　　ລຸງເລົາຊິລຫີ
ລຸງກໍເດີນຄີຣີ　　ຫ່ຽວຕາມຫານ້ອງ
ບໍ່ເຫັນສາຍສມອນແກ້ວ　　ບາງຄາວຄ້າງຢູ່ ທີ່ໃດນັ້ນ
ລຸງກໍອິດອ່ອນກັ້ນ　　ແດວນຮ້າຍນັ່ງເຊົາ ຫ້າວເອີນ
ບາກໍຟັງຄຳເຈົ້າ　　ຮັດສີລຸງຕ້ານກ່າວ ມານັ້ນ
ເຈົ້າກໍໃຫມະນັດກັ້ນ　　ອີດູແທ້ຊວາດປະມານ
ກໍຫານເຫຼືອແຮງເຈົ້າ　　ເດີນດົງການບາກ ເຮວນໍ
ຕັ້ງວ່າລຳບາກແທ້　　ບັງຮ້າຍກວ່າກູ ແທ້ນໍ
ເມື່ອນັ້ນສອງຈາຕ້ານ　　ນຳກັນຫຼາຍສິ່ງ
ລຸງຈິ່ງເອົາໝາກໄມ້　　ຕາງເຂົ້າສູ່ກິນ
(ນາ ໆ ແທ້　　ຜົລໝາກພາລາ
ສີດາສຸກ　　ກອກກຽງແກມກ້ຽງ)
ມີທັງພຸພາງສົ້ມ　　ຂນຸນບິນມີ້ມ່ວງ
ກັບທັງມັນເຜືອກບ້າງ　　ດູນຄ້ຳຟ່າໄພ
ລຸງກໍເອົາມາໃຫ້　　ບາຄາວສເວີຍສືບ
ບາຄ່ອຍຕ້ານ　　ດອນເຈົ້າຈິ່ງສເວີຍ
ລຸງຫາກເບົາຢູ່ຫ້ອງ　　ກາງປ່າໄພສົນ
ມີແຕ່ປູງຫົວມັນ　　ຊູ່ວັນຕາງເຂົ້າ
ແຕ່ນັ້ນທ້າວເລົ່າເອີ້ນ　　ເອົາພືຜີເມືອງ

ມາອາສົນ ທີຣັດສີສເວີຍສົ້ນ

ແຕ່ນັ້ນກິນກອງແກ້ວ ພີເມືອງມາຣອດ

ທ້າວກໍເອົາໝາກໄມ້ ມາແລ້ວສູ່ກິນ

ພໍປະມານແລ້ວ ສອງພຣະອົງກິນອີ່ມ

ກໍຈຶ່ງຫາຍໂສກຮ້ອນ ເຫັນເຈົ້າພຣະຍອດຄຸນ

ສອງກໍເຊົາຢູ່ຍັ້ງ ດອນຣັດສີ ຄືນນຶ່ງ

ພໍເມື່ອສຸຣິເຍດຂຶ້ນ ສອງເຈົ້າສັ່ງລາ

ທ້າວເລົ່າທວຍທິງມ້າ ມຸງຄຸນຕົວປະເສີດ

ແລ້ວຈຶ່ງກົ້ມຂາບໄຫວ້ ຣັດສີເຈົ້າເລົ່າຄະດີ

ຄ່ອຍຢູ່ດີເປືອງຣັດສີເຈົ້າ ມຫາຄຸນຕົນປະເສີດ ຂ້ອຍເອີຍ

ເຈົ້າຈົ່ງທົງສືບສ້າງ ສິນແກ້ວແຜ່ພາຍ ແດ່ຖ້ອນ

ແຕ່ນັ້ນຕາປະໂສເຈົ້າ ຕົນລຸງຂາບຕອບ

ຂໍໃຫ້ຫຼານປະກອບໄດ ໂດຍດ້ານດັ່ງຄະນົງ ແດ່ຖ້ອນ

ອັນນຶ່ງຂໍໃຫ້ ລຸລາບໄດ້ພຣະແມ່ນາເມືອງ ແດ່ຖ້ອນ

ຂໍໃຫ້ບຸນເຮືອງເຫລິງຄານ ຕ່າງແດນເຂົາງ້

ຄ້ອນວ່າສາມພຣະອົງຕ້ານ ບໍາກັບແລ້ວຢ່າ

ບາກໍກົກແຕ່ງເນື້ອ ບົວລະອ້ວນຢ່າງເຊິງ

ສອງກໍພາກັບຂ້າມ ໄພພະນອມຫຼາຍຍ່ານ

ພີກໍພາແຈ່ມເຈົ້າ ໄປໜ້າຄ່ງນຄາວ

ກໍຫາກບ່ອງ ໆ ຜ້າຍ ສອງອ່ອນເດີນດົງ

ກາຍພົງໄພ ໝື້ນດອຍເຂົາຂັ້ນ

ກາຍແດນຊັ້ນ　　ພຣະຣີສີຂ້າມລ່ວງ
ເດືອນບຶ່ງໄດ້　　ສອງທ້າວຄ່ອຍເດີນ
ກໍຈຶ່ງໄປເຖິງເຫົ້າ　　ຫ້ວຍສ່ອງໃສຂາວ
ສອງບາໄທ　　ລ່ຳດູພໍສະທ້ານ
(ຫຼິງດູສວາບ ໆ ນ້ຳ　　ນອງກະແສແສນຍ່ານ
ຟອງບວກຍູ້　　ຍິນສະອື້ນອ່ອນໃຈ)
ກໍຫາກມີແມ່ນ້ຳ　　ຊາຍເກືອນນອງໄຫຼ
ສອງບາໄທ　　ນັ່ງເຊົາຊີງຢ້ຽມ
ເຮົາຈັກພາກັນເວັ້ນ　　ທາງໃດດັ້ນດຸ່ງ ໄປນັ້ນ
ກໍບໍ່ມີທີ່ເວັ້ນ　　ທາງຂ້າມກໍ່ວຣອນ ພີ່ເອີຍ
ແຕ່ນັ້ນທ້າວກໍຄຶດຮ່ຳຮູ້　　ຍັງແຜ່ນພູສາ
ບາກໍບໍໄກວກວັດ-　　ແກວ່ງບບັງຜ້າ
ແຕ່ນັ້ນລົມປິວເປື້ອງ　　ເຖິງຊາຍກ້ານແກ່ນ
ເປັນຊ່ອງຊັ້ນ　　ສອງເຈົ້າໄຕ່ໄປ
ເລີຍເລົາພົ້ນ　　ພາກຊ່ອງຊາຍໄຫຼ
ສອງບາໄທ　　ດຸ່ງເດີນໄປໜ້າ
ບາກໍເດີນໄກແກ້ວ　　ຄະນຶງເຖິງພຣະແມ່
ທັງຄຶດເຖິງແມ່ລ້ຽງ　　ຫຼັງໜ້າເກົ່າກັນ
ໂອນໍແມ່ເອີຍລູກກໍເດີນໄກເຈົ້າ　　ຫຼາຍດອຍດົງດ່ານ ເສັ້ງແລ້ວ
ຂໍໃຫ້ຄຸນແມ່ລ້ຽງ　　ສອງເຈົ້າກໍ່ກວມ ແດ່ຖ້ອນ
(ເທືອນີ້ລູກດຸ່ງດັ້ນ　　ດົງປ່າໄພໜາ

ເພື່ອປະສົງມາດາ / ຜູ້ຫ່າງເຫັນໃກໜ້າ)
ບາກໍຫົງສິນແກ້ວ / ກອບໃຈດັ້ນດຸ່ງ
ອັນວ່າຈິດແກ່ນແກ້ວ / ກໍບັງຕັ້ງຕໍ່ການ
ສອງແຈ່ມເຈົ້າ / ດັ້ນດຸ່ງພຣະດີ ຣີ
ຟັງບິນປັກຂີຂັບ / ກ່ອນຮັງຮຽງຊ້ອນ
ຄອບ ໆ ຜ້າຍ / ເດີນກາຍເຫວຕາດ
ຟັງບິນບ້ຳທົ່ງທໍ້ / ໂດນກ້ອນລ່ວງລົງ
ສອງກໍພາກັນຂຶ້ນ / ເຂົາງອນເມືອງ່ອນ
ເຫັນໝູ່ຮອບຜອດຊ້າງ / ທະບານລ້າລ່ວງໂຂງ
ຫຼິງເຫັນບອດພຸ່ງພົ້ນ / ພວກໝູ່ບາງຂາວ
(ລຳສູງສວງ / ສ່ວງກັບແກນຟ້າ)
ຫຼິງເຫັນພວງພະການສ້ອຍ / ສອບວອບກ້ານກ່ອງ
ອັນວ່ານ້ອງແລະອ້າຍ / ຫອມເຮົ້າຮອດຫວງ
ສອງຫາກຫອມດອກໄມ້ / ກ້ານກ່າຍບາງການ
ມີທັງດຳດວນດິກ / ດອກຮັງຮົມເຮົ້າ
ຫຼິງເຫັນສະພັງດົ້ນ / ດວງດອກກາຂະບອມ ແລເປີ
ມີລະອອງໂຮຍຮົດ / ກິນຫອມມາເຕົ້າ
ສອງພຣະອົງເຈົ້າ / ປິດເອົາດົມກິນ
ຫອມດອກໄມ້ / ໃຈສລັງເມື່ອບນະໂນ
ອັນວ່າໄກສອນແກ້ວ / ນາຣີຫອມອ່ອນ
ຝູງໝູ່ເທພທ່ອນທ້າວ / ໃຈທ້າວຮ່ຳຫາ.

(ແຕ່ນັ້ນບາຄານນ້ອຍ ຊ້ອຍຊື່ນຊົມຫົວ
ທັງຜີເມືອງ ເບິງເທວະດາເຈົ້າ
ນາກໍຍັງຄະນຶງເຫົ້າ ມາດາສອງແມ່
ນັບແຕ່ໜີຈາກເຈົ້າ ດີຮ້າຍກໍບໍ່ເຫັນ
ເຈົ້າກໍຂລັງອິກແຄ້ນ ແຄວນໃຈມີມາກ
ຕັ້ງຫາກລຳບາກໂອ້ ໄປໜ້າບໍ່ໃຊ່ຫຼັງ
ກໍຫາກເປັນຫຍຸ້ງຫຍັ້ງ ສາລະວິນໃນທາດ
ພູອະນາດເຈົ້າ ໃຈຂ້ອງຂອດຂລັງ
ຈິດນຶ່ງຍັງບໍ່ໄລລືມແກ້ວ ມາດາພຣະແມ່ ອິນພຸ້ນ
ຜັດແຕ່ໜີຈາກເຈົ້າ ສາມເຂົ້າຂວບປີ ນີ້ແລ້ວ
ປານໃດເດຈິງຊິເຖິງຫົນຫ້ອງ ບັນທະພານອະນໍຣະໂດຍາທີບ ນັ້ນເດ
ອັນວ່າເມືອງນັກນັ້ນ ເນົາໃກ້ຮູ້ວ່າໄກ ພີເອີຍ
ແຕ່ນັ້ນຜີພີດ້ານ ຈາອ່ອນກຸມານ
(ສາຍໃຈເອີຍ ຢ່າວານຖາມອ້າຍ
ຈັກວ່າຍັງໄກໃກ້ ປານໃດຕາມຊ່າງ ມັນຖ້ອນ
ແມ່ນປູ່ກ້ຳຟາກຟ້າ ຣາເຈົ້າຈິ່ງໄປ)
ພີກໍບໍ່ຊາບຮູ້ ເມືອງໃຫຍ່ຂຸນມານ
ເອົາແຕ່ເທໂວສອນ ສັ່ງຣາຈຳໄວ້
ຢ່າໄດ້ຄະຄ່ຽນຍ້າຍ ໜີຈາກດາວພຣະກາຍ ວ່າອັນ
ຫາກຈັກເຫັນເມືອງມານ ດັ່ງໃຈຈິ່ງອ້າງ
ພໍວ່າສອງຈາຕ້ານ ດອນກັນແລ້ວຢ່າ

ສອງກໍດາແຕ່ງເນື້ອ ນິວລະອ້ອນກ່ອນໄປ
(ອັນວ່າສີໄວແກ້ວ ດັ່ງດຸ່ງລີລາ
ຜາບເຊີງລັດ ລ່ວງເຖີງແຖວໄມ້)
ແລໄປໜ້າ ຜາສູງເຂົາໃຫ່ງ
ສອງກໍຂ້າມຍ່ານໄມ້ ໄປໜ້າບໍ່ເຊົາ
(ຂວບເມື່ອວັນຮຸ່ງເຊົ້າ ເພື່ອຜ່ຜອບເດີນ
ກາຍພູຜາ ໜື່ນໝື່ນເຂົາຂັ້ນ -
ດື ອືນນັ້ນ ບູກະເສີ່ນແສນພາກ)
ພົ້ນຫີນນັ້ນ ເຫັນຫ້ວຍຮ່ອມຜາ
ຫີນນັ້ນເປັນເຂດຂັ້ນ ແດນຊື່ສາຣະວັນ
ເຂົາກໍຫຽວລະວັງແຂວງ ເຂດແດນຂວາງຂັ້ນ
ແມ່ນວ່າພຶງຄະນາເນື້ອ ຕົວໃດເດີນຮອດ
ມັນກໍຂົບຄາບຄ້ຽວ ກີນມ້ວຍມອດຊີວັງ ຫັ້ນແລ້ວ
ອັນວ່າຝູງນົກເນື້ອ ໃນປ່າເປັນສງັດ
ກໍບໍ່ມີຕົວໃດ ຮ່ຳໄຮເຮຮ້ອງ
ເພື່ອວ່າກົວເກງທ້າວ ຂຸນມານຕະເວນເຖື່ອນ
ຝູງໝູ່ແຮດແລະຊ້າງ ຄະນາເນື້ອທຸກມັນ ຫັ້ນແລ້ວ
(ແຕ່ນັ້ນເທພທ່ອນທ້າວ ທະຍານວີງເວຫາ
ເອົາກັບປືນ ຜ່ານມັນກົວປ້ານ)
ບັງທໍ່ບາຄານທ້າວ ທັງຜີສອງອ່ອນ
ບັກກໍເຕັ້ນໄຕ່ກ້ອນ ຜາລ້ານລ່ວງມາ

| | |
|---|---|
| (ເລີຍເລົ່າເຫັນແຈ່ມເຈົ້າ | ພີເສດສຸຣິຍົງ |
| ທັງພີເມືອງ | ອ່ອນສີສອງນ້ອຍ |
| ຂຸນນາງຮູ້ | ສອງພຣະອົງເຊງເດດ) |
| ມັນກໍກັບເພດຂຶ້ນ | ສເມີດ້ານດັ່ງພູ |
| ຫຼຽວເບິງປູລູໜ້າ | ສເມີກວຽນກົງແລ່ນ |
| ອັນວ່າສອງຝ່າຍແກ້ນ | ເປັນເປົ້າທໍ່ກວຍ |
| ຕາແດງເຂັ້ນ | ຕີແສງສຸຣິເບດ |
| ບານເຫຼືອກລ້າຍ | ແສງເຫຼື້ອມນາບເມືອງ |
| (ມັນກໍຂຶງຊຶງໜ້າ | ຈາອ່ອນທັງສອງ |
| ພາທີຖແລງ | ກ່າວຄຳເດັນກ້າ) |
| ດູຣາຊາຍຣາມນ້ອຍ | ທັງສອງລຸກປະເທດ ໃດນັ້ນ |
| ສັງວ່າເດີນດ່ານດ້າວ | ດົງໄມ້ທ່ຽວດາຍ ດັ່ງນີ້ |
| ໂທດທ່ານມາລ່ວງລ້ານ | ເຂົ້າເຂດດູແດນ ບົງແລ້ວ |
| ກູຈັກກິນໄດດັບ | ແທ່ງນຶ້ງໝົດສ້ຽງ |
| ແຕ່ນັ້ນພຣະບາດທ້າວ | ຂຶ້ນຕອບຄຳຊຽງ |
| ຊາດທີ່ຄວາມຕາຍແຂວນ | ຊູ່ຄົນຖຽນເນື້ອ |
| ກູນີ້ນາມກອນເຊື້ອ | ແນວອິນກາລະເກດ ຈິງແລ້ວ |
| ພໍ່ ທີ່ແພວແຜ່ນລ້ານ | ເດີນໄດ້ກໍ່ຈິງມາ ທ່ານເອີຍ |
| ຄ້ອນວ່າທ້າວກ່າວແລ້ວ | ມັນຖຽດຖຸໃຈ |
| ມັນກໍປີ ລີລຸກ | ແລ່ນມານີ້ຊ້າ |
| ນີ້ບາຍຄ້ອນ | ຕະບອງສີ ຕີຟາດ ມານັ້ນ |

ທ້າວປ່າຍເປື້ອງ　　ພຣະຂັນຄ້ຳຊອບຊຽງ
ດູຮາຍັກຖ່ອຍຮ້າຍ　　ສາໂຫດປາປັງ
ກູບໍ່ມາຮາວີ　　ຂົມສູສະຫາວຫ້າ
ຖ້າວ່າມືຍອມແພ້　　ຊີວາມຶງວາຍຂາດ ຈິງແລ້ວ
ໃຜຜູ້ຕ້ອງຕໍ່ໜ້າ　　ເບັງລະມ້ວຍມອດຊີວັງ ບໍ່ປ່າແລ້ວ
ແຕ່ນັ້ນຍັກຂນາດກ້າ　　ຕ້ານກ່າວເຕັມຄວາມ
ເອົາແຕ່ລວງຊາຍໃຜ　　ຊີວດີລາງແລ້ວ
ມັນກໍສວາຍເອົາກ້ອນ　　ຜາຫຼວງທວຍທອດ
ໂຊມໃຊ່ເຖົາ　　ເຖິງທ້າວບໍ່ນານ
ແຕ່ນັ້ນພູວະນາດທ້າວ　　ວາງວິງພຣະກາໂຍ
ບາກໍປຸນປຶ້ນຊັດ　　ຖືກມັນເມົາບ້າ
ມັນກໍມົວເມົາລົ້ມ　　ກຸມສອນແສນຕ່າວ
ເລືອດລົ່ງລົ້ນ　　ທັງຄ້າຍດາດແດງ
ພູວະນາດທ້າວ　　ມີອາດກິວເກງ ສບ່ອນນັ້ນ
ພູທອນຖອນ　　ແບ່ນທະນູປຸນເປື້ອງ
ຫັກຫັກຄ້ານ　　ຄາງວາຍທີໂຫດ
ມັນເລົ້າອ້າປາກໄວ້　　ໄຟໃໝ້ລວາບລົນ
ເລືອດລົ່ງປ້ານ　　ຜັນມ່ານໄຟແດງ
ບາກໍທິງພຣະຂັນແສງ　　ປ່າຍຄໍສະເດັນກິ້ງ
ເລີຍເລົ້າດັບພຣະຂັນສ້ຽງ　　ເສັງຊີວັງມຸດມອດ ຈິງແລ້ວ
ອັນວ່າຄີງໃຫ່ງດ້ານ　　ກອງຂຶ້ນທໍ່ພູ ເຈົ້າເອີຍ

| | |
|---|---|
| ແຕ່ນັ້ນນາຄານທ້າວ | ທັງສອງສະເດັດລ່ອງ ໄປແລ້ວ |
| ທ້າວບໍ່ຢັ້ງ | ໄປໜ້າດ່ງນຄາວ |
| ມືນານເທົ້າ | ເຖິງເມືອງບັກໃຫ່ງ |
| ສອງກໍເຂົ້າແທບໃກ້ | ດົນດ້າຍບອກວຽງ ຫັ້ນແລ້ວ |
| ກໍຫາກມານ ໆ ເຫຼື້ອມ | ວຽງກໍ່ຫົນແລງ |
| ອັນວ່າກຳແພງໃນ | ແດ່ນະນີໄຊແກ້ວ |
| ທື ໆດູໂຣງ ໆ ເຫຼື້ອມ | ຫໍປາງຜາສາດ |
| ບອດຊໍ່ຟ້າ | ນະນີແກ້ວກ່ອນຄຳ |
| ກໍຫາກດ່ຳແດງເຫຼື້ອມ | ນະນີ ໄຊແກ້ວກູ່ |
| ວັນວູ່ຕ້ອງ | ແສງເຫຼື້ອມເຮື່ອສີ |
| ສອງແຈ່ມເຈົ້າ | ຫຼື ໆລ່ຳປາງທອງ |
| ດັ້ງວ່າຮອງ ໆ ໃສ | ສ່ອງປາວປາງເສື້ອ |
| ຫຼື ໆດູໂຣງ ໆ ເຫຼື້ອມ | ຫໍປາງສິບສອງບອດ |
| ກໍຫາກງາມບຶງລ້ຳ | ຫຼາຍຖ້ານຖືຖັນ |
| ອັນນີ້ນັກເຮດຫ້ອງ | ມັນຊື່ນານໃດ ນັ້ນເດ |
| ລືວ່ານັ້ນທະພານຂວາງ | ຊື່ລືນານເຊືອ |
| ເຮົາຈົ່ງພາກັນເຂົ້າ | ຖາມດູນັກໜຸ່ມ |
| ດັ່ງວ່າຮູ້ຂ່າວແລ້ວ | ເຮົາເຈົ້າຄ່ອຍໄປ ພີ່ເອີຍ |
| ແຕ່ນັ້ນສອງແຈ່ມເຈົ້າ | ເຫັນແມ່ຂືນີ |
| ມັນກໍມາເສັງສອນ | ປູ່ດີນວຽງແກ້ວ |
| ສອງຈິ່ງປີປາຍຕ້ານ | ຖາມມັນຫາເຫດ |

ອັນນີ້ບັດເຣດຫ້ອງ ບານຊັ້ນຊີລີ ບັກເອີຍ
ແຕ່ນັ້ນຂີ ນີປ້ຽມ ເຫັນອ່ອນສອງພຣະອົງ
ມັນກໍວາງສຽມປະ ແລ່ນຫນີ ມີຕ້ານ
ມັນກໍຖຸມຄາມເຂົ້າ ໄປໃນວຽງໃຫ່ງ
ມັນກໍຂຶ້ນຮອດຫ້ອງ ເຮືອນແລ້ວເລົ້າຜົວ
ຂ້ອຍກໍໄປເສັງຫ້ງາ ເຫັນຄົນຫຼາຍຄວ່າ ນາບັ້ນ
ດຽວນີ້ຍັງຢູ່ຄຸ້ມ ຕີນຕ້າຍນອກວຽງ ຫັ້ນແລ້ວ
ຢ່າໄດ້ຊ້າ ຫາປໍໄປຜູກ ເອົາຖ້ອນ
ຕັ້ງແມ່ນຂອງແຊບຊ້ອຍ ແກງສົ້ມໃສ່ຊາຍ ພີເອີຍ
ແຕ່ນັ້ນຜົວມັນໄດ້ ຍິນຄຳເມັຽບອກ
ມັນກໍຊົມຊື່ນແທ້ ຈາຕ້ານຕໍ່ເມັຽ
ມັນກໍດີໃຈແທ້ ຫົວຊົມຫາເຊືອກ
ແລ້ວເລົ້າຕ້ານ ນາງນ້ອງຢ່າປາກແຮງ
ຄັນວ່າແຊວ ໆ ເວົ້າ ຫຼາຍຄົນຊິຮູ້ເນື້ອ
ມັນຊິບໍ່ພໍອ່ອນປົ້ງ ແກງສົ້ມໃສ່ເກືອ
ແຕ່ນັ້ນສອງກໍຊັບຊົມເວົ້າ ໄຂເງື່ອນຄຳລະຫັດ
ທໍ່ແຕ່ສອງຜົວເມັຽ ອອກໄປທັງຟ້າວ
ເລີຍເລົ້າຖອງເຖິງເທົ້າ ສອງພຣະອົງດົນປະເສີດ
ຍັກບໍ່ຊ້າ ຖືບ້ວງແລ່ນເຖິງ
ວ່າຈັກກຸມເອົາທ້າວ ທັງສອງດ້ວຍງ່າຍ
ທ້າວບໍ່ຊ້າ ພຣະຂັນເປື້ອງປ່າຍເສັ້ງ

| | |
|---|---|
| ຫົວສະເດບກົ້ງ | ປົວໄປປານບຸ່ນ |
| ບັກລ່າວລົ້ມ | ສະແດງຂວ້ຳຕ່າວຫງາຍ |
| ແຕ່ນັ້ນເມິງລ່ຳຢ່ຽມ | ຜິວທ່າວທະລາຍລົງ |
| ມັນກໍເຣຣິບຫັກ | ຣ່ຳໄຣຫົວໄຫ |
| ມັນກໍຄືນເມືອຫ້ອງ | ຫາພົບພວກໝູ່ |
| ມັນກໍໄປກ່າວເອີ້ນ | ຊຸມເຊື້ອພວກມັນ |
| ເຂົາກໍແຊວ ໆ ພ້ອມ | ຊຸມນາງຍັກໜຸ່ມ |
| ເຂົາເຄ່ງຂ້ຽວ | ຂບັນຟ້າວແຕ່ງຕົວ |
| ແລ້ວເລົາແຊວ ໆ ພ້ອມ | ພາກັນຈັບຫອກ |
| ເຂົາວ່າຄົນລ່ວງດັ້ນ | ມາໜີຂຶ້ນເຫງ ວ່າອັນ |
| ບາງພ່ອງຖອນເອົາໄມ້ | ລຳຍາວເປັນທ່ອນ |
| ກວັດແກວ່ງຟ້ອນ | ທະຍານເຂົ້າຣໍ່ບາ ຫັ້ນແລ້ວ |
| ເຂົາກໍປະສົງການສູ້ | ສົມຖາມຖາວກ່ອນ |
| ສອງທ່ອນທ້າວ | ບໍ່ມີຢ້ານຢ່ອນກົວ |
| ແຕ່ນັ້ນພູທອນທ້າວ | ຕົນອາດຜີເມືອງ |
| ນ້ອງຢ່າເຄືອງແຄນສັງ | ແຕ່ການສເນີ ນີ້ |
| ພີ່ຂໍອາສາຄ້ຳ | ລອງແຮງດູກ່ອນ ນ້ອງເອີຍ |
| ພໍໃຫ້ຫາຍບ່ວງເບື້ອ | ຫຼັງຂ້ອຍປວດແອວ |
| ນ້ອງຈົງນອນສະແດງສົ້ງ | ຫຼົງນາງກະທຳເດດ |
| ມັນຈັກວີເສດແທ້ | ດີຮ້າຍສົງໃດ ນ້ອງເອີຍ |
| ຄ້ອມກ່າວແລ້ວ | ຜົນນາງທົງເຄືອງ |

ທ້າວກໍບາຍພຣະຂັນແສງ　　ແຫ່ງພຣະອິນເອົາໃຫ້
ທັງເລົ້າຖືດາວເປື໋ອງ　　ພຣະຂັນເຊີບໄຊດ່
ບັກຫໍ່ຫຸ້ນ　　ກຸມທ້າວໜື່ນຕິວ
ທ້າວແກວ່ງເປື໋ອງ　　ທະຣິງບາດວາງກິ຺ດ[໑]
ຂຸນນາງນຸດ　　ນອດໄປນົວລົ໋ນ
ເຂົາກໍຫິນ ໆ ພ້ອນ　　ກັບຕາຍເຕັ້ນແຜ່ນ
ບາງພ່ອງຣ່ຳເລືອດບ້ອຍ　　ເຊລົ໋ມລາກໄປ
ອັນແຕ່ ຜີເມືອງຂ້າ　　ຂຸນນາງນັບໂກດ
ຕາຍດ້ວຍລ້ານ　　ຜີຂ້າໝູ່ນາງ
ເຂົາກໍກົວເກງເຈົ໋າ　　ຜີເມືອງເລີຍຜ່າຍ ໄປແລ້ວ
ເຂົ໋າສູ່ຫ້ອງ　　ເມືອງກວ້າງແຫ່ງເຂົາ
ເຂົາກໍເມືອຫູບໄຫວ້　　ສາຣະວັນກອບກ່າວ
ຖວາຍຂ່າວໃຫ້　　ພຣະເມືອງຮູ້ຮ່າງການ
ບັດນີ໋ຍັງມີຊາວມະນຸດເຊື໋ອ　　ສອງຄົນດົ້ນຮອດ ເຮົາພີ໋
ເຂົາກໍ ມີເດດກ້າ　　ເຫຼືອລົ໋ນລົ່ນຄົນ ພຣະເອີຍ
ມັນກໍມາເປ່ນ້າງ　　ກ້ຳປ່າຍອຸດອນ ນັ້ນແລ້ວ
ນັບແຕ່ຂຸນນາງຕາຍ　　ຄອບເຂົາພໍລ້ານ
ແຕ່ນັ້ນສາຣະວັນໄດ້　　ບິນຄຳເຂົາກ່າວ ມານັ້ນ
ເຂົາກໍເຕີະປາກງ້າ　　ຄືງກ້າກ່າວຫານ
ມັນກໍພີງ ໆ ຕ້ານ　　ຄືງແດງໂດຍເລືອດ

---

(໑) ກິດ ຄວນເປັນ ກິ຺ດ ຊຶ່ງແປວ່າວັດຖຸປາຍແຫຼມ ເປັນພາສາປາລີ

ຖຽງແກ່ເຈົ້າ　　　　ສອງທ້າວຂົນເຫງ
ສັງເລົ່ານາເພນ້າງ　　　　ເມືອງກູຂ້ຽວຂຸ່ນ ດັ່ງນີ້
ກູບໍ່ໄດ້ໄປບາດຣີ້　　　　ເມືອງບ້ານທ່ານຜູ້ໃດ ດອກນາ
ເຂົານີ້ພິລຸດລ້ຳ　　　　ລ່ວງເຂດແດນກູ ຊວາດນີ້
ເຂົາຈັກດີປານໃດ　　　　ລູກອິນຄຳແລ້ວ
ລືຈັກມາທົບສູ້　　　　ຕະບອງສືຂວັນເດດ ກູນີ້
ກູຈັກຕີປິ່ນປີ້　　　　ສເນີແປ້ງປິ່ນປູນ ນັ້ນແລ້ວ
ຄ້ອນວ່າມັນກ່າວແລ້ວ　　　　ຕະບອງຕ່ອຍຕີເຕີນ
ເອີ້ນເອົາຝູງລີພົນ　　　　ລູກມືຄົນກ້າ
ຝູງບັກຄາແຮນຄ້າງ　　　　ກາງດົງແຖວເຖື່ອນ
ເຂົາກໍຮ້ອນເຮ່ງຂ້ຽວ　　　　ຂຽວລ້ານລ່ວງມາ
ເຂົາກໍແຊວ ໆ ເຕົ້າ　　　　ລະວັງອີງຊ້າງເຖືອງ
ອັນວ່າມ້ານິງປ້ອງ　　　　ພໍ່ຕີ້ຕືອອັກໃຂ
ສ່ວນວ່າພົນຫານໄດ້　　　　ອັກໃຂປາຍລ້ານນຶ່ງ
ຄົນອັ່ງປ້ານ　　　　ເຫຼືອລົ້ນອະເນກນອງ
ນີ້ຣວາດຫັ້ນ　　　　ກຳກິ່ງທະນູສິນ
ທຳອິດທີເປັນ-　　　　ຊູ່ເຊີງພໍ່ປ້ານ
(ເຂົາກໍປະຕິຫານແທ້　　　　ພັນຫົວຕິດຕໍ່
ແຂນປົ່ງຊ້ອງ　　　　ໂດຍຮ້ອຍຮວາດທະນູ)
ບາງພ່ອງເປັນຫົວຊ້າງ　　　　ຕົວເລົ່າເປັນຄົນ
(ໃຊ້ງໃນງຕາ　　　　ເຫຼືອກແດງພໍ່ປ້ານ

ກີ ຊີແຂ້ວ ກີຈາຈິກຈອບ
ກິງໃຫ່ຽພົບ ສູງພ້ຽງຊິວບາງ)
ລາງພ່ອງຫົວເປັນແຂ້ ຕົວເລົາເປັນປາ
ຕາເປັນໄຟ ລຸກສະລົບພໍປ້ານ
ແຕ່ນັ້ນບາຄານຫ້າວ ທັງຜີຫຼີ ງລ່ຳ
ເທືອນີ້ເສິກໃຫ່ຽລ້າ ສອງສູ້ຈິງຊິໄຫວ ນ້ອງເອີຍ
ແຕ່ນັ້ນບາຕອບຕ້ານ ຂານພີປ່າກົວ
ຊາດທີເປັນຊາຍເຊງ ທ່ອນຊີບອມບັງຮ້າຍ
ຜໍ່ງູເຄງ ໆ ກ້ອງ ກວງບິນບົດມືດ ມານັ້ນ
ເປັນດັ່ງຝົນຫ່າແກ້ວ ລົງລ້າງແຜ່ນດິນ
ຫຼີ ງງູເບື້ອງ ທາງດິນບົດມືດ ມາແລ້ວ
ກໍຫາກສົບສອດແສ້ວ ສເນີ ນີ້ເນົາບິນ ນັ້ນແລ້ວ
ນາງພ່ອງທຳອິດທີໃຫ້ ເປັນໄຟລາມເລົາ
ແປວເປ່ງເຫົ້າ ທະອິງຟ້າຄືນເຄງ
ຜໍ່ງູໄມ້ໃຫ່ຽລົ້ນ ເດັ່ງລະດາດຫັກມາ ພຸ້ນເປີ
ດີແກ່ຜີຖອນຖົກ ຖູ່ມືນາຕ້ອງ
(ຫຼາຍຖັນຖ້ອງ ນານຫຼວງເດັ່ງລະດາດ
ຝູງໝູ່ຣຸກຂະຊາດໄມ້ ດົງກວ້າງເປົາແປນ)
ແຕ່ນັ້ນສອງໜໍ່ນ້ອຍ ກີດຖຽດຖຸງໃຈ
ກູບໍ່ມາຮາວີ ຂົນເຂົາຂືນຮ້າຍ
ເຂົາຈັກມ້ວຍມອດສ້ຽງ ເສັ່ງຊີບຊີວັງວິດ ແລເດ

ຄັນໄດ້ລົງນີ້ແນວ    ບໍ່ຫ່າງໜູຊິໜີພົ້ນ
ຫົວກໍກອບໃຈຫ້າມ    ຝູງມານມາບໂຫດ
ເປັນດັ່ງໝາເຫົ່າຫ້ອມ    ຫອນບ້າບໍ່ຟັງ ຫັ້ນແລ້ວ
ເມື່ອນັ້ນຫົວຕອບຕ້ານ    ບົນບອກຄຳໜັກ
ສູຈັກຄືນຄອງອົບ    ສ່ວນຊິນຳຣະບັງມັ້ງບ
ສູນັ້ນເໝືອນດັ່ງໜູຊືງນ້ອຍ    ຊິມາເລັ້ງຄົນດາບ ກູລື ?
ສູຫາກອາຍູສັ້ນ    ສເມີ ບໍ່ໃຊ່ຂາວ ນັ້ນແລ້ວ
ຫຼອນທີ່ເມົາມົວບ້າ    ກັດກັບຕາຍຈຸ່ມ
ອັນວ່າຊີວິດສັ້ນ    ສູນັ້ນດັ່ງດຽວ ແທ້ແລ້ວ
ຄ້ອມວ່າບາຖແລງແລ້ວ    ຫວຍທະນູປືນພໍ່
ຜີກໍກຳດາບກ້າ    ກົດແກ້ວແອບອີງ
ແຕ່ນັ້ນພົງກະສັດເຊື້ອ    ທ້າວຊື່ສາຣະວັນ
ມັນກໍຜັນຜຍອງມາ    ຮໍ່ບາ.ຊໃກ້
ມັນຈຶງໄຂຄຳຕ້ານ    ຖາມບາສອງອ່ອນ
ສູນີ້ແມ່ນທ່ອນທ້າວ    ແນວເຊື້ອຊື່ໃດ ນັ້ນເດ ?
ສູຫາກມາຜິດແທ້    ເດີນດົງຫາເຮ່ວ ສແລ້ວ
ສູເລົາບັງອາດກ້າ    ນາມ້າງໝູ່ກູ ດັ່ງນີ້
ສູນີ້ປົດຕຸຄາດຮ້າຍ    ຊິຕາຍທ່ຽງເຖິງຄອງ
ສູຈົ່ງຄອຍລະວັງຕົວ    ຕໍ່ຕະບອງກູທ້າວ
ແຕ່ນັ້ນເຈົ້າຕອບຖ້ອຍ    ກູຊື່ແນວອິນ
ໃຜຜູ້ມາພານຕາວ    ສ່ວນຂວັນເຂີນເນື້ອ

ດູນີ້ນີໃຊ່ມາເຜນ້າງ ນຶງສູນ້າງມຸ່ນ ຈິງບາ
ສູຫາກມາຫໍ່ຫຸ້ມ ກູທ້າວຈຶງກະທຳ ບັກເອີຍ
ສູຢ່າມາຖືຖ້າບ ຫົວພຽງພົມມະໂລກ ຈຶງຖ້ອນ
ເໜືອບດັ້ງບຸງຮ່ານຮົ້ນ ກູທ້າວທ່ອນກົວ ສບ່ອຍບັ້ນ
ແຕ່ບັ້ນສາຣະວັນໄດ້ ຍິນຄຳຄຸນຖຽດ
ມັນກໍເຕີະປາກະງ້າ ຖືຟ້າຜ່າຜລຽງ
ມັນຈຶງກວັດແກວ່ງເປື້ອງ ຕະບອງຮຽກພົບມາ
ແລ້ວຈຶງບໍພົບຫຼວງ ລ່ວງຊູຊົບທ້າວ
ພູວະບາດເຈົ້າ ທະຣົງດາບໂກວກວັດ
ເລີຍເລົ່າເປັນຄົນເພັດ ໜື່ນດວງກາງກັ້ງ
ພໍເຫັນນາງມາລ້ອມ ລະວັງດິນດາແຕກ
ພູວະບາດບ້າວ ສອບແກ້ວກົງບົງ
ສຽງແຜດພ້ຽງ ຟ້າລັ່ນລົງເຫງ
ນາງຕາຍເຕງ ແຜ່ນດິນດາຂວ້ຳ
ບັກເລົ່າທົງຕົບຕັ້ງ ຄືນມາສັບເກົ່າ
ນາງນອດສິ້ນ ຕາຍແລ້ວເລົ່າຄືນ
ກໍຫາກຫຼາຍຕົວຕົ້ ຮ້ອຍແປດແສນອັກໂຂ
ຜີກໍຫວຍທົງກົຼ ດ ຜານນາງທັງພົ້ນ
ອັນວ່າທ້າວຜານນ້າງ ນາງໝູ່ເວຫາ
ບາຄານເຕີນ ພົພຣະອວນອົງອ້າຍ
ເຈົ້າຈົ່ງແຂງຂບັນປ້ານ ທາງດິນເດີພີ

ອັນວ່າທາງຝ່າຍຟ້າ　　ວາງນ້ອງໜ່ຽວປອງ
ສອງພຣະອົງນ້າງ　　ນາງຫຼວງທຳເດ
ຄວັນໄງ່ກຸ້ມ　　ຖຸງຟ້າມືດມົວ
ຫຼົງດູຂຸນນາງລົ້ມ　　ນອງຕາຍເດັງເລືອດ
ຫຼາຍຕົວດີ້　　ຕາຍຂວ້າໄຂວ່ຂື້ນ
ຟັງດູຄື້ນ ໆ ກ້ອງ　　ນອງເລືອດຫຼານໄຫຼ
ເປັນແປວລຸກ　　ດາດແດງເຕັມພື້ນ
ແຕ່ນັ້ນພູຫອນຫ້າວ　　ພູສາກວັດແກວ່ງ
ເປັນແມ່ນ້ຳຖຸ່ມຖ້ວມ　　ໄຟມ້ອຍມອດຫາຍ
ແຕ່ນັ້ນພິນແຜນເບື້ອງ　　ສາຣະວັນເບົາບ່າ ເສັ່ງແລ້ວ
ກໍຫາກເສັ່ງໄຜ່ນ້ອຍ　　ຕາຍຂວ້ຳນາກຫຼາຍ
ສາຣະວັນປ້ຽນ　　ເຫັນພິນຕາຍຈຸ່ມ
ເປັນດັ່ງຄົນລ່າວປ້ຳ　　ພັນໄມ້ກິ້ງລົງ ຫັ້ນແລ້ວ
ຍາມນັ້ນສາຣະວັນຫ້າວ　　ຣວາຍມົນໂອມເປົາ
ເອົາໄຜ່ນ້ອຍ　　ຄືນສ້ຽງບໍ່ຫຼໍ
ແຕ່ນັ້ນບາຄານຫ້າວ　　ເຫັນນາງເບືອກິ່ງ
ຂຳເຂືອກຂື້ນ　　ສເມີພ້ຽງດັ່ງຫຼັງ
ຫ້າວເລົ້າຕ້ານ　　ຖແລງຕໍ່ຜີເມືອງ
ກໍຫາກເປືອງແຮງເສັ່ງ　　ເມື່ອຍແຄວນຕາຍດຸ້
ນັບແຕ່ເຮົາເຫນ້າງ　　ຂຸນນາງສາມເລົາ ເລີງແລ້ວ
ອັນວ່າສອນສອດນ້າງ　　ພຣະຂັນຄ້ຳເມື່ອຍມື ພີເອີຍ

ຄວນທີ່ເຮົາເອົາຜ້າ　　ກາສາກວັດແກວ່ງ ຈິງເຖິ້ນ
ນາງນອດສົ້ນ　　ຄາວນີ້ບໍ່ຄືນ ແຫ້ແລ້ວ
ຄ້ອນວ່າສອງຈາແລ້ວ　　ເຊົາແຮງຄາວນີ້ງ
ທັງເລົ້າວາງດາບໄວ້　　ສອງສົ້ງເບິ່ງນາງ
ແຕ່ນັ້ນບັກເຮ່ງຮ້ອນ　　ເທາະວິງເວຫາ
ເອົາກົນອງກັນມາ　　ຫອບດອຍຄົນກ້ອນ
ກໍຫາກສິບທະອັງລົ້ນ　　ຄືນມາໄຊຮ່ໍ
ຖືໜ່ວຍກ້ອນ　　ທີບລ້ານຄູ່ມື
ເອົາກໍວາງວິງຖົ້ມ　　ລົງແຕ່ເວຫາ
ທົ່ມ ໆ ກວັດ-　　ແກວ່ງລົງໂດຍລ້ານ
ແຕ່ນັ້ນພູບານເຈົ້າ　　ທັງຜີຫຼົ້ງລ່ໍາ
ເຈົ້າກໍເຫັນໜ່ວຍກ້ອນ　　ກະຈາຍຟົ້ງກິ່ງລົງ
ພູໄຊທ້າວ　　ກວັດແກວ່ງພູສາ
ເປັນລົມເທັງ　　ຫອບດອຍກະຈວນຟົ້ງ
ເລີຍເລົ້າເປັນຜົງຜຸ້ງ　　ຫຼືອອງນ້ຳງມຸ່ນ
ເລີຍເລົ້າຄືນຖືກຕ້ອງ　　ນາງນ້ອຍຄືດລະອາ
ບັງແຕ່ສາຣະວັນທ້າວ　　ຊຸບນາງບາຍໃຫ່ງ
ນັບເລົ້າປຸ້ນ　　ພົນລົ້ມໄຂວ່ຂືນ
ນັບຟັ້ງຟ້າວ　　ຮວາຍເດດມົນປຸກ
(ອາຄົມດອມ　　ເວຫນາພົນລ້ານ)
ນັບຫາກຮວາຍມົນໃຫ້　　ແສນທີ່ຮ້ອຍເລົ້າ ກໍດາຍແລ້ວ

ກໍບໍ່ຂຳເຂືອກຂຶ້ນ ໂດຍດ້ານດັ່ງຫຼັງ
ມັນເຮ່ງຮ້ອນ ທະຍານວິ່ງດິນດຽວ
ທຳຕົວສູງ ທີ່ພູຄືນສູ້
ແຕ່ນັ້ນຍັກເຮ່ງຮ້ອນ ກະທຳເດດເຕຊາ
ຕົວດຽວບຸ ອອກມາໂດຍລ້ານ
ກໍຫາກສິນ ໆ ແສ້ວ ມືມັນມີຄູ່
ຖືໝູ່ໄມ້ ທະນູໜ້າກົ່ງກາງ
ແຕ່ນັ້ນບາຄານທ້າວ ທັງຜີຫຼີງລ່ຳ
ເທື່ອນີ້ເສິກໃຫ່ຍແທ້ ພຣະອົງສູ້ຈິ່ງຊິຄວນ ນ້ອງເອີຍ
ແຕ່ນັ້ນທ້າວຕອບຕ້ານ ຈາຕໍ່ຜີເມືອງ
(ໂຂວາຈາ ຕໍ່ຕົນຜີອ້າຍ)
ຄວນທີ່ກອຍໃຈສູ້ ໝົດແຮງສຸດເດດ ກ່ອນຖ້ອນ
ຄັນວ່າອິດອ່ອນແລ້ວ ເຮົາຖື້ມຖອດແຫວນ ພີ່ເອີຍ
ຄ້ອນຄ່ະສອງຄແລງແລ້ວ ນາງນຶດມົວມາ
ສອງບາຄານ ບໍ່ຖອຍຖົມຂ້າ
ອັນວ່າສອງແຈ່ມເຈົ້າ ມ້າງມຸ່ນທະລາຍຜົງ
ທົວນາງຕົກ ກື້ງລິງໂດຍລ້ານ
ຍັງເລົ່າສິນ ໆ ແສ້ວ ຊອນທົວບຸອອກ ນານັ້ນ
ຍັກເຮ່ງຮ້ອນ ໂກວແກວ່ງຕະບອງສີ
ທຳເຕໂຊ ຂຶ້ນບາບຸນນ້ອຍ
ອັນວ່າສອງອ່ອນນ້ອຍ ທະຍານວິ່ງວຽນຕັດ

| | |
|---|---|
| ບາຄານຫຼີບ | ຫຼີກນານໂກວເປື້ອງ |
| ບາຄານຫ້າວ | ຫັງນີຕັດຂາດ |
| ຕາຍດ້ວຍລ້ານ | ກໍບັງຊ້ອງປິ່ງມາ |
| ແຕ່ນັ້ນບາຄານຫ້າວ | ຫັງນີອຶດອ່ອນ |
| ຮ້ອນເຮ່ງຂ້ຽວ | ໃດບ້ອນອານຄີງ |
| ແຕ່ນັ້ນບັກກໍກຸມຕີເຈົ້າ | ແສນທີຮ້ອນເລົາ |
| ພັນຕໍ່ດ້ານ | ສອງເຈົ້າປິ່ນເປັງ |
| ມັນຫາກລືກູແລ້ວ | ສາຣະວັນເຊັງເດດ |
| ຜັດແຕ່ໄດ້ລຸ່ມຟ້າ | ລືລ້າແຕ່ກູ ນີ້ແລ້ວ |
| ມັນກ່າວແລ້ວ | ກວັດແກວ່ງຕະບອງສີ |
| ໄວພໍປານລົມຕີ | ຍີບຍາມດຽວນັ້ນ |
| ເມື່ອນັ້ນບາຄານຫ້າວ | ບໍ່ມີຖອຍຖິມຜ່າ |
| ຫ້າວປ່ອຍນ້າງ | ວາງແກ້ວລູກສອນ |
| ກໍຫາກຄື້ນ ໆ ກ້ອງ | ຟ້າເຫງົາລະງົມຝົນ |
| ນາງຫຼວງຫຼາຍ | ແກວ່ງຕະບອງຕັນຕ້ອນ |
| ອັນວ່າສອນໃສ່ນ້າງ | ຕະບອງຂວັນຄົມຜ່າ |
| ເລີຍແຕກມ້າງ | ເຊລົ້ມຫຼູດມື |
| ຫ້າວປ່ອຍຊ້ຳ | ວາງວີງສອງທີ |
| ເປັນພຸຍພົງ | ຜ່ານນານເຊລົ້ມ |
| ອັນວ່າສອນໃສ່ເຂົ້າ | ຄຶງນານເປັນປ່ອງ |
| ຄືດັ່ງເຂີງຮ່ອນເຂົ້າ | ບໍ່ມີເວັ້ນວ່າງຂົບ |

| | |
|---|---|
| ແຕ່ນັ້ນສາຣະວັນຮ້ອນ | ຮວາຍມົນອົນອ່ານ |
| ຕົດຕໍ່ແລ້ວ | ຄືນເຂົ້າຮໍ່ບາ |
| ແຕ່ນັ້ນພົງກະສັດເຊື້ອ | ຜີເມືອງເດີນອ່ອນ |
| ເຊີນທ່ອນທ້າວ | ວາງຖົ້ມຖອດແຫວນ ພີຖ້ອນ |
| ແຕ່ນັ້ນທ້າວຮ່ຳຮູ້ | ວາງອົງໂກວແຫວນ |
| ເດໂຊຕົດ | ຖືກນາງເມົາບ້າ |
| ແຫວນຕຳຕ້ອງ | ຫົວນາງຕິດຢູ່ |
| ແສນແສນຮ້ອນ | ເມົາໃໝ້ຈູດລົນ |
| ສົນລະວົນຮ້ອນ | ແສນແປວເມົາແຜ່ນ |
| ນາງເດືອດແຄ້ນ | ເມົາບ້າປ່ວງໄປ |
| ມັນຈຶ່ງຫັກເອົາໄມ້ | ລຳຍາງຕີຟາດ |
| ໄຟກໍຮ້ອນເຮ່ງຂ້ຽວ | ແປວຮ້າຍບໍ່ຫາຍ |
| ມັນກໍຄຶດສລາດຮູ້ | ລົງສູ່ນະທີຫຼວງ |
| ພາໄຟຫຼົບ | ມຸດລົງໃນນ້ຳ |
| ເລີຍເລົ້າພຸດຂຶ້ນໄດ້ | ຮ້ອນເຮ່ງຍັງເມົາ |
| ມັນສະເຈົາໃຈຈິດ | ເວທນານານມື້ |
| (ອິນທະກາມເອົ້າ | ໄຟເມົາໃນທາດ |
| ໃຈຈັກຂາດທ່ຽງແທ້ | ປົວໄດ້ບໍ່ຫາຍ |
| ຕັ້ງເຮ່ງຮ້າຍ | ຮ້ອນເຮ່ງໄຟກັນ) |
| ມັນກໍຄວາມືຈັບ | ຈູດມືເມົາຊ້ຳ |
| ມັນກໍທຳຣິດທີໃຫ້ | ເປັນແຜ່ນທໍຣະນີ |

ເປັນຊາຍຂາວ ຈຸ່ມເຈືອຍັງນ້ຳ
ແຕ່ນັ້ນເຕໄຊແກ້ວ ທັ້ນນະໂຮງລູກປະເສີດ
ໄຟແຜ່ນພື້ນ ເຜົາຜັ້ງນມຸ່ນທະລາຍ
ແຕ່ນັ້ນພີມານຫ້າວ ສາຣະວັນໃຈຊີຂາດ ຕາຍແລ້ວ
ມັນກໍພູດລຸກຂຶ້ນ ເຊລົ້ມທ່າວຫງາຍ
ມັນກໍເຫາະຫອບເຕັ້ນ ໝົດເດດທຳຣິດ
ມັນກໍໂຮຍແຮງອິດ ອ່ອນໄປດາຊີລົ້ມ
ແຕ່ນັ້ນກະສັດຕາແກ້ວ ທັງສອງຫຼົງລ່ຳ
ເຈົ້າກໍເວົ້າຕໍ່ອ້າຍ ຫົວລ້ຫຼໍ່ຂວັນ ຫັ້ນແລ້ວ
ແຕ່ນັ້ນສາຣະວັນຫ້າວ ຫົນຫວຍຮ້ອນເຮ່ງ
ມັນກໍອົດບໍ່ໄດ້ ປະນົມນົ້ວແຕ່ໄກ
ເມື່ອນັ້ນບາຄານຫ້າວ ຫົວຊົມຊ້ອຍຊື່ນ
ເຫັນທີ່ມານນອບນົ້ວ ຄານເຂົ້າໝອບມາ
ເມື່ອນັ້ນສາຣະວັນໄຫ້ ທັງຄາງຮ້ອງຮ່ຳ
ເລີຍເລົ່າເຖິງແຈ່ມເຈົ້າ ບຸນກວ້າງກ່າວຄາມ
ເປັນສັງແທ້ ຂຸນມານຮ້ອງຮ່ຳ
ທ່ານຫາກເຈັບປວດຮ້ອນ ຄຳແຄ້ນເຄືອງໃດ ນັ້ນເດ ?
ແຕ່ນັ້ນສາຣະວັນກົ້ມ ວັນທາທູນບາດ
(ໄຫວ້ແຈ່ມເຈົ້າ ບຸນກວ້າງຍອດຊາຍ)
ທານໂທດຖ້ອນ ພອະເຜິ່ງຊີວາ
ຂໍກູນາ ໂຜດຜາຍຕົວຂ້າ

ຂ້າກໍເຈັບປວດຮ້ອນ　　ແປວໄຟລົນຈູດ
ໃຈຈັກມຸດມອດແລ້ວ　　ຂໍເຈົ້າໂຜດຜາຍ ແດ່ຖ້ອນ
(ຂ້ານີ້ຄົນຖ່ອຍຊ້າ　　ປັນຍາໂງ່ສາມານ
ເປັນຄົນພານ　　ບໍ່ຮຸ່ງຫວນເຫັນແຈ້ງ)
ໃຈກະຊັງບ້າ　　ສັດຈາໄບ້ບ່ຽງ
ຄັນຫາກພຣະບໍ່ລ້ຽງ　　ຕົວຂ້າສ່ວນຊິຕາຍ ພຣະເອີຍ
ພຣະຈົ່ງໂຜດຂ້າໄວ້　　ຮອງບາດປາທາ ແດ່ຖ້ອນ
ຕາງໃຫ້ເປັນທາສາ　　ລ່ວງບຳຕີນເຈົ້າ
ແມ່ນວ່ານົງພາວດັ້ນ　　ທາງໃດຊິໄປເພື່ອນ
ຂ້າຂໍເປັນໄພ່ນ້ອຍ　　ບຳເຈົ້າຊ່ວງຕີນ ພຣະເອີຍ
ອັນວ່າເມືອງຫຼວງກວ້າງ　　ລວງບາວສິບສອງໂບດ
ຂ້າຂໍຖວາຍມອບໃຫ້　　ຈອມເຈົ້າບັງທົງ
ຖວາຍທັງຂ້າຊ່ວງໃຊ້　　ພວກໝູ່ຄົນໃນ
ທັງເຫວີ　　ມອບພຣະອົງເປັນເຈົ້າ
ຂໍໃຫ້ຈອມຫົວເຈົ້າ　　ສອງພຣະອົງລ້ຽງຕໍ່ ໄປຖ້ອນ
ອັນວ່າຄຸນແຈ່ມເຈົ້າ　　ຊິຈຳໝັ້ນບໍ່ລືມ ຂ້າແລ້ວ
ເມື່ອນັ້ນສົດທີເດດທ້າວ　　ເຈົ້າອ່ອນສອງພຣະອົງ
ພຣະກໍປົງໃຈຈິດ　　ປ່ອຍມັນເອົາລ້ຽງ
ແລ້ວຈຶ່ງບາຍເອົານ້ຳ　　ຄັນທີບໍລັ້ງ
ສອນຈຸ່ມລ້າງ　　ລົງຫັ້ນໃຫ້ກີນ
ທ້າວກໍບາຍເອົາແກ້ວ　　ທັມມະໂຮງລູກປະເສີດ

24 / VII

| | |
|---|---|
| ອອກແກວ່ງແລ້ວ | ໄຟມ້ວຍມອດຫາຍ |
| ມັນຈຶ່ງຫາຍຄຳຮ້ອນ | ກາງວັນເສັງສວ່າງ |
| ອັນວ່າພືດພຸ່ງໃໝ້ | ຫາຍຮ້ອນຢູ່ເຢັນ |
| ແຕ່ນັ້ນພຣະບາດທ້າວ | ດູແລງຕໍ່ສາຣະວັນ |
| (ທົງສຽງໃສ | ຕໍ່ນານທົວຈົບ) |
| ເຮົາບໍ່ໃສດາດ້ວຍ | ທົງນະຄອນເປັນໃຫ່ງ ສັງແລ້ວ |
| ເຮົາຈັກຂຶ້ນສົ່ງໃຫ້ | ບາທ້າວນັ່ງທົງ ທ່ານເອີຍ |
| (ເພາະວ່າວຽກໜ້າພຸ້ນ | ຍັງຍິ່ງໜັກໜາ |
| ຄືດັ່ງເອົາຜາຫຼວງ | ລັບເຕັງຕັບໄວ້) |
| ການກູທ້າວ | ຍັງໜາດາວເຄັ່ງ |
| ເພາະເພື່ອບັກແອວອຸ້ມ | ເອົາແກ້ວແມ່ໄປ ທ່ານເອີຍ |
| ກູກໍເຈັບອົກແຄ້ນ | ປານແສນສອນສຽນ ຈິງແລ້ວ |
| ກໍຈຶ່ງຕັ້ງດ່ວນຂ້ຽວ | ຂຽວລ້ານລ່ວງນຳ ນີ້ແລ້ວ |
| ເອງເລົາຍັງເຫັນແທ້ | ທາງໃດດາບອກ ມາດ້ອນ |
| ອັນວ່າເມືອງມຶງກວ້າງ | ຍັງໄກ້ຮູ້ວ່າໄກ ນັ້ນເດ |
| ອັນວ່າຫັດຖະຈັກທ້າວ | ນັບທະພານແດນທົບ ທີ່ໃດນັ້ນ |
| ເພົາຢູ່ເຂົາເຂດຂັ້ນ | ເຈົ້າເຈື້ອມທີ່ໃດ ທ່ານເອີຍ ? |
| ແຕ່ນັ້ນສາຣະວັນໄດ້ | ຍິນຄຳທ້າວກ່າວ ນານັ້ນ |
| ມັນວ່າໄກເລືດລ້ຳ | ເຖິງພຸ້ນສີເດືອນ ພຣະເອີຍ |
| ເຊີນພຣະເມືອທົງສ້າງ | ຫໍປາງຈັກວ່າງ ກ່ອນດ້ອນ |
| ຄັນວ່າເຕົ້າໝູ່ໄດ້ | ພໍແລ້ວຈຶ່ງໄປ ພຣະເອີຍ |

ອັນວ່າຫັຖຈັກທ້າວ　　ຣິດທີແຮງທັງເດດ
ຕັ້ງແຕ່ເຫເວດເຈົ້າ　　ກໍບັງປ້ານປ່ອນມັນ ແທ້ດາຍ
ອັນວ່າໃບທັນຫ້ອງ　　ປະຖະພີພົ້ນໂລກ ເຮົານີ້
ໃຜຫ່ອນຕັ້ງຕໍ່ໄດ້　　ກົວປ້ານປ່ອນມັນ ພຣະເອີຍ
ອັນວ່າຕົວຂ້ານ້ອຍ　　ກໍນ້ອມສວ່າຍສິນຫອງ
ຄັນວ່າເຖິງຣະດູປີ　　ສວ່າຍມັນພໍ່ຕີ້
ຕັ້ງວ່າປີ ລີໜ້າ　　ພຍາພີບັກໃຫຍ່
ອັນວ່າພົບພວກໄດ້　　ແສນຕີ້ຕິວອັກໂຂ ແທ້ແລ້ວ
ແຕ່ນັ້ນພຣະບາດເຈົ້າ　　ຕ້ານຕໍ່ສາຣະວັນ
ເຮົາບໍ່ກົວເກງມັນ　　ທີ່ໃບບອງນ້ອຍ
ແມ່ນວ່າເທພາຫ້ອງ　　ຫິມພານປ້ານປ່ອນ ກໍດີຖ້ອນ
ໄວ້ແກ່ສອງພີ່ນ້ອງ　　ເຫມ້າງມຸ່ນທະລາຍ ຫັ້ນແລ້ວ
ຄ້ອນວ່າສອງພຣະອົງຕ້ານ　　ບໍາກັບແລ້ວປ່າ
ທ້າວບອກໃຫ້　　ມັນກູ້ຮຽກມົນ
ແຕ່ນັ້ນສາຣະວັນທ້າວ　　ບາຄາບບົນບອກ
ມັນກໍຮູ້ບໍ່ຟັ້ງ　　ມົນແກ້ວຮຽກຄືນ ຖ້ວນແລ້ວ
ແຕ່ນັ້ນຝູງນາງເຕັ້ນ　　ລະວັງອົງຖືຫອກ
ທ້າວກໍເລີຍບອກໃຫ້　　ເຂົາຟ້າວເລົາວາງ
ເມື່ອນັ້ນພຣະອວ່າຍໜ້າ　　ຕັ້ງຕໍ່ປາງຜີ
ສາຣະວັນເທາະ　　ກ່ອນອົງອວນເຂົ້າ
ທ້າວເລົ້າເບື້ອນ　　ບົວລະບາດຕາມຫຼັງ

ກໍຈຶ່ງເຖິງຫໍປາງ | ບັ້ງປາວປາງເສື້ອ
ຟັງຍິນຫຶ່ນ ໆ ພ້ອມ | ຝູງໝູ່ຂຸນນານ
ເຂົາກໍ ດີທຽນທອງ | ຂາບຖວາຍສອງເຈົ້າ
ອັນວ່າຊາວກົງຫ້ອງ | ຂຸນນານທຸກໝູ່
ເຂົາກໍຖວາຍລູກເຕົ້າ | ເປັນຖ້ານແຫ່ແຫນ
ແຕ່ນັ້ນສາຣະວັນທ້າວ | ຖວາຍນາງຕົນລູກ
ໄວ້ໃຫ້ເປັນນິງແກ້ວ | ພໍໄດ້ອຸ່ນໃຈ ທັ້ນແລ້ວ
ຊື່ວ່າຈັນທອນນ້ອຍ | ວາດຄ່ຽມຄຳເຫຼົາ
ນາງກໍເນົາຫໍປາງ | ຍອດສູງເສົ້າດົວ
ພຣະກໍສອນສັ່ງໃຫ້ | ທຸກໝູ່ຂຸນນານ
ທັງນິງຊາຍ | ຊູ່ຊຸມຈຳໜັ້ນ
ອັນນຶ່ງຢ່າໄດ້ພາໄລພົ້ນ | ລັງກຽດສັບຫຼັບ
ຢ່າໄດ້ແປງຄຳຕົວະ | ລ່າຍພາງລັງລ້າວ
ອັນນຶ່ງຢ່າໄດ້ຖືເຂົາພ້ຽງ | ຫົວພຽງພົມມະໂລກ
ຢ່ຽວວ່າບຸນເພີ່ນລົ້ນ | ເຂົາແພ້ຈຸ່ມຕາຍ ທັ້ນແລ້ວ
ອັນວ່າປາຣະມີ ໃຫ້ | ຂັນຕີອົດໂທດ ເອົາຖ້ອນ
ຊື່ວ່າສິນແປດຕັ້ງ | ຈຳໄວ້ຢ່າໄລ ທ່ານເອີຍ
ອັນນຶ່ງສັດສິ່ງເນື້ອ | ໃບປ່ານີຄາ (໑)
ຕົວໃດມໍຣະນາຕາຍ | ຈົ່ງກິນຢ່າຂ້າ
ອັນນຶ່ງທານບັງນັ້ນ | ໃຫ້ກິນທານລ້າງສວ່າຍ

---

(໑) ໃບປ່ານີຄາ ເດີມເປັນ ໃບປ່ານໍອະຄາ

ກັບທັງສິບຫ້າເຮືອ ຄຶງໄວ້ຢ່າໄລ ທ່ານເອີຍ
ຈຶ່ງຊິເຫັນຫີນຫ້ອງ ນິຣະພານດອນເພິ້ນ ສູເອີຍ
ໃຜຜູ້ທຳບາບຮ້າຍ ລົງໝໍ້ແຜ່ນແດງ ແທ້ແລ້ວ
ອັນນີ້ເຮົາສອນໄວ້ ເຖິງບອດດາວະດຶງ
ຢ່າໄດ້ທຳກັມໜັກ ຕໍ່ໄປເມືອໜ້າ
ແຕ່ນັ້ນຫົນ ໆ ພ້ອມ ຝູງໝູ່ຊຸນນາງ
ເຂົາກໍຖວາຍບັງຄົມ ຂາບລົງປະນົມນິ້ວ
ເຂົາກໍຈຳຄຳເຈົ້າ ເທສນາສອນສັ່ງ
ຄືດັ່ງທັມພຣະພຸທເຈົ້າ ປາງນັ້ນເທສນາ ແທ້ແລ້ວ
ເຂົາກໍຈຳສິບຫ້າ ຫາຄອງວິນັຍສູດ
ກັບທັງສິບແປດຕັ້ງ ຈຳໄວ້ບໍ່ໄລ ຫັ້ນແລ້ວ
ບານນັ້ນຫົນ ໆ ພ້ອມ ຊາວເມືອງຟັງເທດ
ເຂົາກໍຟັງເທດເຈົ້າ ບຸນກວ້າງເທສນາ
(ທຸກທີ່ຖ້ວນ ໃນນອກເມືອງນາງ)
ເຂົາກໍບໍນາລາ ທູບທຽນບູຊາເຈົ້າ
ເມືອນັ້ນບາຄານທ້າວ ຍິນດີຊົມຊື່ນ
ເຫັນທີນານມາກລັ້ບ ມາຫຸ້ມແຫ່ແຫນ
ເຂົາກໍມາເສບເຈົ້າ ເຝົ້າບາດປາທາ
ຫາຍພາສາ ໝູ່ນາງພໍລ້ານ
ເຈົ້າກໍຫຼີງດູໜ້າ ບາງງາມແຫນແຫ່
ຕັ້ງວ່າຜິວອ່ອນກ່ຽງ ຫວງແມ້ງແມ່ນດາ

ອັນວ່ານຸກຂາໜ້າ    ຂາວສີງສຳລີ
ຖີງກິນງານ    ຊູ່ກິນເຂົາເຈົ້າ
ເຂົາກໍເອົາມາໃຫ້    ບາຄານບິງຖ່າວ
ບາບ່າວທ້າວ    ຊົມຊ້ອນຣ່ວມສເພ
ກໍຫາກເພິງໃຈເຈົ້າ    ຈັບຫອມບາງບາດ
ອັນວ່າສາວສນົມໜຸ່ມນ້ອຍ    ພຣະອົງຊ້ອນຊູ່ບາງ
ແມ່ນວ່າຈຽມປາງເຈົ້າ    ພີເມືອງພຣະພີ ກໍດີ
ເຈົ້າກໍຊົມຊອກຊ້ອນ    ພຣະໄນກ້ຽວດັ່ງດຽວ ແທ້ແລ້ວ
ບົດນີ້ບາຄານນ້າງ    ຊຸນນາງປາຍດ່ານ
ມັນຫາກແລ້ວທໍ່ນີ້    ບໍໄວ້ທີຄອນ ກ່ອນແລ້ວ ຯ

## ບັ້ນຍັກສາຣະວັນພາເດີນໄປເຣວຍັກຫັຖຈັກ

ບັດນີ້ຈັກກ່າວເຣື່ອງ    ເສີມສິງນິທານ ກ່ອນແລ້ວ
ຕາມດັ່ງອາຈານໄຂ    ຂ່າວແປແປງໄວ້
ຈາຣະນັຍຕາມພົ້ນ    ພິມກອນການແຕ່ງ
ຈັກສະແດງສືບເຣື່ອງ    ຣວມຂໍ້ຂອດປະພັນ
ຈຽມແຕ່ເຈົ້າປູ່ຫັ້ນ    ສເວີຍຣາດເມືອງພີ
ນານມາເຫີງ    ຖ່ອງເດືອນວົນໄດ້
ເຈົ້າກໍຄະນຶງເຖີງໃຫ້    ມາດາພຣະແມ່
ຍັງໄປ່ຫາຍທີກ້າ    ຄໍາເຈົ້າປາຖນາ

ທ້າວຈຶ່ງວາຈາຕ້ານ ພີເມືອງພຣະພີ້
ຄວນທີ່ເດີນດຸ່ງດັ້ນ ຂຽວລ້ານລ່ວງໄປ ພີ່ເອີຍ
ນັບແຕ່ເຮົາປູ່ສ້າງ ສະເວີຍຣາດສາຣະວັນ
ນານມາເຫິງ ດ່ອງເດືອນຣະດູຊ້າ
(ດູດັ່ງເວຣາຮ້າງ ຣາມທາງຄາເຄິກ
ກໍບໍ່ຄວນທີ່ຍັ້ງ ການໄວ້ຍືດຍາວ ແທ້ແລ້ວ)
ທ້າວຈຶ່ງຕ້ານສັ່ງນ້ອງ ນາງນາດຈັນທອນ
ສາຍຄໍເອີຍ ຢູ່ດີຢ່າເສົ້າ
ເຮົາພີ່ມີການຮ້ອນ ຣິມມະໂນໃນຣາດ
ແລ້ວຈັກໄດ້ຈາກນ້ອງ ແພງຊ້ອນຕ່ອນສເນ ກ່ອນແລ້ວ
ພີ່ຈັກລາຈາກເຈົ້າ ດັ້ງດຸ່ງພຣະຄີຣີ
ຄັນວ່າຫຼາຍຣາຕີ ຊິຕ່າວຄືນມາຊ້ອນ
ແຕ່ນັ້ນຈັນທອນນ້ອຍ ປະນົມກອນກົ້ມຂານ
ໃຫ້ພີ່ລຸລາບໄດ້ ເທນ້າງໝູ່ນານ ແດ່ຖ້ອນ
ຢ່າໄດ້ມີໄພຍຕ້ອງ ອິນຕາຍບັງບຽດ ສັງນັ້ນ
ໃຫ້ພຣະແຂງຂົ້ມປ້ານ ນານຮ້າຍອ່ອນໂຍນ ແດ່ຖ້ອນ
ຄ້ອມວ່ານາງກ່າວແລ້ວ ເດີນທ່ານສາຣະວັນ
ເຮົາຈັກຂຽວພູສູງ ດ່ວນໄປວັນນີ້
ອັນວ່າເມືອງຫຼວງກວ້າງ ສາຣະວັນເນົານັ້ງ ຈິ່ງເຖິງ
ຝູງໄພ່ພ້ອມ ເວນໃຫ້ທ່ານຄອງ
(ທຸກທີ່ຖ້ວນ ມຸນມາກໃນນະຄອນ

ເຮົາເວນຄືນ　　ສິ່ງເຫົ່າທັງຫ້າຍ)
ກັບທັງບໍາເຣີໃຊ້　　ນາງສນົມນ້ອຍໜຸ່ມ
ເຮົາຂໍເວນມອບໃຫ້　　ຄືນທ້າວຊູ່ອັນ ທ່ານເອີຍ
ແຕ່ນັ້ນສາຣະວັນໄດ້　　ຍິນຄໍາທ້າວກ່າວ ມານັ້ນ
ທ້າວກໍຄຶດຮຸ່ງຮູ້　　ຄະນຶງແຈ້ງຕໍ່ການ
ຄວນທີ່ເຮົາເດີນເທົ້າ　　ເດີນເຂົາເສັ່ງກ່ອນ
ແລ້ວຈຶ່ງໃຫ້ໄພ່ນ້ອຍ　　ພົນລ້ານລ່ວງຕາມ ຊອນດາຍ
ເມື່ອນັ້ນພຣະຕອບຕ້ານ　　ຢ່າຮໍ່າເພິ່ງຄຶດ
ເຮົາຈັກໄປສອງຄົນ　　ທ່ານຢ່າເຄືອງຄໍາຮ້ອນ
ແຕ່ນັ້ນສາຣະວັນກົ້ມ　　ຂໍໄປຕາມບາດ
ຂ້າຂໍຕາມບາດພື້ນ　　ຈອມເຈົ້າບໍ່ໄລ ພຣະເອີຍ
ເມື່ອນັ້ນທ້າວຕອບຕ້ານ　　ຂານວ່າດີ ໆ
ເອົາທ່ານເປັນນາຍທາງ　　ເພື່ອນກັນເດີນຜ້າຍ
ຄ້ອມກ່າວແລ້ວ　　ປະດັບດາວດຽນດີ
ສາມພຣະອົງສີ　　ຈາກວຽງບວງຍ້າຍ
ເລີຍເລົາກາຍແດນຊຸ້ນ　　ສາຣະວັນຂ້າມລ່ວງ ໄປແລ້ວ
ແຕ່ນັ້ນພຣະຍອດແກ້ວ　　ເມີນສິ່ງເບິ່ງມານ
ທັງເລົ່າທິ້ງໄປກ້ຳ　　ນັນທະພານອະມໍຣະໂຄຍາທີນ ພາຍພຸ້ນ
ເຫັນແຕ່ຟ້າກ່ຳແຫ້ງ　　ແລສີ່ວດັ່ງນິນ
ເຈົ້າກໍຕ້ານກ່າວຖ້ອຍ　　ຖາມທ່ານສາຣະວັນ
ບ້ງປານໃດ　　ຈຶ່ງຊີເຖິງເມືອງກວ້າງ

ແຕ່ນັ້ນສາຣະວັນຕ້ານ ຂານຄຳທູນບາດ
ຄັນວ່າອອກຈາກນີ້ ໄກລ້ຳຊວາວປະມານ ເຈົ້າເອີຍ
ຈິງຈັກເຖິງຫິນຫ້ອງ ບັນທະພານເມືອງໃຫຍ່ ທີພຸ້ນ
ຂ້າກໍທູນບອກເຈົ້າ ພໍຮູ້ແຕ່ປະມານ ນີ້ແລ້ວ
ແຕ່ນັ້ນພູບານເຈົ້າ ເດີນເຂືອສອງອ່ອນ
ໃຫ້ຮີບຮ້ອນ ຂຽວລ້ານລ່ວງໄປ ທ່ານເອີຍ
ເມື່ອນັ້ນສາມພຣະອົງຍ້າຍ ຂຽວພູບຸປ່າ ໄປແລ້ວ
ລາງແຫ່ງທາງບາກຮ້າຍ ຜາສ້ຽນຊຸ່ຄືນ
ຄີງກິນຂຶ້ນເວຫາ- ເຫາະຫອນໄປແລ້ວ
ກໍຈິງມິ້ນທີຮ້າຍ ຜາສ້ຽນຊຸ່ໜານ
ອັນວ່າໄສນງານເຈົ້າ ສາມພຣະອົງດັ້ນດຸ່ງ
ຟັງບິນນິກຮຸ່ງຮ້ອງ ປາຍໄມ້ສີງສຽງ
ຟັງບິນລິມພລຽງຕ້ອງ ພະບູຫາໃບແປກ ພຸ້ນເປີ
ອັນວ່າພີແບກຄ້ອນ ບາທ້າວແບກທະບູ
ກໍຫາກບູເມືອເມື້ອ ສາມພຣະອົງດັ້ນດຸ່ງ
ຂ້າມໂຄກກວ້າງ ຫອມຮົ້ງດອກຮັງ
ຟັງບິນກາເວົາຮ້ອງ ຂານຂັນຫາຄູ່ ແລເປີ
ມີທັງຈັກກະຈັ່ນຮ້ອງ ຈຳຈີ້ຈົນທາງ
ອັນວ່າລິມພານຕ້ອງ ສາຂາເພືອນຟາດ
ຟັງບິນຫາດ ໆ ນ້ຳ ໄຫຼທ້ທັ່ງຜາ
ມີທັງໂກກີລາຫຼົ້ນ ຮວາຍສຽງຮ້ອງຮ່ຳ

ຜີກໍໄປກ່ອນນ້ອງ ບາທ້າວລ່ວງຕາມ
ສ່ວນວ່າພູໄຊທ້າວ ຄະນຶງແມ່ ນີມາຍ
ດີທີ່ເຫນັນຕາຣະດູກາຍ ດ່ວນເຖິງຣະດູຮ້ອນ
ນັບແຕ່ພູຫອນທ້າວ ເດີນດົງດັ້ນດຸ່ງ ໄປນັ້ນ
ກໍຫາກສາມຂວັນເຂົ້າ ຣະດູໄດ້ຖ່າຍມາ ນີ້ແລ້ວ
ກໍຈິງເຖິງຂອບຊຸ້ນ ແດນດ່ານບັນທະພານ
ຫັດຊະຄືນມັນ ຮັກສາແດນເສື້ອ
ມັນກໍຫຽວລະວັງລ້ອມ ແດນດົງຂົງເຂດ
ທຸກຄ່ຳເຊົ້າ ຫຽວລ້ອມລາດເວນ ແທ້ແລ້ວ
ແຕ່ນັ້ນຫັດຊະຄືນທ້າວ ທີ່ດານ້ອງນາດ ມັນນັ້ນ
ມັນກໍເຄີຍດຸ່ງດັ້ນ ເຖິງນີ້ຊູ່ວັນ ພຣະເອີຍ
ຄວນເຮົາຣວາຍມິນໃຫ້ ບັງຕາມັນກ່ອນ
ແລ້ວຈິງກັບເພດພ້ຽງ ເປັນຮີ້ນຮ່ານບຸງ
ແຕ່ນັ້ນສາມພຣະອົງພ້ອມ ເອົາກັບທຳເດດ
ເລີຍເລົ້າກັບເພດພ້ຽງ ເປັນຮີ້ນຫ່ານບຸງ ຫັ້ນແລ້ວ
ແຕ່ນັ້ນຫັດຊະຄືນທ້າວ ຖືຕະບອງທະຍານເມກ
ມັນກໍມາຮອດຫັ້ນ ຢືນຢັ່ງມລ່ຳດູ
ມັນກໍໂຮຍ ໆ ເຣົ້າ ຫອມດັ່ງຮິດຮວ່າງ
ເໝືອນດັ່ງຫອມກ້ວາຍງ້າວ ກະຈວນຟົ້ງທົ່ວດົງ
ມັນເລົ້າເປື້ອງ ຕະບອງຕ່ອຍຕີຫາ
ອັນວ່າສາມບາຄານ ຫຼື ກນານໂກວຄ້ອນ

| | |
|---|---|
| ເມື່ອນັ້ນບາຄານທ້າວ | ທັງພີສາມອ່ອນ |
| ໜີພັ່ງຟ້າວ | ຄາລ້າຈາກນັນ |
| ອັນວ່າສາມແຈ່ມເຈົ້າ | ຫຍັງທ່ອງນໍຣະຄາ |
| ເດີນດົງເຖິງ | ເຂດນາງສວາງເສື້ອ |
| ຜ່ເຫັນບອດພຸ່ງພົ້ນ | ພາສາດເສົາດຽວ ແລະເປີ |
| ກໍຫາກໂຮງ ໆ ແສງ | ສ່ອງປາວປາງເສື້ອ |
| ເມື່ອນັ້ນທ້າວເລົ່າດ້ານ | ຖາມທ່ານສາຣະວັນ |
| ອັນທີ່ໂຮງ ໆ ເຫຼື້ອມ | ທໍປາງເຈັດບອດ ພາຍພຸ້ນ |
| ອັນວ່າບອດຊໍ່ຟ້າ | ເປັນຖ້ານຖືຖັນ |
| ຫຼາຍຊ່ອງຊັ້ນ | ນຸກນາດນະນີວັນ |
| ຫັຖຈັກນັນ- | ປູ່ເນົາໃນຫັ້ນ ນັ້ນລື ? |
| ລືວ່າເປັນແດນຊັ້ນ | ຫົວເມືອງປາຍດ່ານ ນັ້ນເດ |
| ຮູ້ວ່າແມ່ນເຜົ່າຜູ້ | ມັນນັ້ນຊື່ລື ນັ້ນຈາ ? |
| ແຕ່ນັ້ນສາຣະວັນກົ້ມ | ປະນົມກອນບັ່ນບອກ |
| ແຫນຮ່າງໃຫ້ | ພຣະເມືອງຮູ້ຮ່າງການ |
| ອັນນັ້ນຫາກແມ່ນນັດເຣດທ້ອງ | ຫີນແທ່ງນັນທະພານ ແທ້ແລ້ວ |
| ຊື່ວ່າຫັຖຈັກນັນ- | ນັ່ງເນົາໃນຫັ້ນ |
| ພຣະຕ່າວໜ້າ | ຖາມທີ່ສາຣະວັນ |
| ຫຼັງສູງສຸດ | ພອກນະນີຂາວເຫຼື້ອມ |
| ຣັສມີແຈ້ງ | ຈັງໂກໄຂການ |
| ແມ່ນເຜົ່າຜູ້ | ໃຜແທ້ຊື່ລື ທ່ານເອີຍ. |

ແຕ່ນັ້ນສາຣະວັນທ້າວ　　ໄຂກອນຊີ້ຮ່າງ
ອັນວ່າຫຼັງຜ່ານຟ້າ　　ຂາວລ້ວນລຽນມະນີ
ທີ່ນັ້ນຊື່ວ່າຫັດຊະກິດທ້າວ　　ທີ່ຕານ້ອງນາດ ມັນແລ້ວ
ຂໍແກ່ພຣະບາດເຈົ້າ　　ຄະນິງຜ້ຽນຮ່ຳເພິງ ຫັ້ນຖ້ອນ
ເມື່ອນັ້ນພຣະເລົາຕ້ານ　　ຖາມຄູ່ປາງພີ
ອັນທີມະນີນິນດຳ　　ລວດມຸງເຫຼືອງເຫຼື້ອມ
ເປັນຫໍຫ້ອງ　　ໃພເດເພົາຢູ່
ໂຮງຜ່ານຟ້າ　　ມັນນັ້ນຊື່ໃດ ?
ແຕ່ນັ້ນສາຣະວັນທ້າວ　　ໄຂກອນຊີ້ຮ່າງ
ບອກໃຫ້ແຈ້ງ　　ນາທ້າວໜໍ່ໃພ
ອັນນັ້ນຫໍທ່ານທ້າວ　　ຊັ້ນຊື່ກິງເພັດ
ແນວຣາຊາ　　ກິ່ງພັນພິງເຊື້ອ
ຫາກແມ່ນໂລຫິດເສັ້ນ　　ສາຍດຽວພິງກິ່ງ ມັນແລ້ວ
ເປັນຊາດຊັ້ນ　　ຫຼານຫຼ້າສືບພຣະວົງ ແທແລ້ວ
ແຕ່ນັ້ນທ້າວເລົາຕ້ານ　　ຖາມທີ່ຫຼາຍທີ
ເຖິງຫໍສູງ　　ຊິ່ວຕາເຕັ້ມຢ້ຽມ
ອັນທີ່ໂຮງ ໆ ເຫຼື້ອມ　　ຫໍແດງແປດຍອດ
ຫຼັງລອດຟ້າ　　ພິລາເຂັ້ມຄາດມຸງ ນັ້ນນາ
ອັນນັ້ນແມ່ນທ່ານທ້າວ　　ຊັ້ນຊື່ນາມໃດ
ກໍຫາກໂຮງ ໆ ໃສ　　ມຸ່ງຂາວແກມສີ້ວ
ແຕ່ນັ້ນສາຣະວັນທ້າວ　　ແໜກອນກອນບອກ

ຖວາຍທ່ານທ້າວ ຕິງຜ້ຽງບໍ່ບັງ
ທີ່ນັ້ນເປັນຫໍຫ້ອງ ປັດຫຸມມາເນົາຢູ່
ກັບທັງນາງຍອດແກ້ວ ແພງລ້ານແມ່ນາ ແທແລ້ວ
ບອກຈາກນັ້ນ ນາງນາດສາວສວັນ
ເນົາດອມກັນ ຢູ່ຫໍປາງແກ້ວ
ກໍຫາກສອງນາງແທ້ ເປັນຄົນເມືອງອື່ນ
ໂຮມຢູ່ຫັ້ນ ນາງແກ້ວສີຄົນ ພຣະເອີອ
ແຕ່ນັ້ນທ້າວຮຸ່ງຮູ້ ຕ້ານຊື່ນຊົມຫົວ
ເທື່ອນີ້ເກນນິວຕິກ(໑) ຖືກເມືອງມຶງແລ້ວ
ປ່າຫວັງທ້ອນ ນັນທະພານຊີ້ພົນພຸ່ງ
ປຽວຈັກເປັນເຫງື່ອຫ້ອງ ສອນແກ້ວແທ່ງກູ ບໍ່ປ່າແລ້ວ
ຄ້ອນວ່າສາມພຣະອົງຕ້ານ ດອມກັນແລ້ວປ່າ
ເຈົ້າກໍເວົ້າຕໍ່ອ້າຍ ຫົວຫ້ອມຊື່ນຊົມ ແທ້ແລ້ວ
ແຕ່ນັ້ນພຣະກໍຫຼິງແລປ້ຽນ ຊັ້ນຊ່ອງເມືອງຜີ
ອັກໂຂເພນີ(໒) ໜື່ນປາຍປາງເສື້ອ
ເຈົ້າກໍຫຼິງດູຫ້ອງ ເມືອງຜີໃສສ່ອງ
ສາມແຈ່ມເຈົ້າ ຫຼິງປ້ຽນຄູ່ປາງ ຫັ້ນແລ້ວ
ບັດນີ້ຈັກກ່າວເຖິງທັດຊະກິດທ້າວ ມັນໄປຕະເວນດ່ານ ກ່ອນແລ້ວ
ມັນຫາກຫອມກິນກົວ ດົງກວ້າງບໍ່ເຫີຍ

---

(໑) ເກນນິວຕິກ ແຕ່ເກົ່າເປັນ ນິວຣະພັນຕິກ
(໒) ອັກໂຂເພນີ ເດີມເປັນ ອາເພນີ

ມັນກໍຖຸບດັງເປື້ອງ　　ດິນດູຫາກິນ
ມັນຈິງຕິດໄຕ່ສົ້ນ　　ບຳກົ້ນຊອກຫາ
ມັນກໍຄຸມຄານເຕັ້ນ　　ຕະບອງດີຟາດຟຸ່ມ ມາບັ້ນ
ບັກເຮ່ງຂ້ຽວ　　ຂຽວລ້ານລ່ວງຕາມ
ເລີຍເລົາຖອງເຖິງຫ້າວ　　ສາມພຣະອົງປືນຢູ່
ພຣະກໍຫຼີງລ່ຳປ້ຽມ　　ປາງເສື້ອບໍ່ເຊົາ
ອັນວ່າສາມພຣະອົງເຈົ້າ　　ບິນດີຊົມຊື່ນ
ບັງໄປປຸດປ່ອນບັ້ງ　　ຫາບແກ້ນເນື້ອບແຄບ
ບັກກໍໂກວຕະບອງຕ້ອງ　　ພີເນືອງພຣະພີ
ຈິດຫຼຸດຫຼົ້ມ　　ສະເດັບກົ້ງຈາກຄີງ
ອັນວ່າບາດານຫ້າວ　　ເຊຊວນຟຸບຟາບ
ກົ້ງເກື້ອບລົ້ມ　　ເລີບນ້ອບນອດໃຈ ແທ້ແລ້ວ
ເນື້ອນັ້ນບາດານຫ້າວ　　ເຫັນອົງພຣະພີ
ນິດນອດສົ້ນ　　ບາຫ້າວອ່ານມົນ
ອັນວ່າຄາຖາເຈົ້າ　　ສາມທີແລ້ວເປົາ
ເອົາພີ້ອ້າຍ　　ຄືນແລ້ວຮ່ຳນານ
ແຕ່ນັ້ນສາຣະວັນຫ້າວ　　ພີເນືອງພຣະພີ
ກວັດແກວ່ງຄ້ອນ　　ຕະບອງເຂົ້າຮ່ຳນານ
ແຕ່ນັ້ນຫັດຊະກິດຮູ້　　ສາຣະວັນເນືອງສ່ວຍ
ນຶງນົ້ກັບຕ່າວປົ້ນ　　ຕະບອງສູ້ຕ່ຳກູ ແລນໍ
ຄາວກ່ອນກົ້　　ເຖິງຂວບປີເດືອນ

ເອົາທອງມາ-          ສວ່າຍກູປີ ຕົ້
ບັດນີ້ມຶງເລົາເອົາໃຈລ້ຽວ          ຫຼັກງອນສາໂຫດ ດັ່ງນີ້
ມຶງຫາກມາລ່ວງບ້ານ          ເມືອງແຫ້ແຫ່ງກູ ທ່ານເອີຍ
ບັດນີ້ກູຈັກຕີຫົວໃຫ້          ເປັນຜົງຜາງໃງ່ ໄປແລ້ວ
ກັບທັງສອງອ່ອນນ້ອຍ          ຕາຍພ້ອມພ່ຳກັນ ແທ້ແລ້ວ
ແມ່ນວ່າລູກແລະເຕົ້າ          ຂ້າໄພ່ຊາວເມືອງ ມຶງນັ້ນ
ກູຈັກເອົາມາໝົດ-          ຊູ່ຄົນເປັນຂ້າ
ເອົາສູມາເປັນຂ້ອຍ          ທັງເມືອງໝົດໝູ່ ສູແລ້ວ
ໃຫ້ສູນ້ຽນຂີ້ຊ້າງ          ຂົນຖິ້ມຊູ່ວັນ ຫັ້ນແລ້ວ
ແຕ່ນັ້ນສາຣະວັນໄດ້          ຍິນຄຳກອຍກ່າວ
ມຶງນີ້ອາຄາດຮ້າຍ[໑]          ເຊິງໄດ້ຮ່າວກະທຳ ແທ້ນໍ
ໂອດວ່າຕົວດີກ້າ          ໂກວຕະນອງໃສ່ຜ່າ ດັ່ງນີ້
ມຶງນີ້ຄົນງ່າວບ້າ          ເຊິງໄດ້ຮ່າວກະທຳ ທ່ານເອີຍ
ອັນທີ່ທາງຄວນແທ້          ຖາມກູເສັ່ງກ່ອນ ຈິງແມ
ຄັນວ່າດີຊົ່ວຮ້າຍ          ເມືອໜ້າຈິ່ງຄ່ອຍທຳ ທ່ານເອີຍ
ອັນນຶ່ງມຶງຫາກຈອງຫອງກ້າ          ຖືຕະນອງເປື້ອງປ່າຍ ມານັ້ນ
ຊາດທີ່ເປັນຂ້າເຈົ້າ          ບໍ່ມີຢ້ານຢ່ອນໃຜ ງ່າຍແລ້ວ
ມັນຫາກລືເດດກ້າ          ອີງອາດນາຍກູ ແທ້ແລ້ວ
ອັນແຕ່ໃນຊົມພູ          ເຂດຂົງເຂົາງ້
(ໃຜບໍ່ມາລໍຫຼັ້ບ          ພານຕາວໄດ້ງ່າຍ

(໑) ອາຄາດຮ້າຍ ເດີມເປັນ ປໍຕຸຄາດຮ້າຍ

| | |
|---|---|
| ປຽວຈັກເຊີນຊາກງ້າວ | ພຣະອົງເຈົ້ານຶ່ງນອນ (ແທ້ແລ້ວ) |
| ມຶງຈັກມາຕໍ່ສູ້ | ອິດທິເດດດວງສອນ ວ່າລື |
| ຫຼອນຈັກນຳຣະບາຕາຍ | ກ່ອນພົບຊາວບ້ານ |
| ມຶງຢ່າມາກ່າວຕ້ານ | ຖແລງກ່າວຄຳສລັບ |
| ກູຈັກຈັບຄໍບິດ | ບີບເສັງສັບແປ້ງ |
| ແຕ່ນັ້ນຄຶງແດງຫ້າວ | ຫັດຊະກຶດຄຽດສັ່ນ |
| ມັນກໍເປື້ອງເປ່ງໜ້າ | ໂກດຄ້ອນແກວ່ງຕະບອງ |
| ທຳເດດກ້າ | ທົງເດດໄອສວນ |
| ລືວ່ານັນທະພານຂວາງ | ເຂດຂົງເຂົາງໍ້ |
| (ເຂົາກໍລືກູແລ້ວ | ຫັດຊະກຶດການເດດ |
| ໃຜຜູ້ຕ້ອງຕໍ່ໜ້າ | ເນັ່ງຣະນ້ວຍນຶ່ງນອນ ແລເດ) |
| ຄ້ອນວ່ານັນກ່າວແລ້ວ | ກ້າວໂກດພົງຟາຍ |
| ມັນກໍບາຍຕະບອງເພັດ | ເຜັ່ນມາຫານ້ອຍ |
| ແຕ່ນັ້ນຜີກໍບາຍກົງດມ້າງ | ຜບອງເຊີນໄຊຮ໌ |
| ສາຣະວັນຕໍ່ສູ້ | ຕະບອງທ້າວທອນທະຍານ |
| ແຕ່ນັ້ນພູບານທ້າວ | ບາດານທົງລ່ຳ |
| ສາຣະວັນທັງຜີພີເຈົ້າ | ກຸມເສື້ອຖີບທຳ |
| ສອງຄີບປ້ຳ | ຫັດຊະກຶດກ້າແກ່ນ |
| ມັນກໍກວັດແກວ່ງຄ້ອນ | ຕະບອງທ້າວເຮັ່ງໄສ |
| ສາຣະວັນເປື້ອງ | ຕະບອງຂວັນໄສຜ່າ |
| ໜ້າລ່າເບື້ອ | ປາງນັ້ນສແນ່ງຕາຍ |

ມັນເລົາກາຍເປັນຊ້າງ ແສນຕົວຄືນຕໍ່
ເຊື້ອໜໍ່ທ້າວ ຫົວລ້ມ່ານ
ສີຄານທ້າວ ສອງພຣະອົງມີປ່ອຍ
ສອງກໍຫານຕໍ່ຊ້າງ ນາຍນ້ອຍມອດຊີວັງ
ຍັງແຕ່ພາຍສານຊ້າງ ສັດທັນຂາວເຜືອກ
ເລີຍເລົ້າຂຳເຊືອກຂຶ້ນ ພໍຕີ້ຕົວອັກໃຂ
ເມືອນັ້ນສາຣະວັນຮູ້ ເຫັນມັນກະທຳເດດ
ມັນກໍກັບເພດຂຶ້ນ ສເນີພ້ຽງດັ່ງດຽວ ຫັ້ນແລ້ວ
ເຂົາກໍ ກືນກັນເຂົ້າ ເທິງດິນຟັນດາບ
ສອນຜານແພ້ ນາຍນ້ອຍມອດຕາຍ
ຍັງແຕ່ຫັດຊະກືດຜູ້ ຄົນດຽວກ້າແກ່ນ
ມັນກໍກວັດແກວ່ງເປື້ອງ ຕະບອງຫ້າວຫອນທະຍານ
ແຕ່ນັ້ນສາຣະວັນໃຫ້ ພີເມືອງພຣະພີ
ສອງກໍກວັດແກວ່ງເປື້ອງ ຕະບອງສູ້ສິງນານ
ອັນວ່າຫົວສະເດນກົ້ງ ເຊຊວນນອງເລືອດ
ໄຫຼປາດນ້ອຍ ຣຳໜ້າດາດແດງ
ມັນກໍແຍງເອົາໄດ້ ຫົວມາຕິດຕໍ່
ມັນຈິງກັບຕ່າວປິ້ນ ຄືນເຂົ້າສູ່ເມືອງ ຫັ້ນແລ້ວ
ແຕ່ນັ້ນສາຣະວັນທ້າວ ທັງພີຫຼີງລ່ຳ
ເຫັນທີ່ມັນຟັ່ງຟ້າວ ຄືນເຂົ້າສູ່ເມືອງ
ແລ້ວຈິງເອົາກັນລ້າງ ລົງນະທີໄສງເລືອດ

ຄັນວ່າຫາຍກິນແລ້ວ　　ພຣະອິນລ້ຽງເຄື່ອງສເວີຍ
ຄ້ອນວ່າມີແຮງແລ້ວ　　ຫາຍແຄນຄາວນຶ່ງ
ຜີກໍເວົ້າຕໍ່ນ້ອງ　　ຫົວຫ້ອນຊື່ນຊົມ
ບັດນີ້ຈັກກ່າວຫັດຊະກົດເຈົ້າ　　ເຖິງຣາຊປາງຫອງ ກ່ອນແລ້ວ
ມັນກໍທູນຣາຊາ　　ພີ່ພຣະອົງເອົາຕ້ານ
ເທື່ອນີ້ການເມືອງຮ້ອນ　　ຈຳຈວນຈອນຣາດ ຈິງແລ້ວ
ເພາະວ່າເຂົາເຣ່ງຂ້ຽວ　　ຊຽວລ້ານລ່ວງມາ ພຣະເອີຍ
ຜູ້ນຶ່ງຄືອົງທ້າວ　　ສາຣະວັນເມືອງສ່ວຍ
ມັນກໍສາຣະພົດເຈົ້າ　　ເປັນບ້າປ່ວງມາ
ພາເອົານ້ອຍ　　ແນວຄົນສອງອ່ອນ
ໝາຍຈັກເທພາບມ້າງ　　ເມືອງໃຫ້ມຸ່ນທະລາຍ ພຣະເອີຍ
ຂ້ອຍກໍມາພົບພໍ້　　ມັນທີ່ຫົວເມືອງ
ຂ້ອຍກໍຍໍຕະບອງຕີ　　ຜ່ານມານຕາຍມ້ວຍ
ມັນກໍສວຍເອົາໄດ້　　ພຣະຂັນແສງໄສຕໍ່
ສາຣະວັນທໍ່ຫຸ້ມ　　ກຸມນ້ອງສແນ່ງຕາຍ
ສອງຄົນລ້ອມ　　ທຳຣິດທີ່ກະທຳເດດ
ຂ້ອຍກໍກັບເພດຂັນ　　ພໍ່ຕີ້ຕົວອົກໂຂ
ເຂົາບໍ່ມີຂາມຢ້ານ　　ຫົວຊົມຊ້ອຍຊື່ນ
ເຂົານັ້ນດີ້ ລັບລົບ　　ຟັນຂ້ອຍຂາດຫົວ ແທ້ແລ້ວ
ຂ້ອຍກໍຊວາງເອົາໄດ້　　ຫົວມາຕີດຕໍ່
ກໍເລົ້າຢຽວຢ່ອນຢ້ານ　　ຄານຟ້າວແລ່ນມາ ນີ້ແລ້ວ

| | |
|---|---|
| ກໍຈຶງມາຫູບໄຫວ້ | ເຖິງອົງພຣະພີ |
| ຖວາຍເຫດໃຫ້ | ພຣະເມືອງຮູ້ຮ່າງການ ພີເອີຍ |
| ແຕ່ນັ້ນຫັຖຈັກໄດ້ | ຍິນຄຳຄຸນຄຽດ |
| ມັນກໍກື໊ວໂກດຮ້າຍ | ນີເຫັງຟາດໜອບ |
| ກູນ໊ສວາງຂນາດແທ້ | ລືເດດທິງຣິດທີ ແທ້ດາຍ |
| ຜັດແຕ່ໃນໂລກີ | ເຂດອິງເຂົ້າງ |
| (ກໍບໍ່ມີໃຜຜູ້ | ດູແຄວນລ່ວງເຂດ |
| ເຂົາຫາກຂາມເດດກ້າ | ກູທ້າວທີ່ເຊັງ ນາກແລ້ວ) |
| ກູກໍເປັນອາດອ້າງ | ໃນທີ່ນັບທະພານ |
| ດູບານເທີງ | ຖ່າຍຣະດູດິນໄດ້ |
| ອັນແຕ່ໃນທີນທ້ອງ | ປັດຖະພີພື້ນໂລກ ເຮົານີ້ |
| ໃຜຈັກມາຜານມ້າງ | ກູທ້າວບໍ່ຮ່າງນີ ແທ້ນາ |
| ເທື່ອນີ້ມັນຫາກເອົາຕົວເຂົ້າ | ເຖິງກູອາຫານສິງ ຈິງແລ້ວ |
| ກູຈັກຈັບປີ້ນແປ້ | ເປັນໜ້ຽງເນື້ອເປັນ ແທ້ແລ້ວ |
| ຄ້ອນວ່າມັນກ່າວແລ້ວ | ຕະບອງຕ່ອຍເດີນພົນ |
| ເອົາກອງຫານ | ພວກມັນມາເຕົ້າ |
| ເຂົາກໍໄຫຼຫຼານເຂົາ | ວຽງໄຊລ້ານຕົວ |
| ສຽງໂຫ່ຮ້ອງ | ລະງົມຂື້ນຣອດພົນ |
| ຍັກຢູ່ໃຕ້ລຸ່ມຟ້າ | ຂົງຂອບຈັກກະວານ |
| ໄດ້ຍິນສຽງອຶງການ | ພ່ານວນມາເຕົ້າ |
| ອືງຄະນຶງເຂົ້າ | ວຽງຫຼວງອະນັນເນກ |

ເຕັມຊູ່ດ້າວ　　　　ວຽງກວ້າງຊູ່ພາຍ
ອັນວ່ານາຍຂຸນກ້າ　　　　ເມືອງເສດຕາວັນຕົກ ກໍມາ
(ໃນທາຫຼາຍ　　　　ມືດມົນທັງຊ້າງ)
ມີທັງສິບສອງພ້ອມ　　　　ຕະນອງຂວັນເອົາແຕ່ງ
ແສນສ່ຳຫ້າວ　　　　ໄຫຼເຂົ້າຊູ່ພາຍ
ບັງແຕ່ເມືອງຫຼວງກວ້າງ　　　　ສາຣະວັນເປັນເອກ
ເຂົາໄດ້ເປັນຂ້າເຈົ້າ　　　　ລືຊື່ປ້ານປ່ອນໃພ ງ່າຍແລ້ວ
ແຕ່ນັ້ນພົນຫຼວງເຂົ້າ　　　　ວຽງໄຊອະນັນເນກ
ຊ້າງແລະມ້າ　　　　ພໍ ຕື້ຕົວອັກໂຂ ແທ້ແລ້ວ
ແຕ່ນັ້ນຍັກກໍເຕີນຮ່ຳຫ້າວ　　　　ຫຼິ ງກວດດູພົນ
ພໍປະມານເຖິງ　　　　ສີ່ ກືປາຍລ້ານ
ເຮົາຈັກລົງການສູ້　　　　ສົງຄາມຄາວເຄ່ງ
ອວນໝູ່ເຂົ້າ　　　　ໄປກຸ້ມກ່ອມເອົາ
ເມື່ອນັ້ນນາຍສມຽນເຈົ້າ　　　　ທູນອົງກອບກ່າວ
ໄຫວ້ທ່ານທ້າວ　　　　ເປັນດື່ນແຕ່ມື
ກົດເສັ້ນໄດ້　　　　ຮ້ອຍໜ່ວຍຫົວສມຸດ
ເປັນຄົນທານ　　　　ແຫ່ງພຣະອົງເປັນເຈົ້າ
ອັນວ່າປັດຖະພີລ້າ　　　　ເຫຼືອຄົນດາອັ່ງ
ທຸກຊ່ອງຊັ້ນ　　　　ແດນດ້າວປູ່ເຕັ້ນ ຖ້ວນແລ້ວ
ແຕ່ນັ້ນຫັດຈັກທ້າວ　　　　ນັບດີຊົມຊື່ນ
ແລ້ວຈຶ່ງບອກໄພ່ນ້ອຍ　　　　ດາເນື້ອແຕ່ງຕົວ

ແລ້ວຈຶ່ງບອກໃຫ້ນ້ອງ　　ທ້າວທ່ານຫັດຊະກິດ
ຄິດຊະຫຼີງທັງກິງເພັດ　　ຂີມພົນໄປໜ້າ
ຈັດພົນໃຫ້ແຕ່ນ້ອຍ　　ສິບໜ່ວຍຫົວສມຸດ
ພໍໃຫ້ເຫັນມືມັນ　　ຊົວດີ ລີຮ້າຍ
ຄັນວ່າມັນເຮັງຂ້ຽວ　　ຣິດທີແຮງແຂງເດດ
ເຮົາຈຶ່ງປັດຂອດຊ້ຳ　　ທີ່ໜ້າອອກໄປ ນ້ອງເອີຍ
ແຕ່ນັ້ນຫັດຊະກິດພ້ອມ　　ຄິດຊະຫຼີງເຂົາແຕ່ງ
ແສນສ່ຳຊ້າງ　　ບວງບ້າຍຈາກວຽງ
ອັນວ່າຄວັນໄງ່ຂື້ນ　　ລະງົມເມກມົວບົດ
ເຂົາກໍທຳຕົວເໝືອນ　　ໝູ່ດອຍດູຮ້າຍ
ຕັ້ງວ່າໃຂໃນໜ້າ　　ດັ່ງບາວບວງອອກ
ປາກຄາບງ້າວ　　ຕາກິ່ງເຫຼືອກລານ ແທ້ແລ້ວ
ບາງພ່ອງທຳກະບວນໜ້າ　　ຄືໝີເໝືອຍປ່າ
ຂາຣູບຊ້າງ　　ຕົວນັ້ນຣູບຄວາຍ
ກໍຫາກຫຼາຍສ່ຳລົ້ນ　　ແຂ້ວກິ່ງກວມຕາ
ມັນກໍຄວາເອົາດາວ　　ໜ່ວຍພຣະຈັນອົມໄວ້
ແຕ່ນັ້ນພົນຫຼວງບ້າຍ　　ວຽງໄຊໄຫຼອອກ
ຄັນຄັ່ງເຂົ້າ　　ເຖິງທ້າວມືດມົວ ແທ້ແລ້ວ
ເຂົາກໍທົນ ໆ ເຕັ້ນ　　ລະວັງອິງຊ້າງເຜືອກ
ເຂົາກໍກັບເຜດໃຫ້　　ຫົວຊ້າງພາບແສນ
ບາງພ່ອງຕົວດຽວແທ້　　ຫົວມັນພໍໝື່ນ

ມີຮວາດຫົນ ຕີນກ້ຽວກອດກອຍ
ບາງພ່ອງຫົວດຽວໄດ້ ຂາມັນພໍໝື່ນ
ມັນກໍແນບລົງໄວ້ ຂາກ້ຽວຄູ່ຕີນ
ອັນວ່າໃນປາກແຈ້ງ ມີໜ່ວຍເດືອນດາວ
ບາງພ່ອງຂຶນຄາງບາວ ປ່ອນລົງເພົາຜ້າ
ຕາແດງພ້ຽງ ຄືແສງສຸຣິເບດ
ຈິນວ່າອາກາດກ້ານ ແສງເຫຼື້ອມນາບເມືອງ
ແຕ່ນັ້ນສາຣະວັນກົມ ວັນທາທູບບາດ
ຂໍໃຫ້ພຸວະບາດທ້າວ ນອນສົງຊື່ນໃຈ ຫັ້ນຖ້ອນ
ສອງຈັກອາສາຄ້ຳ ຕາງອົງພູວະບາດ
ບຸດຣາດໄຫ້ ບຸນກວ້າງປ່າເຄືອງ ພຣະເອີຍ
ຖ້ອມກ່າວແລ້ວ ພຣະເລົາເລີຍຖາມ
ອັນວ່າອົງນາງມັນ ກໍພ່ຳນອນມາໜີ້ ນັ້ນລື ?
ແຕ່ນັ້ນສາຣະວັນກົມ ແທນກອນຊີ້ຮ່າງ
ໄຂບອກແຈ້ງ ຈອມເຈົ້າແຕ່ມີ
ອັນວ່າສິດທິເດດອ້າງ ທ້າວຊື່ຊຸບນາງ
ຫັດຖຈັກມັນ ບໍ່ມາບັງຫ້ອງ
ມີແຕ່ຫັດຊະກົດຜູ້ ຄິດຊະເຫຼີງນ້ອງນາດ ມັນແລ້ວ
ກັບທັງກົງເພັດຜູ້ ຫຼານຊົນສືບມັນ ພຣະເອີຍ
(ອັນວ່າເຂົາຝູງນີ້ ດີຂນາດເຊີງອິດ
ນາວນສົງຄາມ ກ່ອນອົງອວນໜ້າ

ເຊງວ່າຄິດຊະຫຼີງຜູ້ ໃຂໃບຫຼາບຮາດ ມັນນັ້ນ)
ມັນຫາກແຂງຂບາດກ້າ ຕະບອງຫ້າວເຊື້ອນແຂງ
ເຂົາຫາກເປັນຄົນກ້າ ເສນາຕິກແຕ່ງ ຈິງແລ້ວ
ຖວາຍແກ່ພຣະແຜ່ນຫຼ້າ ພໍຮູ້ຮ່າງກາບ ພຣະເອີຍ
ພໍເມື່ອສາມພຣະອົງຕ້ານ ບຳກັບເວົ້າຕໍ່ ກັນນັ້ນ
ອັນວ່າຍັກໃຫ່ງເຕັ້ນ ລະວັງອ້ອມມືດມົວ ແທ້ແລ້ວ
ແຕ່ນັ້ນຫັດຊະກຶດເຂົ້າ ຖາງແທ່ນສາມພຣະອົງ
ມັນກໍຊິງຄຳຖາມ ຕໍ່ບາໃທຫ້າວ
ມຶງນີ້ຊາຍຮາມນ້ອຍ ແດນໃດດັ້ງດຸ່ງ ມານີ້
ສັງເລົາບັງອາດເຂົ້າ ມາໃກ້ເຂດເມືອງ ດັ່ງນີ້
ອັນວ່າໂທດທ່ານແທ້ ຫຼຸມເກິງເຂົາທອງ ແທ້ດາຍ
ຫາແນວໜັກ ປຸບປຸນບໍ່ມີໄດ້
ແມ່ນວ່າອິນຕາເຈົ້າ ຄວງສວັນນ້ອມນ່ງວ ກໍດາຍແລ້ວ
ໃຜຈັກມາຕໍ່ສູ້ ກູຫ້າວຫ່ອນຊີພັງ ງ່າຍແລ້ວ
ເມື່ອນັ້ນສາມພຣະອົງຕ້ານ ຈາພີຍັກໃຫ່ງ
(ຊີ້ ຊີ້ໜ້າ ມັນນັ້ນບໍ່ກົວ
ຕູນີ້ ມີຫ່ອນຮູ້ ເຊື້ອຊາດແນວພີ
ມຶງຈັກມີແນວບານ ດັ່ງໃດມີແຈ້ງ)
ກູນີ້ ຊີ້ວ່າສຸຣິຍົງບານແກ້ວ ແນວອິນລົງຫຼໍ່ ຈິງແລ້ວ
ໃຜຈັກມາຕໍ່ຕ້ອງ ກູຫ້າວນອດຊີວັງ ແທ້ແລ້ວ
ກູຫາກບານໜໍ່ເຊື້ອ ພຣະເກດນະຄອນສີ ທີ່ພຸ້ນ

ອັນວ່າຝູງພີນາງ ເຜົ່າພົງຫຼາຍຄັ້ງ
ສູຊິມາຜານສູ້ ສົງຄາມໄຊຣ໌ ກູລື
ສູປ່ານາລໍ່ຫຼົບ ຊາຍກ້າຊິປ່ອຍກາບ ທ່ານເອີຍ
ສູນັ້ນເປັນດັ່ງແສງຫິ່ງຫ້ອຍ ໃສສ່ອງໃນດົງ ນັ້ນແລ້ວ
(ລອບທົ່ນຽງ ໆ ໃສ ປູ່ດຽວດົງດ້າວ
ຈັກໃສແສງໃສເຫົ້າ ທັງທະຣັງນັ້ນປ່າ ຈາເຫັ້ນ
ສູປ່າຫວັງປຽບໄດ້ ພຣະຈັນແຈ້ງໜ່ວຍສູງ ນັ້ນຖ້ອນ
ໃຫ້ສູຄືນເມືອຫ້ອງ ຫໍສູຜາສາດ ສູຖ້ອນ
ສູປ່ານາປມາດແຫ້ ກູຫ້າວບໍ່ດີ ບັກເອີຍ
ອັນນຶ່ງໃຫ້ສູຄືນໜໍ່ແກ້ວ ນາງນາດຣັດສີນີ
ສູຈົ່ງເອົານາງມາ ລົງກູດຽວນີ້
ກູຈັກວາງເວນໃຫ້ ຊີວັງສູບີບຍິງ ຈົ່ງແລ້ວ
ໂຫດທ່ານນັ້ນ ກູຫ້າວຊິປ່ອຍວາງ ທ່ານເອີຍ
ແກ່ນັ້ນຫັດຊະກຶດໄດ້ ຍິນຄຳຫ້າວກ່າວ ນານັ້ນ
ມັນກໍຊ້ຳເຣ່ງຂ້ຽວ ໃຈບ້າບໍ່ຟັງ
ອັນວ່າກະສັດຕີແກ້ວ ຣັດສີນີແຕງອ່ອນ
ນາງຫາກເປັນນ້ອງແກ້ວ ຣັດສີພຸ້ນຮ່ວມສະຖານ ທ່ານເອີຍ
ມຶງມາອຸປໂລກຕ້ານ ວ່າເປັນແມ່ມາດາ ວ່າລື
ມຶງຮ່າວມາພາງຕິວະ ຫຼອກກູໄປຊ້ອນ
ກູບໍ່ມີວາງແກ້ວ ນາງງາມນ້ອມສົ່ງ ມຶງແລ້ວ
ມີແຕ່ອາວຸດແກ້ວ ຕະບອງຫ້າວຊິສົ່ງມຶງ ຫັ້ນແລ້ວ

ກ້ອນວ່ານັນກ່າວແລ້ວ    ເດີນປ່າວລີພົນ
ເຂົາກໍອື ທືເດັ່ນ    ທົ່ງບາດາຟົ້ນ
ອັນວ່າທາງເທິງເດັ້ນ    ບິນມາສເນີເນົາ
ທາງແຜ່ນພົ້ນ    ບຸຮົ້ນສວ່ານສົນ ທັ້ນແລ້ວ
ແຕ່ນັ້ນສາຣະວັນທ້າວ    ຜີເມືອງນ້ອງພີ
ສອງພີນ້ອງ    ດຽມພ້ອມແຕ່ງການ
ຄຽນຄາດເນື້ອ    ຫຽນແທນຕະບອງສື
ທົງພຣະຂັນແສງ    ສົ່ງນານເພື່ອນຟົ້ນ
ພໍ່ດູທົ້ນ ໆ ລົ້ນ    ນານຫຼົ້ງໄຫຼມາ
ແຕ່ນັ້ນຜີທວນກຼິດ    ພານນານເຊລົ້ນ
ເຂົາກໍທົມ ໆ ກ້ອງ    ກອງຕານເນົາເລືອດ
ອັນວ່າກຼິດສຽນນ້າງ    ຕານລົ້ນແປດອັກໄຂ
ແຕ່ນັ້ນຫັດຊະກຶດທ້າວ    ຄິດຊະຫຼົ້ງນານໃຫ່ງ
ເຂົາກໍທານຕໍ່ສູ້    ສອງທ້າວປົ້ນເປັ່ງ
ກັບທັງກິງເພັດແກ້ວ    ຕະບອງແກວ່ງຕີມາ
(ທົມ ໆ ກວັດ    ແກວ່ງຕະບອງຂວາຊ້າຍ)
ເຂົາກໍໝາຍກຸມທ້າວ    ສາຣະວັນເມືອງເອກ
ເອົາໃຫ້ໄດ    ດາວນົ້ປ່າດອຍ ທ່ານເອີຍ
ແຕ່ນັ້ນສາຣະວັນທ້າວ    ຣວານມົນອົມອ່ານ
ກັບເພດຂົ້ນ    ແສນລ້ານໝູ່ມານ
ສົນ ໆ ພ້ອມ    ຕົວດຽວລ້ານຣູບ

ກວັດແກວ່ງຄ້ອນ ຕະບອງຫ້າວຄູ່ມື
ແຕ່ບັ້ນຫັດຊະກົດຮູ້ ສາຣະວັນກະທຳເດດ
ມັນກໍກັບເພດອື້ນ ສເນີດ້ານດັ້ງດຽວ
ເຂົາກໍພັນກັບອື້ນ ເວຫາເຫາະຫອບ
ກວັດແກວ່ງຄ້ອນ ຕະບອງຫ້າວທໍ່ກັນ
ແຕ່ບັ້ນສາຣະວັນຫ້າວ ທະຍານວິ່ງວຽນຫຼີບ
ຕັ້ງແຕ່ຊຸບນາບເໜືອນ ດັ່ງດຽວໂດຍລ້ານ
ມີແຕ່ຊຸບນາບຂ້ຽວ ສວານກັບຟ້າວຟັ່ງ
ສາຣະພົດເຂົ້າ ກຸມກ້ຽວມືດຕາ
ອັນວ່າກົງເພດຫ້າວ ນ້ອຍໜໍ່ຫຼານລຸງ ມັນນັ້ນ
ມັນກໍຍໍຕະບອງເພັດ ຜ່າລົງຕໍາໜ້າ
ຫັດຊະກົດຫ້າວ ຫົວຊອນກົ້ນຫັ້ງ
ຈິ່ງວ່າໜ້າຜາກລ້ານ ຫົວຄົ້ວແຕກກະຈາຍ
ຫຼົງດູ່ພ່າຍ ໆ ນ້ຳ ນອງໄຫຼຕົກເລືອດ
ມັນຮີບແກ້ ມົນແກ້ວເປົ່າຫາຍ
ແລ້ວກໍພັນຄືນສູ້ ສາຣະວັນເຊງເດດ
ເຂົາກໍອຶດອ່ອນຮ້າຍ ເຊົາຍັ້ງສວ່າງແຄນ
ແຕ່ບັ້ນສາຣະວັນຫ້າວ ເຫາະລົງໂດຍດ່ວນ
ເຖິງແຈ່ມເຈົ້າ ບຸນກວ້າງຂາບຫູນ
ມັນຫາກເຫຼືອແຮງຂ້ອຍ ສາມຊຸບຫຸ້ມຕໍ່ ເຮວັ້ນ
ຂໍເຊີນເຈົ້າໜໍ່ຟ້າ ຈອມຊ້ອຍຊ່ອຍແຮງ ແດ່ຖ້ອນ

ແຕ່ນັ້ນພູວະບາດທ້າວ ຟັງພາກສາຣະວັນ
ມັນກໍທູນທັນປຳ ຊ່ວຍແຮງປອງປ້ານ
ທັງທີເຫັນນາງພຸ້ນ ທິງພົນຂ້ຽວຊຸ່ນ
ສ່ວນວ່າຜີ ພີເຈົ້າ ບັງມ້າງບໍ່ຖອງ
ບາດານເອີ້ນ ຫາຜີພຣະພີ
ເຮົາກໍເຊົາກ່ອນທ້ອນ ສວາງສູ້ເມື່ອຍນີ້ ພີເອີຍ
ແຕ່ນັ້ນຜີເມືອງຮູ້ ບາດານຮ້ອງຮ່ຳ
ທ້າວຕ່າວໜ້າ ຫາທ້າວກ່າວຖແລງ
ສານພຣະອົງເຈົ້າ ເຊົາແຮງຄາວນີ້ງ
ບັກເຮ່ງຂ້ຽວ ພໍລ້ານລ່ວງເຖິງ
ແຕ່ນັ້ນສາຣະວັນພ້ອມ ບຸນເຮືອງພຣະເກດ
ທ້າວປ່ອຍແກ້ ສອນມ້າງໝູ່ນາງ
ຄໍຂາດມ້ວຍ ນອງເລືອດຫຼານໄຫຼ
ພົນຫຼວງມຸດ ນອກໄປດົງສ້ຽງ
ບັງແຕ່ທັດຊະກຶດທ້າວ ຄິດຊະຫຼື ງນ້ອງພີ
ສ່ວນວ່າກົງເພັດນັ້ນ ມັນມ້ວຍພ່ຳພົນ ທັ້ນແລ້ວ
ແຕ່ນັ້ນທັດຊະກຶດທ້າວ ເຫັນພົນນອງເນດ
ທັງລູກເຕົ້າ ເຂົາມ້ວຍຕຸ່ມຕາຍ
ມັນກໍຣວາຍມົນແກ້ວ ຄາຖາອົມອ່ານ
ອັນວ່າພົນພວກລ້ານ ແສນປັ້ນກໍບໍ່ຄືນ
ແຕ່ນັ້ນມັນກໍດົກໃຈປ້ານ ໜີເມືອທັງສັ້ນ

| | |
|---|---|
| ມັນກໍຂຶ້ນຂາບໄຫວ້ | ທູນໃຫ້ພີ່ຕົນ ຫັ້ນແລ້ວ |
| ມັນຫາກເຫຼືອແຮງຂ້ອຍ | ທັງຫຼາຍອຶດອ່ອນ ເສັຽແລ້ວ |
| ພົບພວກຕົ້ | ຕາຍສັ້ງບໍ່ຫຼໍ ພຣະເອີຍ |
| ມັນຫາກເຫຼືອແຮງຂ້ອຍ | ທັງສອງແສນຂນາດ |
| ມັນຫາກດີເກ່ງກ້າ | ຟັນຂ້າກໍບໍ່ຕາຍ ພຣະເອີຍ |
| ນັບແຕ່ເຮົາເຫມ້າງ | ສົມຄາມຄາວກ່ອນ |
| ເຮົາຫາກດີຕ່ອຍລົ້ມ | ກໍຍັງມ້ວຍມອດຕາຍ |
| ອັນນັ້ນແສນຊີ ດີປີ້ນເປື້ອງ | ມັນຊ້ຳວີ້ງວຽນຫຼີບ |
| ແມ່ນວ່າດີແສນທີ | ກໍບໍ່ຖອງເຖິງໄດ້ |
| ອັນນຶ່ງມັນກໍເປັນລູກເຈົ້າ | ຕົນຊື່ຣັດສີນີ |
| ມັນຈັກເຫເນືອງເອົາ | ແມ່ມັນຈັບໄດ້ |
| ຄວນເຮົາເອົາບາງແກ້ວ | ຄືນມັນເສັຽສວ່າງ ລືນໍ |
| ຈິງບໍ່ເສັຽໄພ່ນ້ອຍ | ເມືອງບ້ານແຫ່ງເຮົາ ພຣະເອີຍ |
| ແຕ່ນັ້ນທັດຈັກທ້າວ | ໂກທາຄຽດສັ່ນ |
| ເຮົາຈັກໄປອ່ອນນ້ອມ | ປະນົມນົ້ວແຫ່ງມັນ ງ່າຍລື |
| ແມ່ນວ່າລືເດດທ້າວ | ອົງເອກອືນຕາ |
| ທັງນາຣາຍ | ຊວ່າຍມັນກໍຕາມຖ້ອນ |
| ມັນຈັກປານໃດແຫ້ | ທົງຣິດທີທຳເດດ |
| ລືຈັກທົບປູ່ໄດ້ | ຕະບອງແກ້ວແຫ່ງກູ ໄດ້ເດ |
| ຄັນກູບໍ່ຂືນນາງໃຫ້ | ນີ້ມັນດ້ວຍງ່າຍ ດັ່ງນັ້ນ |
| ປ້ານແຕ່ເຫເວດເຈົ້າ | ຊິຫົວລ້ຳຫຼູ່ຂວັນ ຫັ້ນແລ້ວ |

ຄ້ອນວ່າມັນກ່າວແລ້ວ　　ເດີນປ່າວໄປຫາ
ເຂົາກໍສິບ ໆ ປົບ　　ແຕ່ງຕົວດາຫ້າງ
ທັງຊ້າງມ້າ　　ປະໂຄມຄາດເຂັນຄຳ
ກໍຫາກແຊວ ໆ ສຽງ　　ສັ່ນກະດິງຂວາຊ້າຍ
ອັນວ່າພາຍວັນຊ້າງ　　ສາຫັນຂາວເຜືອກ
ຫັດຖຈັກເກ່ງກ້າ　　ພລັນອື້ນອືວເຂັນ
ຕັ້ງແຕ່ໃນຫົນຫ້ອງ　　ເມືອງມານປັດຂອດ
ພວກທີຍັງຢູ່ຄ້າງ　　ຄາຫ້ອງປ່າໄພ
ມັນຮຽກເອີ້ນ　　ເຂົາຮີບໂຮມມາ
ມີເຫຼືອຫຼໍ　　ບຶ່ງຕົວພໍຄ້າງ
ມັນກໍຮວາຍມົນເອີ້ນ　　ເອົາມາປັດຂອດ
ຍັກຢູ່ໄຕ້ເຂດຄ້າຍ　　ຄົນໃຊ້ຊ່ວງມັນ
ອັນວ່າສອນສິບພ້ອມ　　ຕະບອງຂວັນເຂົາແຕ່ງ
ເຂົາກໍໄຫຼຫຼັ່ງລົ້ນ　　ເຕັມເຫົ້າຂອບເມືອງ
ຍັກຍິ່ງລົ້ນ　　ຮ້ອຍໜ່ວຍທົວສມຸດ
ແນວນານຍັກ　　ຮຽກເອົາມາສ້ຽງ
ແຕ່ນັ້ນຫັດຖຈັກທ້າວ　　ກະທຳເດດທົງຣິດ
ພຣະອາທິດໄວ້　　ກ້ຳຝ່າຍມືຂວາ
ຈັນໂທໃສ　　ໃສ່ມືພາຍຊ້າຍ
ກໍຫາກຍາບໆ ເຫຼື້ອມ　　ດາວຮຸ່ງເຕັມຄີງ
ຕີນມັນເກາະ　　ກຸ່ງຜາເປັນພົ້ວ

| | |
|---|---|
| ຫົວສິບຊ້ອງ | ສເມີດາວບຸອອກ |
| ນັບດ້ວຍລ້ານ | ຫົວເຂັ້ນຄາດມະນີ |
| ອັນທີຫົວເທິງນັ້ນ | ເປັນຮູບພຍາຈັກ |
| ຖືຂັນໄຊ | ຜາບມານທັງຄ້າຍ |
| ອັນວ່າເທວາດັວ | ຮັກສາພົງພາຍປ່າ |
| ພຣະກໍຫຼີ ໆລ່ຳປັ້ນ | ຜີຮ້າຍເຜດມານ |
| ເຈົ້າກໍກົວເດດແທ້ | ທະຍານວິງເວຫາ |
| ນຳກົງຈັກ | ເພິງພຣະອິນພາຍຟ້າ |
| ອາການຮ້ອນ | ນາຄານາກໃຫຍ່ |
| ເຂົາກໍໄປເພິງໄທ້ | ນາງນ້ອຍເມຄລາ |
| ແຕ່ນັ້ນທືນ ໆ ພ້ອມ | ພົນພວກຂຸນມານ |
| ເຂົາກໍທຳດົນເໜືອນ | ທໍ່ພູພໍປ້ານ |
| (ປື ລືລັ້ນ | ດາແດງເມືອງມານ |
| ຍານ ໆ ແຂ້ວ | ຂາວກ້າປົງງາ) |
| ພວກນຶ່ງຕົວໃຫຍ່ພ້ຽງ | ພຽງດັ່ງຝູງຄວາຍ |
| ຂາຍາວສູງ | ຊົວວານສເມີພ້ຽງ |
| ພວກນຶ່ງໂຂໃບໜ້າ | ດານັບຫຼາບເຫຼືອກ |
| ມືນມັ້ງກັ້ງ | ກົງລໍ້ທໍ່ກັນ |
| ພວກນຶ່ງດາແດງພ້ຽງ | ສເມີດັ່ງກອງໄຟ |
| ມັນກໍໂກວກົງຈັກ | ແກວ່ງຕະບອງເຟືອຍຟ້ອນ |
| ພວກນຶ່ງຖອນກົກໄມ້ | ທັງກໍກົກຮາກ |

ຫົງກິ່ງກ້ານ ກຳລ້າວລາກມາ
ພວກບົ່ງສວາຍເອົາກ້ອນ ຜາຫຼວງຄົນໜ່ວຍ
ຈັບຫອບຫົ້ວ ເຫາະລ້ຳລ່ວງມາ
ພວກບົ່ງປາກແລ່ງກວ້າງ ເຫົ້າຮອດຄຸງຫູ
ອັນວ່າຮູດັງຫຼົ່ນ ໜ່ວຍກະບຸງກ້ວຍຊ້າ
ຕໂຊກ້ຳ ຝູງມານກະທຳເດດ
ເຂົາກໍທຳເດດໃຫ້ ບາທ້າວຈິດລະອາ ແທ້ແລ້ວ
ອັນວ່າສາມພຣະອົງເຈົ້າ ເຫັນມານກະທຳເດດ
ເຂົາຫາກກັບເພດໃຫ້ ພໍ່ຕື່ກົວອັກໂຂ
ເມື່ອນັ້ນໂພທິບານເຈົ້າ ບໍລິນພຣະເກດ
ເຈົ້າກໍຮູ້ເພດພ້ຽງ ຜີເຖົ້າແຕ່ງຕົວ
ທ້າວຈິ່ງຕ້ານ ຖາມທ່ານສາຣະວັນ
ອັນວ່າຫັດຈັກມັນ ພ່ຳມວນມາພ້ອມ ບໍ່ລື ?
ແຕ່ນັ້ນສາຣະວັນໄຫວ້ ອົງການທູນບອກ
ອັນວ່າອົງທ່ານທ້າວ ມາໜີ້ພ່ຳພົນ ພຣະເອີຍ
ອັນທີ່ທົງຄໍຊ້າງ ນີ້ໝ່ຽວສຸຣິຍາ
ດາວແສງໃສ ທົ່ວຖິງຫົວຊ້ອງ
ຫາກແມ່ນໂຕນັບຜູ້ ຫັດຈັກເຊັ່ງເດດ ຈິ່ງແລ້ວ
ໃຜບໍ່ກັ້ງຕໍ່ໄດ້ ຣິດທີກ້າແກ່ນແຂງ ພຣະເອີຍ
ແຕ່ນັ້ນພຣະບາດຕ້ານ ຂານວ່າປ່າກົວ
ໄວ້ແກ່ກູອົງດຽວ ຊິຫງ່ຳຫົວມັນຫຼົ່ນ

24/VII

ສອງຈິ່ງພາກັນມ້າງ ນາງໝູ່ປ່າຖອຍ

ກອຍໃຈຫານຄິບດຽວ ປ່າປອມມືໄວ້

ເອົາໃຫ້ມັນມອບມ້ວຍ ຫືດຽວປ່າຈິງ

ປ່າໃຫ້ມັນຕ່າວໜ້າ ຄືນສູ້ຕໍ່ມື

ຄ້ອນວ່າທ້າວກ່າວແລ້ວ ຊ້ອຍຊື່ນຫຸມຫິວ

ສາມພຣະອິງຄຍບ ໝູ່ນາງຂິ້ນຂ້ຽວ

(ເອົາກໍສາຣະວິນຫ້າງ ຕະບອງສືຫອກດາບ

ທັງໜ້າໄມ້ ປືນພ້ອມພ່ຳນວນ)

ເຈົ້າກໍບອກໝໍ່ທ້າວ ສອງຄາດລະວັງດີ

ເທື່ອນັ້ນນາງຫຼວງຫຼາຍ ໝື່ນກືກອງລົ້ນ

ເມື່ອນັ້ນບາຄານທ້າວ ວາງສອນໄສປ່ອຍ

ນາງລ່າວລົ້ນ ຫິວກິ້ງຂາດສະເດນ

ທ້າວປ່ອຍຊ້າ ວາງວິ່ງສອງທື່

ອັນວ່າຜີນາງນຸດ ນອ.ວຕາຍດິງສ້ຽງ

ແຕ່ນັ້ນຫັຖຈັກທ້າວ ເຫັນພິນລົ້ນໄຂວ່

ທ້າວເປົ່າແກ້ ມິນກູ້ຮຽກຄືນ

ອັນວ່າພິນກືລົ້ນ ເລີຍຄືນເບືອກຍິ່ງ

ທ້າວປ່ອຍຊ້ຳ ວາງແກ້ວລູກສອນ

ສາມທີຊ້ຳ ທະຣິງບາດໂລມເທັງ

ສອນໄສບຸ ກ່ຽວນາງມິວລົ້ນ

ເອົາກໍເຄງ ໆ ພ້ອມ ຜີນາງຂ້ຽວຕໍ່

(ຂັບຂອດຂ້ຽວ ຂບັບຕັ້ງຕົ້ນແຮງ
ແສນນອດນ້ຽນ ຄົ້ນຄອບບາລີ)
ເຂົາກໍສວາຍທິວຕີດ- ຕໍ່ກັບຄືນສູ້
ແຕ່ບັ້ນພູມີທ້າວ ສາມພຣະອົງນ້ອງພີ່
ພຣະກໍກວັດແກວ່ງເປື້ອງ ພຣະຂັບສູ້ຕໍ່ ນີ
ສາຣະວັນທ້າວ ພ້ອມພ່ຳນີເມືອງ
ເຈົ້າກໍພາກັນເທ ໝູ່ນາບທັງພົ້ນ
ທ້າວປ່ອຍຊ້ຳ ວາງເດດສອບຊັດ
ທະບານເວຫາ ປ່ອຍສອບໄສ້ນ້າງ
(ສອບສແວງຕ້ອງ ຕຳນາບລົ້ມທ່າວ
ປານດັ່ງເຂົາລ່ວງປ້ຳ- ຂອບລົ້ມໄຂວ່ຂືນ)
ທັວຂາດຂວ້ນ ນອງເລືອດແຫຼວໄຫຼ
ເປັນແປວລຸກ ທົ່ວແດນດູຮ້າຍ
ບັງເລົາໄຫຼລັ້ງລົ້ນ ອາກາດມົວບົດ
ສາມພຣະອົງເທ ບໍ່ຖອຍຖົມນ້າງ
ອັນວ່າພົງຫຸລີກົ້ວ ກາງຫາວມົວເມກ
ອັນວ່າສຸຣິເຍດຍ້າຍ ຫຼຽວເວັ້ນຫຼີກຫາງ
ຮັງສີເສົ້າ ເສົາສເມນເພື່ອນຟັ້ງ
ນ້ຳສມຸດຂາດທ້າງ ພຣະຈັນເສົ້າບໍ່ໃສ
ເຈັດວັນໄດ້ ເປັນຄວັນຂຽວອຸ່ນ
ນິດອ ຕ ຝູງຮ້າຍໝູ່ນາບ

| | |
|---|---|
| ບາຄານທ້າວ | ຫັງຜີຂ້ຽວເຄ່ງ |
| ແຫທອດທ້າວ | ນາບກົ້ງເກືອບກອງ |
| ບາກໍບາຍຫົວຄຶ້ມ | ຕົກໂກແສນໂຍດ |
| ຕົວໃດຄຶກແກວ່ງຄຶ້ມ | ຫົວນັ້ນກໍຈຶ່ງຕາຍ |
| ຕົວບໍ່ທັນບາຍຄຶ້ມ | ຈັບມາດິດຕໍ່ ຄືນແລ້ວ |
| ບັ້ງເລົ້າກັບເພດພ້ຽງ | ພໍລ້ານເປ່ງມາ |
| ເຂົາກໍສິບ ໆ ເຕັ້ນ | ຕະບອງຕີກວັດແກວ່ງ |
| ແສງເບືອກບ້ວຍ | ຍິນຍ້າຍຍຶ່ງມາ |
| ເຂົາກໍທຳເດດກ້າ | ພັ້ນບຶ່ງໄຟກັບ |
| ເພນີລິດ | ຄຶ່ນເຄງຄຸງຟ້າ |
| ບາງພ່ອງຄອບເອົາໄດ້ | ບຸງບາງພາດແກວ່ງ ນາບັ້ນ |
| ນັບດ້ວຍລ້ານ | ລົງເທົ້າຮອດພຣະອົງ |
| ກໍຫາກທົນ ໆ ກ້ອງ | ປະຖາພີເພືອບຟັ່ງ |
| ຍັກໃຫ່ງຫຸ້ນ | ເທງລ້ອມໝື່ນອັກໂຂ |
| ແກ່ນັ້ນໄພທີສັດເຈົ້າ | ທັງຜີສອງອ່ອນ |
| ຊະຊ່ອນໜ້າ | ເທັນແລ້ວເລົ້າຫົວ |
| ອັນວ່າສາມພຣະອົງຕ້ານ | ບຳກັບຊິນຊຶ່ນ |
| ຄວນທີ່ກວັດແກວ່ງຜ້າ | ເທັງຊ້ຳສົງນັບ ຊອບແລ້ວ |
| ແຕ່ນັ້ນທ້າວປ່າຍເປື້ອງ | ກວັດແກວ່ງພູສາ |
| ເປັນລົມເທັງ | ຫອບມານມົວລົ້ນ |
| ເປັນກຽວພ້ານ | ພານຫົວກຸດຂາດ |

ດີແກ່ລົມສົງບູ້    ຫົວກົ໊ງເກືອບກະເດບ
ຫົວນາບກົ໊ງ    ໄປໄກແສນໂຍດ
ຕົກຂອກກ້າຍ    ເຂົາຂ້ອນຂອບສເນນ
ເຂົາກໍແຊວ ໆ ດັ໊ນ    ຫົວນາຕິດຕໍ່
ກໍບໍ່ມີພົບພໍ້    ຫົວນັ້ນທີໃດ
ບັກກໍທົນ ໆ ດົ໊ນ    ກອງຕາຍເຕັມແຜ່ນ
ເຂົາກໍມຸດນອດສົ໊ນ    ຂຸນທ້າວບໍ່ຫຼໍ
ຫັດຊະກຶດຜູ້    ຄິດຊະຫຼຶງສອງອ່ອນ
ຕາພ່ຳພ້ອມ    ພົນລ້ານມອດຊີວັງ ແທ້ແລ້ວ
ບັງແຕ່ຫັດຖຈັກທ້າວ    ວິຊາເຊັງເດດ
ເຫັນທີຄົນລ່າວລົ໊ນ    ຕາຍສ້ຽງບໍ່ຫຼໍ
ອັນວ່າພາຍວັນຊ້າງ    ສາຫັນລອຍເລືອດ
ເປັນແມ່ນ້ຳ    ໄຫຼຖ້ວມຖັ່ງນານ
ຕັ້ງຫາກອາກາດຮ້ອນ    ເຖິງພົນຂ້ຽວຂຸ່ນ
ຄວັນມືດກຸ້ມ    ເຖິງໄທ້ເທພອິນ ແທ້ແລ້ວ
ແຕ່ນັ້ນກົນນະເຣັດນ້ອຍ    ນາງເທພລີລາ
ນາງກໍຫຼິງແລເຫັນ    ມືດມົວຄຸງຟ້າ
ອັນວ່າອາທິດເຈົ໊າ    ຈັນໂທຫຽວຫຼົກ
ເມຄລາລ່ວງລ້ຳ    ໄລເວັ້ນວ່າງທາງ
ນາງກໍທົງພຣະໄທຮ້ອນ    ເຖິງອວນອົງລູກ
ອັນນີ້ຮ້ອຍວ່າບຸດຣາດນ້ອຍ    ເຫນ້າງໝູ່ນານ ບໍ່ຢ່າແລ້ວ

ແຕ່ນັ້ນນາງນາດນ້ອຍ ຕັດສ່ອງສໍຣະບານ
ກໍຈຶ່ງເຫັນນາຄານ ຄ່ອຍຄິງບັງໜັ້ນ
ນາງກໍຫາຍຄຳຮ້ອນ ມະໄນໃນຊົມຊື່ນ
ເຫັນແຕ່ນານນອດມ້ຽນ ສອງທ້າວປູ່ກະເສີນ ຫັ້ນແລ້ວ
ບັດນີ້ຈັກກ່າວທັຖຈັກທ້າວ ຂຸນມານມີເດດ
ມັນກໍມົນເປົ່າແກ້ ພົນລ້ານຈຸ່ມຈົມ
ແມ່ນວ່າມັນຮວາຍໄຫ້ ແສນທີຮ້ອນເລົ່າ ກໍດາຍແລ້ວ
ອັນວ່າເລືອດບຶ່ງບູ້ ເປັນຫ້ວຍຮ່ອນໄຫຼ
ນາງພ່ອງກາຍເປັນເຊືອ ບຸງບອງວັນເຫຼືອກ
ເຕັມດ່ານດ້າວ ດຽວນີ້ສືບມາ ເຈົ້າເອີຍ
ແຕ່ນັ້ນທັຖຈັກທ້າວ ມະໄນຂັນຂຽວຂຸ່ນ
ຄັນວ່າກູບໍ່ມ້ຽນ ບໍ່ມີໃຫ້ຂົມເຫັງ ງ່າຍແລ້ວ
ຄ້ອນວ່າມັນກ່າວແລ້ວ ກະທຳເດດທິງຣິດ
ມັນກໍທຳຕົວເໜືອນ ຮຸບດອຍໂດຍລ້ານ
ອັນວ່າຫົວສິບຊ້ອງ ລຸງລັງທິງເຄືອງ
ເຂົາກໍກວັດແກວ່ງເປື້ອງ ຜາລ້ານສິ່ງຕະບອງ
ແຕ່ນັ້ນສາຣະວັນທ້າວ ຜີເນືອງສອງອ່ອນ
ເຕີນໃຫ້ທ້າວ ໄກວຜ້າປ່ານານ
ທ້າວແກວ່ງເປື້ອງ ໄກວຟາດພູສາ
ເປັນລົມເຫັງ ຫອບມານປິ່ວເປື້ອງ
ອັນວ່າອາຄົມທ້າວ ທັຖຈັກຫາຍສວ່າງ

ກໍເພື່ອຜ້າທົບທ້າວ ລົມບູ້ສົ່ງໜີ
ອັນວ່າບາຄານທ້າວ ຫົວຊົມຊ້ອຍຊື່ນ
ເວົ້າຕໍ່ອ້າຍ ຫົວລໍ້ຫຼໍ່ ນາງ
ແຕ່ນັ້ນທັດຈັກຮູ້ ເຕໂຊນີມາກ
ມັນກໍ ນີຣະມິດນ້ຳ ນອງຖ້ວມຖຸ່ມນາ
ເຖິງແກ່ນທ້າວ ສາມອ່ອນອິງກະສັດ
ນາຍບໍ່ຍົກ- ແກວ່ງພູສາເປື້ອງ
ເຕໂຊບູ້ ນະທີຫຼວງແຫ້ງໄຄ່
ສາມນອດຜູ້ ບຸນກວ້າງປູ່ສະຖຽນ ຫັ້ນແລ້ວ
ແຕ່ນັ້ນທັດຈັກຮູ້ ນະທີຫຼວງບົກຂາດ
ຍັກເດືອດຮ້ອນ ຣົມຂ້ອນຂອດກະຫາຍ
ຍັກບໍ່ຊ້າ ກະທຳເດດໄຟເຜົາ
ເປັນລົມເຫັງ ຫອບໄຟມາໃກ້
ອັນວ່າພູທອນໄທ້ ຫົວຊົມຊ້ອຍຊື່ນ
ພູວະນາດທ້າວ ໂກວຜ້າຜ່າໄຟ
ເລີຍເລົາເປັນແມ່ນ້ຳ ຖົມເມກໄຟພື
ນະທີຫຼວງໃຫຼ ຜ່າໄຟຫາຍຮ້ອນ
ພູທອນທ້າວ ທັງຜີສາມອ່ອນ
ເລີຍເລົາກຼີ ງລ່ຳຢ້ຽມ ນາງຕັ້ງແຕ່ງກົນ
ແຕ່ນັ້ນທັດຈັກທ້າວ ທົງທວງທັງໂສກ
ກູກໍທຳເດດໃຫ້ ເຂົາຮູ້ຮ່ອມກົນ ດັ່ງນີ້

ຄວນກູທ່າອຶດທີໃຫ້ ເປັນກິນການໃໝ່
ແມ່ນຈັກມ້ຽນຊືວໄດ້ ລາງແລ້ວບໍ່ແໜງ ແທ້ແລ້ວ
ຄ້ອນວ່າມັນຮ່ຳແລ້ວ ກະທຳເດດທິງອຶດ
ຖືຫວນແສງ ໜ່ວຍພຣະຈັນຂວາຊ້າຍ
ປາກຄາບແກ້ວ ດວງເດດພຣະອາທິດ
ຕີນມັນເກາະ ໜ່ວຍດາວໂດຍລ້ານ
ຜານ ໆ ເຫຼື້ອມ ຫິວຫິງຖານຍອດ
ເປັນຮູບທ້າວ ພຣະອິນສົ້ວຊໍ່ຂຽວ
ອັນວ່າສອງຝ່າຍແກ້ມ ບ້ອຍປາດທິວນານ
ທັງຄໍດາງ ໝູ່ແຂນຂາພ້ອມ
ມີແຕ່ທິວນານຊ້ອງ ລະວັງອິງຊິງເດືອງ
ຖືໝູ່ໄມ້ ຕະບອງທ້າວຣວາດທະນູ
ອັນວ່າສອງຫູໄວ້ ໂສມພິມນີແປດ
ໜ້າສີດ້ານ ດູພ້ຽງເພດພິມ
ມັນກໍມິນທິນກົ້ງ ເຫາະວົງເວຫາ
ນຳກິ່ງຈັກ ຈາກຊູຊີງນ້າງ
ແຕ່ນັ້ນສາຣະວັນຮູ້ ເຫັນມັນກະທຳເດດ
ມັນກໍກັບເພດພ້ຽງ ພລັນດ້ານເພດມັນ
ສາຣະວັນທ້າວ ທູນອິງກອນກ່າວ
ຂໍໃຫ້ພຣະບາດທ້າວ ນອນສົ້ງຊື້ນໃຈ ພຣະເອີຍ
ເຂືອຈັກອາສາຄ້ຳ ລອງແຮງດາງຊື້ນ

| | |
|---|---|
| ຄັນຫາກອິດອ່ອນແລ້ວ | ເຊີນເຈົ້າຊ່ອຍແຮງ ຫັ້ນຖ້ອນ |
| ແຕ່ນັ້ນສາຣະວັນເຈົ້າ | ພີເມືອງພຣະພີ |
| ຂາກໍທຳເດນມ້າງ | ຊິນສູ້ສິງຕະບອງ |
| ເຂົາກໍພັນກັນຂື້ນ | ກາງຫາວເຫາະຫອບ |
| ຂາກໍຟັນຕໍ່ຕ້ານ | ພຣະຂັນສູ້ປີນເປັ້ງ |
| ເມື່ອນັ້ນທັດຈັກທ້າວ | ໄກວຕະບອງເປື້ອງປີນ |
| ຈິນວ່າອາທິດຮ້ອນ | ເໝືອນໄໝ້ເປ່ງແປວ |
| ເຂືອກໍໂຮມກັນສູ້ | ສອງຄິນຫຸ້ມຕໍ່ |
| ມັນກໍຮ້ອນເຮ່ງຂ້ຽວ | ໄກວຖ້ອນແກວ່ງຕະບອງ |
| ມັນຫາກລືກູແລ້ວ | ທັດຈັກກ້າແກ່ນ ຈິງແລ້ວ |
| ຂາກໍອິດອ່ອນຮ້າຍ | ຊິນສູ້ບໍ່ໄຫວ |
| ສອງກໍເຊຊວນລົ້ມ | ໜີມັນເລີຍຜ່າຍ |
| ເຖິງແຈ່ມເຈົ້າ | ຫິວລໍ້ຕໍ່ກັນ |
| ມັນຕັ້ງເຫຼືອແຮງຂ້ອຍ | ທັງສອງອິດອ່ອນ ເສັ້ງແລ້ວ |
| ມັນຫາກດີຂນາດກ້າ | ສອງຂ້າບໍ່ໄຫວ ພຣະເອີຍ |
| ແຕ່ນັ້ນທັດຈັກຮູ້ | ສອງພຣະອົງໜີຫຼີກ |
| ມັນກໍໂດດໄຕ່ເຕັ້ນ | ຕາມສົ້ນໄລ່ນຳ |
| ເລີຍເລົ້າຖອງເຖິງທ້າວ | ກຸມານພຣະເກດ |
| ທ້າວເລົ້າຕ້ານ | ຂານທ້າວບໍ່ນານ |
| ມັນຈັກເສັ້ງເມືອງກວ້າງ | ນັນທະພານຂອງທ່ານ ຈິງແລ້ວ |
| ມັນຈັກເສັ້ງຍອດແກ້ວ | ທັງຂ້າໄພ່ເມືອງ ທ່ານນັ້ນ |

ໃຫ້ທ່ານຄືນເມືອສ້າງ ຫອມພິນວຸ້ນໄພ່ ເສັງຖ້ອນ
ແລ້ວຈິງຄືນສົງໃຫ້ ນາງເທງົ້າແມ່ເຮົາ ທ່ານເອີຍ
ເຮົາຈັກເອົາເມືອສ້າງ ທໍປາງສເວີຍຣາດ ເມືອງພຸ້ນ
ເຮົາຈັກວາງມອບໃຫ້ ເມືອງບ້ານທ່ານທິງ ດອກນາ
ອັນນຶ່ງໃຜຫ່ອນເອົາຕີນເຂົ້າ ເຮວຄູຣົບຮໍ່ ດັ່ງນີ້
ທ່ານຫາກໄດ້ກໍ່ສ້າງ ສິນຊ້ອນຊາດຫຼັງ
ທ່ານຍັງເປັນສິດແກ້ວ ທຽມແທນຕີນເຮົາ
ເຮົາບັງເທສນາສອນ ສັ່ງເອງຈຳໄວ້
ແຕ່ນັ້ນຫັດຈັກໄດ້ ຍິນຄຳນາກ່າວ ມານັ້ນ
ມັນກໍຄືວໂກດກ້າ ຄຳຄ້ອນກ່າວຫານ
ອັນແຕ່ໄດ້ໂລກນີ້ ທິງເດດໄອສວນ
ໃຜຈັກມາເປັນຄຣູ ສັ່ງສອນກູໄດ້
ອັນວ່າຄຣູກູນັ້ນ ນາຣາຍພຍາເທວດ ພາຍພຸ້ນ
ນຶ່ງນີ້ເດັກດັ່ງໃນ້ ສະຫາວຕ້ານວ່າຄຣູ ນັ້ນລື
ຈັກໃຫ້ເວນນາງໃຫ້ ຂືນມຶງປ່າປ່ວງ ໄປເຖີ້ນ
ຊີວິດກູບໍ່ສ້ຽງ ຕະບອງແກ້ວຊີຍື່ນມຶງ ຫັ້ນແລ້ວ
ໃຫ້ກູເວນນາງແກ້ວ ເວນມຶງຢ່າໂງ່ ຈິ່ງເຖີ້ນ
ຊາວທີ່ແນວສຶກກ້າ ບໍ່ມີປ້ານປ່ອນໃຜ ງ່າຍແລ້ວ
ຄ້ອນວ່າມັນກ່າວແລ້ວ ກວັດແກວ່ງຕະບອງເພັດ
ຫົວຊອນນຸ ທົ່ວຄືງປານເໜັ້ນ
ແຕ່ນັ້ນຍັກໄຕ່ເຕັ້ນ ກວັດແກວ່ງພຣະຂັນແສງ

ຫົງຂວັນເພັດ    ແກວ່ງຕະບອງສຽງຫ້າວ
ເມື່ອນັ້ນບຸນເຮືອງຫ້າວ    ຫົວຊິນຊ້ອຍຊື່ນ
ຫ້າວປ່ອຍມ້າງ    ວາງແກ້ວລູກສອນ
ສອນຜ່າມ້າງ    ທະລາຍມຸ່ນຫົວສະເດນ
ມັນກໍຫັນສວາຍຕິດ    ຕໍ່ຕົວຄືນສູ້
ແຕ່ນັ້ນຫ້າວຮຸ່ງຮູ້    ເຊີງເດດພີຫຼວງ
ບາຄານວາງ    ປ່ອຍແຫວນຖຸບຖິ້ມ
ເມື່ອນັ້ນມະນີໄຊແກ້ວ    ຫັນມະໂຮງລູກປະເສີດ
ແຫວນກໍສັບສອດກ້ຽວ    ຜັນເຂົ້າໃສ່ຫົວ
ເປັນໄຟຮ້ອນ    ແສນແປວລຸກລວາບ
ບັກໄຫ່ງຟ້າວ    ພລັນເຂົ້າສູ່ນະທີ
ມັນກໍເຊຊວານຮ້ອນ    ລົງນະທີຊວາດຈຸ່ມ
ໄຟກໍຍັງເລົາຮ້ອນ    ຜັນເຂົ້າຮອດໃຈ
ມັນກໍ ລືລາຍ້າຍ    ພຣະຖຸງຄາຮອດຝັ່ງ
ມັນກໍຄຶດຮ່ຳຮູ້    ຄະນຶງແຈ້ງຕໍ່ການ
ມັນກໍ ດີຂບາດແທ້    ເປັນເດດໄຟເຜົາ ດັ່ງນີ້
ຮ້ອນຫີມະນີໄຊແຫວນ    ຖືກກູປາງນີ້
ຄວນກູໄປເອົານ້ຳບໍ່ແກ້ວ    ໃສ່ສ່ອງຄູຫາ
ເອົາມາຫາ    ລູບເຈືອຈານໄວ້
ຄ້ອນວ່ານັ້ນຮ່ຳແລ້ວ    ເຮວຮີບພລັນໄປ
ເຖິງຄູຫາ    ບໍ່ມະນີໄຊແກ້ວ

ມັນກໍພ່າຍເອົານ້ຳ　　ມະນີໄຊແກ້ວແຊ່
ເລີຍເລົ່າຫາຍພິດຮ້ອນ　　ສະບາຍເນື້ອຢູ່ເປັນ ຫັ້ນແລ້ວ
ພໍເມື່ອຕາວັນຂຶ້ນ　　ສວາຍມາພໍທ່ຽງ
ມັນກໍເອົານ້ຳບໍ່ແກ້ວ　　ມາພ້ອມຈຸ່ມເຈືອ
ແລ້ວເລົ່າຄືນມາສູ້　　ສາມພຣະອົງນ້ອງພີ
ບາບ່າວທ້າວ　　ເຫັນແລ້ວບໍ່ກົວ
ອັນວ່າຕົວມັນຜູ້　　ຄືນມາຣີບຮໍ່ ເຮົາແລ້ວ
ສ່ວນວ່າແຫວນເພັດແກ້ວ　　ຫາຍຮ້ອນແທ່ງມັນ ພຣະເອີຍ
ເມື່ອນັ້ນທ້າວເລົ່າເປື້ອງ　　ກວັດແກວ່ງພູສາ
ເປັນລົມພັດ　　ຟາດຕີຍັງນ້ຳ
ອັນວ່ານ້ຳບໍ່ແກ້ວ　　ເຂີນຂາດໃນຫົວ
ເປັນຜຸຍຜົງ　　ເປົ່າໄພເລີຍຮ້ອນ
ແຕ່ນັ້ນມັນກໍເຮວພລັນຟ້າວ　　ພ່າຍເອົານ້ຳໃສ່
ນ້ຳຄືກແລ້ວ　　ຫາຍຮ້ອນເລົ່າເປັນ
ພໍປະມານແລ້ວ　　ລົມໃສຮ້ອນເຮ່ງ
ເລົ່າເລົ່າຮ້ອນເຮ່ງຂ້ຽງ　　ຫຼາຍລົ້ນກວ່າຫຼັງ
ມັນກໍພຽນພ່ຳໄວ້　　ມົນພອກກາຫົວ
ທຳພຽນຫວິດ　　ບໍ່ຂາດຫົວເຈືອໄວ້
ແຕ່ນັ້ນສາຣະວັນຮູ້　　ກົງໃຈມັນຢູ່
ມັນກໍທູນເຜົ່າຜູ້　　ເປັນເຈົ້າເລົ່າການ
ແມ່ນວ່າເຮົາຈັກຍິງມັນໃຫ້　　ແສນທີຮ້ອຍເລົ່າ ກໍດາຍແລ້ວ

ກໍບໍ່ມຸດມອດສິ້ນ ໃຈແຫ້ແຫ່ງມັນ ພຣະເອີຍ
ເຫດວ່າກິງໃຈທ້າວ ຫັດຈັກຫີຫຼີກ ເສັງນັ້ນ
ມັນຫາກໄປຝາກໄວ້ ດອມເຈົ້າເທວດສຸວັນ ທີພຸ້ນ
ລືຈັກດັບພຣະຂັນສ້ຽງ ຊີວັງມັນບຸດມອດ ເປັນນັ້ນ
ດັບບໍ່ໄດ້ສິງນັ້ນ ຣາເຈົ້າປ່າດອງ ພຣະເອີຍ
ແຕ່ນັ້ນທ້າວຕອບຕ້ານ ຈາຕໍ່ສາຣະວັນ
ເຮົາຈັກທຳປະການໃດ ຈິງຊິເອົາມາໄດ້
ແຕ່ນັ້ນສາຣະວັນໄຫວ້ ທູນອົງກອບກ່າວ
ກໍຫາກດູເລີດລ້ຳ ຣິດທີກ້າເກີງອິນ ແຫ້ແລ້ວ
ກໍຫາກລືຊາລ້ຳ ນາຣາຍພຍາເທວດ
ຍັກຢູ່ໃຕ້ແຜ່ນຫຼ້າ ເປັນນ້ອຍແຫ່ງມັນ ພຣະເອີຍ
ລືຈັກໄປເອົາໄດ້ ສາຍໃຈກໍບິນຍາກ ເສັງແລ້ວ
ລືອາດເອົາງ່າຍໄດ້ ມີຮູ້ທ່ອນເຫັນ ພຣະເອີຍ
ແຕ່ນັ້ນພູວະນາດທ້າວ ຄະນິງຮ່ຳເພິງຄຶດ
ຄວນໃຫ້ພູສາໄປ ຫຼອກຫຼອນຫຼາງຊິໄດ້
ພຣະຈິງບາຍເອົາຜ້າ ພູສາກວັດແກວ່ງ
ເປັນຮູບເພື້ອ ຄະນາເຕັ້ນເຜັ້ນຜຍອງ
ກວາງກໍເຫາະວຽນລ້ອມ ຈັກກະວານສາມເລົ້າ
ເລີຍລ່ວງເຂົ້າ ເຖິງເກົ້າຮອດເມືອງ
ແຕ່ນັ້ນບຸນເຮືອງເຈົ້າ ນາຣາຍພຍາເທວດ
ເຈົ້າກໍໄປສູ່ຫ້ອງ ພຣະອິນເຈົ້າຂ່ວງສນາມ ທີພຸ້ນ

ແຕ່ນັ້ນກວາງທອງຜ້າ　　ພູສາເຫັນແມ່
ກວາງກໍຫຽວລຽບລ້ອມ　　ກິນຫຽ້າອ່ອນຂຽວ
ແຄມຕີນຕ້າຍ　　ສາກິນເມືອງໃຫ່ຽ
ທຸກຄ່ຳເຊົ້າ　　ຫຽວອ້ອມລຽບກິນ
ແຕ່ນັ້ນກິງໃຈທ້າວ　　ຫັດຈັກເຫັນມໍ່
ຄຶດຕໍ່ເນື້ອ　　ເຫັນແລ້ວປາກກິນ
ອັນວ່າໂຕມັນຜູ້　　ຫັດຈັກທິງເຄື່ອງ
ມັນກໍເຮວເຜົ່າຜູ້　　ບາທ້າວພ່ຳບານ ແທ້ແລ້ວ
ອັນນຶ່ງບໍ່ໄດ້ເດີນດ່ານດ້າວ　　ຫາໝູ່ຫວາຍທອງ
ເປັນອາຫານ　　ເຄື່ອງຄາວກາງດ້າວ
ໃຈມັນຮ້ອນ　　ເຫັນກວາງຄຸ້ນປາກ
ມັນກໍຄອງວ່າເນື້ອ　　ຜບອງເຕັ້ນໄລ່ກວາງ
ແຕ່ນັ້ນກວາງທອງຜ້າ　　ພູສາເຫັນແມ່
ແມ່ນແຈບແຈ້ງ　　ມັນນັ້ນທ່ຽງຈິງ
ກວາງຈິ່ງອຸບາຍເຕັ້ນ　　ທຳກິນລວງລື້
ຕີບິວະໃຫ້　　ບັນນັ້ນໄລ່ຕາມ ແທ້ແລ້ວ
ເລີຍເລົ້າເຖິງແຫ່ງຫ້ອງ　　ເຂົ້າດ່ານດອນຂວາງ
ອັນວ່າກວາງທອງຜ້າ　　ພູສາລັດຊ່ອງ
ໄບບ່ອງກຸ້ມ　　ຄຸມໄດ້ດ່າວຄືນ
ເລີຍເລົ້າດອງເຖິງທ້າວ　　ສາມພຣະອົງລືເດດ
ຜ້າກໍກັບເພດຂຶ້ນ　　ພລັບຕຸ້ມທໍ່ເອົາ

ເອົາບັງຫົວໃຈທ້າວ ຫັຖຈັກເຊງເດດ
ຜ້າກໍເພາະຫອບເຕັ້ນ ເຖິງທ້າວທີເຊງ
ແຕ່ນັ້ນບາໄທທ້າວ ໄຂຕູຫຼີງລ່ຳ
ດູປລາດລ້ຳ ພຣະຂັນເປື້ອງຜ່າລິງ
ທ້າວກໍຕັດຂາດແລ້ວ ສາຍເຊືອກກິງໃຈ
ເປັນຜຸຍຜິງ ມຸ່ນທະລາຍຫຼາຍບັ້ນ
(ກິງໃຈທ້າວ ຫັຖຈັກເລີຍຂາດ
ຫາບ່ອນບັ້ນ ດີໄດ້ບໍ່ມີ)
ພູວະນາດເຈົ້າ ບາຍຫ່ວງກິງໃຈ
ບໍໄບງສູງ ຍືນມານຫຼີງຢ້ຽມ
ມຶງຈິງຫຼີງດູທ້ອນ ຢ່າດິນຣິບຕໍ່ ກູຖ້ອນ
ດີທີ່ກົ້ມໜ້າໄວ້ ຄອງຖ້າບ່ອນຊີຕາຍ ນັ້ນຖ້ອນ
ເຮົາຫາກຂືນຄຳຫ້າມ ຫົວທີດ້ວຍງ່າຍ
ມຶງຫາກດິນດ່ວນຮ້າຍ ຫາເບື້ອງບ່ອນຕາຍ ທ່ານແລ້ວ
ແຕ່ນັ້ນຫັຖຈັກຮູ້ ກິງໃຈມັນຂາດ
ມັນກໍທິງພຣະເນດນ້ອຍ ຣຳໜ້າຖຸ່ມແຖວ
ແມ່ນວ່າກູຈັກບັງຄົມໄຫວ້ ຂໍຍອມບັງໂທດ ກໍຕາຍແລ້ວ
ແມ່ນວ່າໃຈຂາດແລ້ວ ແສນຊີໄຫວ້ບໍ່ທ່ອນຄືນ ໄດ້ແລ້ວ
ຄວນກູເອົາກິນເຂົ້າ ເຖິງມັນດີສິງ ເສັງເຖິ້ນ
ອັນວ່າຈັກກະວຸດແກ້ວ ຕະບອງສູ້ກໍ່ມັນ ຫັ້ນແລ້ວ
ແມ່ນວ່າຕາຍຊາດນີ້ ເກີດຖ່າຍແຖນມາ

ບັງວ່າເປັນຣາຊາ ຫ່ອນບໍ່ມີໄຫວ້ ນັ້ນເດ
ຄ້ອມວ່ານັບກ່າວແລ້ວ ເປື້ອງແກວ່ງຕະບອງສີ
ຫຼາຍຫົວສັບ- ສອດສິບນຳເບື້ອ
ພູທອນທ້າວ ວາງສອນສິນປ່ອຍ
ອັນວ່າປິ່ນວິງເຂົ້າ ຄີງທ້າວໝື່ນຣູ
ກໍຫາກພຸພອງຍ້ອຍ ແຫຼວໄຫຼຕົກເລືອດ
ນາງລວດລົ້ມ ເຊຂວ້າແກ່ດິນ
ອັນວ່າເລືອດຫຼັ້ງລົ້ນ ເປັນເດດໄຟເຜົາ
ຫົມ ໆ ລຸກ ດາດແດງເຕັມພື້ນ
ແຕ່ນັ້ນນາຄານຮູ້ ພູສາກວັດແກວ່ງ
ໄຟມອດສິ້ນ ຫາຍຮ້ອນປູ່ເປັນ ແທ້ແລ້ວ
ສ່ວນວ່າຫັດຖຈັກລົ້ມ ຄາດິນດິ້ນດັ້ນ
ມັນກໍຫິນທຸກກັ້ນ ບັງດິ້ນບໍ່ຕາຍ
ທ້າວກ່າວກ້ານ ຈາດ່ ຜີເມືອງ
ກັບທັງສາຣະວັນສອງ ທ່ານຫານດູຮ້າຍ
ເຊືອຈົ່ງທຳນັບໃຫ້ ຕາຍໄປມຸດມອດ ເສັ້ງເຖິ້ນ
ສອງກໍທຽບເຂົ້າໃກ້ ພຣະຂັນຊ້າຊາດມັນ ຫັ້ນແລ້ວ
ອັນວ່າຫົວແຕກມ້າງ ທະລາຍມຸ່ນເປັນຜົງ
ມັນກໍບັນໄລມຸດ ມອດໃຈຄາວນັ້ນ
ພູທອນທ້າວ ເຫັນນາງນໍຣະບາດ
ພຣະບາດທ້າວ ຫົວຫ້ອມຊື່ນຊົມ

ແຕ່ນັ້ນສາມພຣະອົງຕ້ານ ດອມກັນແລ້ວຢ່າ
ທ້າວກໍເວົ້າຕໍ່ອ້າຍ ທັວລໍ້ຕໍ່ກັນ
ພໍເມື່ອການສະເດັດແລ້ວ ລົງສູ່ນະທີຫຼວງ
ສາມກໍເອົາກັນລອຍ ອາບສີໃສງລ້າງ
ພໍຄາວຂຶ້ນ ມາເຊົາເທິງທ່າ
ເທວະດາພ່ຳພ້ອມ ພານແກ້ວຍື່ນຖວາຍ
ໂຍຕິກາບັ້ນ ນາງຫຼວງນຸດນອດ
ແລ້ວທໍ່ນີ້ ຖວາຍໄວ້ທີ່ຄອນ ກ່ອນແລ້ວ ฯ

## ບັ້ນທ້າວເກດສຸຣິຍົງຍານເຂົ້າໄປໃນເມືອງບັນທະພານ

ບັດນີ້ຈັກກ່າວກ້ຳ ສາມອ່ອນອົງກະສັດ ກ່ອນແລ້ວ
ຄັນສເວີຍເພົາພໍ- ຜໍ່ປະມານເລີຍແລ້ວ
ສຸຄັນທານ້ຳ ຣວາຍມືຣໍາຣວາດ
ຜ້າເຊັດນຸ້ງນ ນວນຖ້ວນຊູ່ພຣະອົງ
ແລ້ວແຕ່ງເນື້ອ ນີວຣະພາກລີລາ
ສາມພຣະອົງຍົກ- ຍ່າງເຊີງຊ່ຳຍ້າຍ
ພາກັນເຂົ້າ ເມືອງນານພ້ອມພ່ຳ
ເລີຍເລົ້າເຖິງແທ່ງຫ້ອງ ຫໍແກ້ວແທ່ງນັ້ນ
ພໍດູສາວສນົມລົ້ນ ໂຮງຍາວບັນໝື່ນ
ງາມລື່ນລົ້ນ ດວງໜ້າແປກກັນ

ອັນວ່າເທວີແກ້ວ ທຽມນັບພໍແປດ
ງາມເລີດລ້ຳ ສີເຂັ້ນຄາດທອງ
ຮອງ ໆ ແກ້ມ ນວງາມໃສສ່ອງ
ທ້າວປ່ອງໃກ້ ສຽງໃຫ້ມີນັບ
ທ້າວກໍພັບຕີນຂຶ້ນ ທໍປາວປາງມາດ
ເຂົາກໍກົວບາດເຈົ້າ ປະນົມນິ້ວຊູ່ນາງ
ບົກບິ້ນຊ້ອງ ຍັງເຄືອງບັນນາການ
ມີໝູ່ມາລາຫ້ອມ ທູນທຽນປະນົມໄຫວ້
ກັບທັງຊຸນກວນພ້ອມ ຊາວເມືອງນ້ອຍໃຫ່ຍ
ໄຫຼຫັ່ງໆເຂົ້າ ຖວາຍທ້າວທູນທຽນ
ແຕ່ນັ້ນທ້າວເລົ່າຕ້ານ ຖາມບາດສູນທອງ
ຄອງເມືອງຫຼວງ ແຕ່ງການຕາງທ້າວ
ອັນວ່າກຸມານນ້ອຍ ບຸດຕາວົນລູກ ນາງນັ້ນ
ເຊື້ອໜໍ່ທ້າວ ແພງລ້ານບໍ່ມີ ແດ່ລື ?
ເຮົາຈັກວາງເມືອງໃຫ້ ກຸມານສເວີຍສືບ ໄປນັ້ນ
ຂໍໃຫ້ນາງບອກແກ້ວ ແພງລ້ານບອກມາ ທ່ຽວເຖີ້ນ
ແຕ່ນັ້ນເທວີແກ້ວ ສູນທອງນາງແມ່
ນາງກໍທູນແຈ່ມເຈົ້າ ຈອມຊ້ອຍແຕ່ມີ
ອັນວ່າກຸມານທ້າວ ໃນທ້ອງແທນສືບ ນານັ້ນ
ເຊື້ອໜໍ່ແທ້ ແທນທ້າວບໍ່ມີ ພຣະເອີຍ
ຂໍເຊີນຈັກກີເຈົ້າ ຈອມຄຸນສເວີຍສືບ ຈິ່ງເຖີ້ນ

ຂໍໃຫ້ທິງທ່ອນທ້າວ　　ແດນເສື້ອຜານນາງ ນັ້ນຖ້ອນ
ຂ້າກໍ ມີແຕ່ນ້ອຍ　　ເຈົ້າອ່ອນປັດທຸມມາ
ເປັນທີ່ດາ　　ຮ່ວມບຸນມາໄດ້
ເນົາໃນຫ້ອງ　　ທໍສູງຜາສາດ
ຖວາຍແກ່ພຣະບາດເຈົ້າ　　ທອມຂ້າໄພ່ເມືອງ ພຣະເອີຍ
ເມື່ອນັ້ນບຸນເຣືອງເຈົ້າ　　ບາຄານຂານຕອບ
ຊອບທີ່ພຣະແມ່ເຈົ້າ　　ເວນໃຫ້ກໍຫາກຄວນ ແທ້ແລ້ວ
ບັດນີ້ເຮົາຈັກວາງເມືອງໃຫ້　　ດິນລຸງສເວີຍສືບ ຈິງແລ້ວ
ເຮົາຈັກຄືນສູ່ຫ້ອງ　　ນະຄອນກວ້າງແຫ່ງເຮົາ
ເທື່ອນີ້ເຮົາກໍເຄືອງໃຈດ້ວຍ　　ມາດາພຣະແມ່
ດີກເຂດຫ້ອງ　　ເມືອງນີ້ພ່ໍານານ ແທ້ແລ້ວ
ແຕ່ນັ້ນສຸນທອງແກ້ວ　　ປະນົມກອນທູນບາດ
ອັນວ່ານາງນາດເຖົ້າ　　ມາດາເຈົ້າຊີໃດ ພຣະເອີຍ
ແຕ່ນັ້ນນໍຣິນທ້າວ　　ໄຂຄຳແບ້ນພຣະໂອດ
ອັນວ່ານາງຍອດແກ້ວ　　ມາດາເຖົ້າແມ່ເຮົາ
ຊື່ວ່າຣັດສີ ນີແກ້ວ　　ກະສັດດີແກວງອ່ອນ
ຊະຊ່ອນໜ້າ　　ແພງລ້ານປູ່ທີ່ໃດ ນັ້ນເດ
ເມື່ອນັ້ນເທວີເຈົ້າ　　ສຸນທອງທູນບາດ
ນາງຫາກເນົາປູ່ຫ້ອງ　　ທໍແກ້ວຍອດສູງ ພຸ້ນແລ້ວ
ກັບທັງປັດທຸມມານ້ອຍ　　ສາວສວັນທິງປູ່
ໃນແຫ່ງຫັ້ນ　　ທໍແກ້ວຍອດສູງ

ກັບທັງລູກທ່ານທ້າວ　　ເມືອງໃຫ່ຍຫັກຂື
ຊື່ວ່ານາງອິນທອງ　　ຢູ່ເນົາໃນຫັ້ນ
ກັບທັງນາງປາດຟ້າ　　ແກ້ວເກືອບຄຳເຫຼົາ
ນາງກໍໄສຍາເນົາ　　ສີຄິນພຽງພ້ອມ
ແຕ່ນັ້ນທ້າວຮ່ຳຮູ້　　ຄະນິງແມ່ມາດາ
ນາຄານຄຶດ　　ຮ່ຳຄະນິງຫວງກັ້ນ
ນາຈິ່ງປັນນາງໃຫ້　　ສາຣະວັນຫົກໝື່ນ
ກັບທັງຜີ ພີ່ເຈົ້າ　　ປັນໃຫ້ທໍ່ກັນ ແທ້ແລ້ວ
ສອງກໍຊົມສນຸກຊ້ອນ　　ສາວສນົມບັກໃຫ່ຍ
ເປັນແຕ່ບຸນສົ່ງໃຫ້　　ນາທ້າວກໍ່ກອມ
ກໍຈິ່ງລຸລາບໄດ້　　ທົງແທ່ນຂຸນນາບ
ບູສະບາຍສຸກ　　ສຳຣານມີຮ້ອນ
ອັນວ່າຜີ ພີ່ເຈົ້າ　　ທົງແທ່ນທັດຊະກຶດ
ອັນວ່າສາຣະວັນທົງ　　ແທ່ນຫຼານເນວເຊື້ອ
ຊື່ວ່າກົງເພັດທ້າວ　　ເນວໜໍ່ຫຼານລຸງ
ສາຣະວັນທົງ　　ນັ້ງປາວປາງນັ້ນ
ກໍຈິ່ງທາບຄຳຮ້ອນ　　ກາງວັນເສັຽສວ່າງ
ທໍ່ແຕ່ທົງປູ່ສ້າງ　　ທຳແກ້ວນັ້ງສເວີຍ ທັ້ນແລ້ວ
ແຕ່ນັ້ນເພລາລ້ຳ　　ສເວີຍແລງແລ້ວຢ່າ
ທ້າວກໍຄຶດຮຸ່ງຮູ້　　ຫາແກ້ວແມ່ຕົນ
ບັດນີ້ກູຈັກຂຶ້ນສູ່ຫ້ອງ　　ທຳປາງປານແມ່ ກ່ອນແລ້ວ

ກັບທັງປຽວປ່ອງປີ້ ປານແກ້ວພຣະບອດບາງ
ອັນວ່າສາມນາງພ້ອມ ພີມດຽວສເມີຮູບ ກັບນັ້ນ
ທ້າວກໍຄຶດໃດ່ເຫັນໜ້າເຈົ້າ ສາມນ້ອຍປວດມະໃນ ແທ້ແລ້ວ
ຄ້ອມວ່າທ້າວຮ່ຳແລ້ວ ສະເດັດສູ່ຫໍປາງ
ທັງສັງວານ ເຄື່ອງພຣະອິນທັງຫ້າ
ອັນວ່າບາດານຂຶ້ນ ທວານທອງຫຼີ່ງລ່ຳ
ພຣະກໍຫຼີ່ງລ່ຳປຸ້ນ ເຫັນຖ້ວນຊູ່ນາງ
ອັນວ່າຜິວນາງເຫຼື້ອມ ສເມີດັ່ງພີມດຽວ
ໄສບາບອນ ສີດິນພຽງພ້ອມ
ຈັກວ່າດີນໃດແທ້ ນາດາເປັນແມ່ ກູນັ້ນ
ເພາະວ່າໂສມຮູບເນື້ອ ສເມີໜ້າດັ່ງດຽວ ແທ້ແລ້ວ
ແຕ່ນັ້ນເຈົ້າລ່ຳແລ້ວ ຢືນປູ່ຊິງຄຶດ
ໃນດວງຈິດ ຮ່ຳກະນຶງຫາຍຊັ້ນ
ທ້າວກໍຄຶດເຖິງນາງສວັນຟ້າ ນາດາດີນແມ່ ພາຍພຸ້ນ
ນາງເທພໄທ້ ສວັນຟ້າດ່ວນລົງ
ເລີຍເລົ້າມາເຖິງເຈົ້າ ແນວອິນພຣະເກດ
ອັນວ່າເທເວດເຈົ້າ ແຫນໃຫ້ບອກນິນ
ອັນວ່າດີນບອນໃກ້ ປະຕູຫວານທາງປ່ອງ ນັ້ນນາ
ກໍຫາກແມ່ນເຜົ້າຜູ້ ນາງແກ້ວແມ່ນາ ແທ້ແລ້ວ
ຖັດມານັ້ນ ປັດທຸມມາສະໄພ້ນຶງ
ຖັດນາງແກ້ວປັດທຸມມາໂສມສະອາດ ຊື່ວ່ານາງປາດຟ້າແກ້ວເຄືອບຄຳໄຫຼ

24/VII

ມຸມພູພານ　　ພໍ່ນາງແພງລ້ານ
ຖັດຈາກນັ້ນ　　ນາງນາດອິນທອງ
ທັງສາມນາງ　　ມິ່ງຂວັນຂອງເຈົ້າ ແມ່ແລ້ວ
ຄ້ອມວ່ານາງບອກແລ້ວ　　ລາຈາກນາຄານ
ທະຍານດິນເດີງ　　ຂ່ວງພຣະອິນເທີງຟ້າ
ແຕ່ນັ້ນນາໄທຮູ້　　ມາດາດິນແມ່
ທ້າວຍ່ອງເຂົ້າ　　ເດີງໃຫ້ແມ່ດິນ
ນາຄານທ້າວ　　ໄຫວ້ບາດປາທາ
ນາງງາມເລີຍ　　ຕື່ນດິນທັງສະທ້ານ
ອັນວ່າມານດາໄຫ້　　ຕົກໃຈລຸກນັ່ງ
ນາງກໍຫຼິງລ່ຳຢ້ຽມ　　ສົມເຊື້ອຊາດອິນ
ກິນນະຣີແກ້ວ　　ກະສັດດີແດງອ່ອນ
ຊະຊ່ອນໜ້າ　　ນາງແກ້ວເລົ່າຖາມ
ດູຣາຊາຍຣາມນ້ອຍ　　ສອນວອນຜູ້ປະເສີດ
ເຈົ້າກໍຢູ່ແຫ່ງຫ້ອງ　　ນະຄອນກວ້າງຝ່າຍໃດ ນັ້ນເດ ?
ສັງວ່າເດີນປ່າໄມ້　　ຫຼຽວທ່ອງມໍຣະຄາ
ອັນວ່າອາການໜັກ　　ໝູ່ມານດັ້ນດ້ອນ
ຕັ້ງວ່າສັດຖູລົ້ນ　　ຫຼືດິນແດນຂນາດ
ເຈົ້າເລົາສາມາດຜ້າຍ　　ມາໄດ້ຮ່ອນໃດ
ຮູ້ວ່າເປັນໜໍ່ເຊື້ອ　　ເທເວດຈັນໃທ ນັ້ນລື
ລືວ່າເທໂວພຣະ　　ຍອດອິນສວັນຟ້າ

ລົງມາຫຼົບ　　ເຖິງອວນຖາມຂ່າວ
ເຈົ້າຫາກເປັນທ່ອນທ້າວ　　ຄອງຟ້າເທພອິນ ທີພຸ້ນ
ອັນນຶ່ງຈັກວ່າເທວະດາດ້າວ　　ແດນໃດມາລົວ ຣຽມລື ?
ລືວ່າເທພທ່ອນທ້າວ　　ແນວເຊື້ອຊີ ລື ນັ້ນເດ ?
ແຕ່ນັ້ນນາງຄານຕ້ານ　　ຕາມການນິນບອກ
ເລົ່າແຕ່ເຄົ້າ　　ຄຳຜັງນບໍ່ບັງ
ຂ້ອຍນີ້ເປັນແນວເຊື້ອ　　ໂກສີສເວີຍຣາດ ພາຍພຸ້ນ
ທີ່ວ່າທຸກຍາກຮ້າຍ　　ເມືອງບ້ານບໍ່ສເວີຍ
ອັນວ່າມາດາແກ້ວ　　ກະສັດຕີແຕ່ງອ່ອນ
ຊະຊ່ອນໜ້າ　　ແພງລ້ານແມ່ຣຽມ ແທ້ແລ້ວ
ເປັນເພື່ອປິດຕຸຣາດຮ້າຍ　　ຈຳຫ່າງນະຄອນຂວາງ
ກັບທັງຕົນຕົວຣຽມ　　ຫ່າງໄກກຸງກວ້າງ
ແຕ່ນັ້ນນາງກະສັດໄຫ້　　ຟັງກອນນາກ່າວ ມານັ້ນ
ນາງກໍຍ່າວ ໆ ນ້ຳ　　ຕາຍ້ອຍລັ່ງລົງ
ນາງຈິ່ງໂຊມເອົາແກ້ວ　　ບຸດຕາຕົນລູກ
ຊົມຈູບເຈົ້າ　　ທັງໄຫ້ຄ່ອຍຖາມ
ເຈົ້ານີ້ສາຍໃຈແກ້ວ　　ບຸດຕາລູກແມ່ ຈິງແລ້ວ
ຜັດແຕ່ປະສູດແລ້ວ　　ບໍ່ເຫັນນ້ອຍຮູບໃດ
ແມ່ກໍເຖິງທຸກໄດ້　　ພຍາດີທຳຖີບ
ແມ່ກໍກອດແຂ່ງເຈົ້າ　　ພຍາເຟື້ອງປ່າຍສະເດນ
ອັນວ່າໂລຫິດຍ້ອຍ　　ໄຫຼລົງປານເຫື່ອ

ຜູງສິ້ນເສື້ອ ປານນ້ຳອາບຄີງ ແມ່ແລ້ວ
ອັນນຶ່ງເສນາເກ້າ ມຸນຕີນ້ອຍໃຫ່ຍ
ເຂົາກ່າວພ້ອງ ທູນເຈົ້າຊູ່ຄົນ
ກໍຫາກຈົບໃຈແທ້ ຫາທາງພໍເພິ່ງ ບໍ່ມີແລ້ວ
ພຣະກໍຈັບແກ່ຫິ້ນ ຕີລ້າກໄປ
ອັນວ່າຈອມພຣະຄຸນໄທ້ ປິດວາຕີນພໍ່ ເຈົ້ານັ້ນ
ຕີນຖີບໜ້າ ຕີຊ້ຳໄລ່ໜີ ລູກເອີຍ
ແມ່ກໍເດີນດົງດ້າວ ຫົວຊອນຊັ້ນປ່າ
ລາງແຫ່ງທາງຍາກຮ້າຍ ຜາສ້ຽນຊໍ່ຄົມ
ອັນວ່າປາທາເທົ້າ ຕີນພອງເປັນເລືອດ
ແມ່ກໍຫັກໄມ້ເທົ້າ ຖືໄດ້ຄ່ອຍໄປ
ລາງແຫ່ງເສືອສາງຊ້າງ ຕັນທາງທຽວທ່ອງ
ແມ່ກໍເປາະປ່ອງປ້ຽມ ແບງແລ້ວບ່າງກາຍ
ລາງແຫ່ງຜາຊໍ່ຊັ້ນ ຕັນຮ່ອມທາງຮອມ
ລວງສູງເລີກ ລ່ຳລິງພໍປ້ານ
ແມ່ກໍກອນເກາະຂຶ້ນ ເຖິງແປປອມເມກ
ຈັບຈ່ອງໄດ້ ໄຮກ້ຽວປ່ອນລົງ
ລາງເທື່ອເຊຊວນກິ້ງ ລົງມາດິນຮາບ
ວິບາກຮ້າຍ ນອນຄ້າງວ່າງສະພຸງ
ອັນວ່າມາດາເວົ້າ ຄຳຫຼັງໃຫ້ຕໍ່
ຕັ້ງວ່າທຸກຍາກຮ້າຍ ປານຂ້ອຍຄ່າພັນ ລູກເອີຍ

ແມ່ກໍເລົາແຕ່ເຄົ້າ　　ເຫົ້າບວດເປັນຊີ
ເປັນຣັດສີ　　ປູ່ບຳລຸງເຈົ້າ
ແມ່ກໍຈຳສິນສ້າງ　　ພາວະນາໃນປ່າ
ຄ້ອນວ່າສາມຂວບເຂົ້າ　　ຣະດູໄດ້ຖ່າຍມາ ຫັ້ນແລ້ວ
ຄັນວ່າບາລ່ວງເຂົ້າ　　ປີ ສີມາເຖິງ
ຫັດຈັກໄປລັກ　　ລອບເອົາມາບໍ້
ແມ່ຈິງໜີໄກເຈົ້າ　　ຣັດສີລຸງແສນໂບດ
ແມ່ກໍຫິວຫອດກັ້ນ　　ຕາຍແລ້ວເລົາຄືນ ລູກເອີຍ
ແມ່ບໍ່ຄອງເຫັນໜ້າ　　ສເນຫາລູກນິງ ຈິງແລ້ວ
ດຽວວ່າເສັຽລູກແກ້ວ　　ຕາຍຂວັນແຕ່ດິນ ແລ້ວເດ
ໃຜຜູ້ເອົາບາຫ້າວ　　ກຸມານລ້ຽງຕໍ່ ນາບັ້ນ
ອັນວ່ານ້ອຍໜໍ່ຜູ້　　ບຸນກວ້າງຈິງບໍ່ຕາຍ ແມ່ເດ
ແຕ່ບັ້ນຫ້າວຕອບຕ້ານ　　ບອກແມ່ທັງສະອອນ
ຂ້ອຍກໍນອນໃນໄຫ　　ເກືອກດິນຖິນໄວ້
(ແສນໃນຣ້ອນ　　ຄາຊຸມຣິນເຣ່ງ
ເໝືອນດັ່ງເນົາໜ້ຳຕົ້ມ　　ຣິນໃຫ້ນອດໃຈ)
ບັງມີນາງກະສັດໄທ້　　ເຈົ້າເທພລີລາ
ເນົາໃນເມືອງສວັນ　　ລ່ວງລິງມາລ້ຽງ
ນາງກໍທຳພຽນລ້ຽງ　　ຣັກສາຈິນໃຫ່ງ
ແມ່ກໍສອນສັ່ງໃຫ້　　ນິນແກ້ວສາດສິນ
ກັບທັງສິນສອນພ້ອມ　　ພຣະຂັນໄຊນາງສົ່ງ

ໄວ້ໃຫ້ຂ້ອຍ　　ເຫມ້າງໝູ່ມານ ແມ່ເອີຍ
ກັບທັງພູສາຟ້າ　　ທັມມະໂຣງລູກປະເສີດ
ຕັ້ງວ່າຄວນຄ່າລ້ານ　　ອິດທີກ້າເກິ່ງພຣະອິນ ແທ້ແລ້ວ
ຂ້ອຍກໍເນົາບຳເຈົ້າ　　ເມືອງສວັນພຣະແມ່ ພາຍພຸ້ນ
ນານປູ່ໄດ້　　ເຈັດເຂົ້າຂວບປີ ນີ້ແລ້ວ
ອັນວ່າຈັກກີເຈົ້າ　　ຣາຊາວົນພໍ່ ເຮົານັ້ນ
ພຣະກໍຣົບຕໍ່ສູ້　　ປາງນັ້ນຕໍ່ຣຽນ
ຂ້ອຍກໍພັບທະນັງມ້າງ　　ໂກວແພ່ນພູສາ
ເປັນໄບບອງ　　ຜູກເອົາພົນເຈົ້າ
ກໍຫາກດູເປົ່າເປື້ອງ　　ປິດຕາດົນພໍ່
ກໍຫາກເສັງໄພ່ນ້ອຍ　　ພົນລ້ານໄຂວ່ຂືນ
ພໍ່ຈຶ່ງຖາມດົນຂ້ອຍ　　ຫາແນວເຊື້ອຊາດ
ລູກບອກໃຫ້　　ຈອມເຈົ້າລວດກະສັນ
ພໍ່ກໍເຊີນວົວຂ້ອຍ　　ສເວີຍເມືອງທັງແທ່ນ
ລູກກໍໄກແກ່ນແກ້ວ　　ນັງໜ້າຈຶ່ງບໍ່ທັງ ແມ່ເອີຍ
ພໍ່ຈຶ່ງພາພົນລ້ານ　　ໜີເມືອທັງໂສກ
ຂ້ອຍກໍເນົາປູ່ຫ້ອງ　　ດອມແກ້ວແມ່ສວັນ
ບັງມີເທເວດເຈົ້າ　　ດົນຊື່ຫັສໄນ
ລົງມາໄຂອາການ　　ແມ່ໂກລຸງເຈົ້າ
ດົກເຂດດ້າວ　　ເມືອງຊື່ຊຸບນານ
ໃນແດນພື　　ເຂດຂົງຊາວເຊື້ອ

ຂ້ອຍກໍເຫຼືອໃຈແທ້ ນະໃນຂັນຂ້ຽວຂຸ່ນ
ກໍຈຶ່ງຮ້ອນເຮ່ງຂ້ຽວ ຂຽວລ້ານລ່ວງຕາມ ແມ່ເອີຍ
ບັດນີ້ບຸນຫຼາຍໄດ້ ເຫມານນ້າງມຸ່ນ
ເປັນແຕ່ບຸນເຫຼືອມກຸ້ມ ເຫັນໜ້າພອະບອດຄຸນ ແມ່ເອີຍ
ອັນນຶ່ງປານດັ່ງໄດ້ຂຶ້ນຟ້າ ເຖິງບອດດາວະດຶງ ທີ່ພຸ້ນ
ເຮົາຈຶ່ງທົງວິມານຄຳ ຢ່າໃຫ້ເຄືອງຄຳຮ້ອນ
ອັນນຶ່ງພູທອນເວົ້າ ຄຳຫຼັງໃຫ້ຕໍ່
ອັນວ່ານາງໜໍ່ແກ້ວ ຟັງແລ້ວຍ່າວບິນ
ແຕ່ນັ້ນທ້າວຕ່າວໜ້າ ຕ້ານຕໍ່ປັດທຸມມາ
ທັງສາມນາງ ປູ່ເຝືອແຝງຂ້າງ
ອັນວ່າຂຸນນານທ້າວ ປິດຕາຕິນພໍ່ ນາງນັ້ນ
ພີ່ກໍຟັງຊີບສັ່ງ ເສັ່ງຊ້ຳຊີບພະວັງ ນ້ອງເອີຍ
ກໍບໍ່ມີໃພຄ້າງ ຄາເມືອງເປັນໃຫ່ງ ພີ່ແລ້ວ
ມີແຕ່ນ້ອງນາດໄທ ຄາຄ້າງຜູ້ດຽວ
ພີ່ຈັກທົດສິງໃຫ້ ນາງຄານສເວີຍສິບ ຈິງແລ້ວ
ໃຫ້ນ້ອງຕິກແຕ່ງສ້າງ ເມືອງນີ້ສືບໄປ ພີ່ຖ້ອນ
ອັນນຶ່ງນ້ອງຈົ່ງຫາແນວເຊື້ອ ຂຸນນານທຽມພ່າງ
ສາມນາງປູ່ສືບສ້າງ ທໍ່ແກ້ວນັ່ງປອງ ພີ່ຖ້ອນ
ບັດນີ້ຮຽນຈັກພາແມ່ຍ້າຍ ຄືນສູ່ໂກສີ ກ່ອນແລ້ວ
ພີ່ຈັກເອົາມາດາ ຕ່າວຄືນຫາຫ້ອງ
ແຕ່ນັ້ນກອງແພງແກ້ວ ປັດທຸມມານາງນາດ

ນາງກໍທູນບາດເຈົ້າ　　ບຸນກວ້າງພຣະຍອດຄຸນ
ຂໍແກ່ບຸນຊູເຈົ້າ　　ເໜືອຫົວພຣະເກດ
ຂໍໃຫ້ວິເສດທ້າວ　　ບຸນກວ້າງບັ້ງສເວີຍ ຫັ້ນຖ້ອນ
ນ້ອງຂໍເປັນຊ່ວງໃຊ້　　ພື້ນບາດປາທາ
ບໍ່ກວ່າຣາຊາພຣະ　　ຊິໂຜດຜາຍຕົວນ້ອງ
ບັດນີ້ພຣະຊິວາງເມືອງໃຫ້　　ຄືນຍິງສເວີຍສືບ ເປັນລື
ບຸນຫາກນ້ອຍ　　ແນວເຊື້ອຊາດຍິງ ພຣະເອີຍ
ອັນນຶ່ງຄັນພຣະໄລລາໃຫ້　　ຂຸນນາງທຽມພ່າງ ອວນນັ້ນ
ຂໍໃຫ້ຟັນມອດມ້ຽນ　　ເສັຽຊ້ຳສວ່າງກໍໃຈ ພຣະເອີຍ
ອັນວ່າປິດຕາເຈົ້າ　　ຂຸນນາງເປັນພໍ່ ອວນນັ້ນ
ບໍ່ໃຊ່ທັມມະຊາດເຊື້ອ　　ແນວທ້າວສືບພຣະອົງ ພີເອີຍ
ອັນນຶ່ງອຸປມາແທ້　　ເໝືອນກັບທັງສີ ຈິງແລ້ວ
ຄັນວ່າພູວະນາດທ້າວ　　ວາງນ້ອງສ່ວນສູນ ພີເອີຍ
ອັນວ່າສາມນາງຕ້ານ　　ນຳນາຄຳມ່ວນ
ໄຫວ້ພຣະໃຕ້ລຸ່ມຟ້າ　　ບຸນກວ້າງຊອນຊຽງ ແທ້ແລ້ວ
ແຕ່ນັ້ນນາຄານຕ້ານ　　ສາມນາງນິງຖ່າວ
ປຽວວ່າສາມຍອດແກ້ວ　　ໝາຍນ້ຳອ່າງຄຳ ພີນາ
ອັນວ່າໂກສີເສົ້າ　　ຫາກເປັນໜອງນ້ຳຂຸ່ນ ອວນເອີຍ
ມີແຕ່ຕົມຂຸ່ນຂຽວ　　ຄາວຮ້າຍສາບສະອາງ ພີແລ້ວ
ກໍບໍ່ເປັນປໂຍດແທ້　　ຊິເອົາແທນຫຽມອົກ
ພີ ນີ້ແນວກາດຳ　　ຫ່ອນຊິທຽມທັງໄດ້

ອັນຈັກເອົາຕົນເຂົ້າ　　ຫາອົງອິນຫຼໍ່ ລຽງນັ້ນ
ປ້ານແຕ່ເທວະດາເຈົ້າ　　ຫົວລ້ຳຫຼໍ່ຂວັນ ນັ້ນແລ້ວ
ລືຈັກເອົາຕົນເຂົ້າ　　ຮຽງແພງຫຽມພ່າງ ດັ່ງນັ້ນ
ຊາດທີແສງທົງຫ້ອຍ　　ລືຊີແຈ້ງດັ່ງພຣະຈັນ ນ້ອງເອີຍ
ພົບ ຄືດັ່ງໜູຕົວນ້ອຍ　　ເດີນດົງດົ້ນປ່າ
ລືຈັກກັບເພດຂຶ້ນ　　ເໝືອນຊ້າງກໍບໍ່ເປັນ ພີແລ້ວ
ປຽວວ່ານ້ອງບໍ່ເຫັນທີ່ຮ້າຍ　　ເບື້ອນໃຜດຊາຍພອຍ
ໃຫ້ນ້ອງກອບເອົາເມືອ　　ຮ່ວມສະຖານດອມນ້ອງ
ແຕ່ນັ້ນປັດຫຸມມານ້ອຍ　　ອິນຫອງຄຳປາດ
ສາມນາດນ້ອຍ　　ຫົວແຍ້ມຕໍ່ພຣະອົງ
ປັດຫຸມມາຕ້ານ　　ຈາຕໍ່ບາຖານ
ໃຜທ່ອນເອົາບົງຂຶ້ນ　　ເອົາຊາຍລົງລຸ່ມ ເປັນລື
ປ້ານແຕ່ເທວະດາເຈົ້າ　　ຫົວລ້ຳຫຼໍ່ຂວັນ ຫັ້ນແລ້ວ
ແຕ່ນັ້ນທ້າວກ່າວໜ້າ　　ຕ້ານຊື່ນຊົມຫົວ
ສາມນາງລົງຄວາມດຽວ　　ຄ່ອງກັນເປັນເຫງົ້າ
ແຕ່ນັ້ນທ້າວປ່າຍເບື້ອງ　　ຮຽງຮ່ວມບັນທົມ
ເອົາຕົນແນະ　　ນອບປຸນເປັນໃຫ້
ສເນຫາຮ້ອນ　　ຣົມມະໂນໃນນາດ
ເຈົ້າກໍອົດບໍ່ໄດ້　　ມືຊ້ອນຄ່ອຍຊອນ
ບາກໍຊອນມືຄັ້ນ　　ນາວສີຫົກໜ່ວຍ
ຕັ້ງຫາກລຳນາກທ້າວ　　ມືໜ້ອຍບໍ່ຫຼາຍ

ໂອນໍມາປາກກັບເພດພັ້ງງ   ສິນສິງພຣະບາຣາຍ ເດນໍ
ມັນຫາກບຸນຫຼາຍມີ   ສີ ມີພໍໃຊ້
ອັນນີ້ສອງມືລ້າ   ທຳການດູຍາກ
ລຳບາກທ້າວ   ເມົາຊຸ້ນຜູ້ດຽວ ເຜົ້ນາ
ບູທ່າງບາໄທຊ້ອນ   ສາມບາງຊ້ອຍຊື້ນ
ບາບ່າວທ້າວ   ຊົມຫຼື ນອົນກໍໃຈ
ນັບແຕ່ທ້າວປູ່ສ້າງ   ເມືອງໃຫ່ງນັບທະພານ
ດູນານເທິງ   ຂວບສາມປີແລ້ວ
ກໍບໍ່ມີເດືອດຮ້ອນ   ສັພສິງການໃດ
ໄພຍໄພສັງ   ກໍບໍ່ມີມາໃກ້
ດີທໍ່ຫຼາຍເມືອງພ້ອມ   ຊຸນນາງໄຫຼຫຼັ່ງ
ຮ້ອຍປະເທດດ້າວ   ມາເຂົ້າສວ່າຍທອງ
ທ້າວຈິງສອນສັ່ງໃຫ້   ທຸກໝູ່ຊຸນນາງ
ໃຫ້ຄ່ອຍເອົາກັນຟັງ   ທຸກຄົນຢ່າສລັ້ງ
ອັນວ່າພຸດໂທດັ້ງ   ໃຫ້ເປັນອົງປະເສີດ
ທັມໂມເປັນທີຈັ້ງ   ແຜງລ້ອມລຽບລະວັງ
ອັນນຶ່ງສັງຄັງໃຫ້   ບົນຫົວຫຸ້ມທໍ່ ດີດາຍ
ສີລັງເປັນທີຈັ້ງ   ຈຳໝັ້ນຢ່າໄລ ທ່ານເອີຍ
ອັນນຶ່ງທານັງໃຫ້   ກິນທານຢ່າຂາດ
ສິນແປດໃຫ້   ຈຳໄວ້ຊູ່ຄົນ ນັ້ນເນີ
ອັນນຶ່ງຝູງນົກເນື້ອ   ສັກກຸນບາແສນສິງ

ຢ່າໄດ້ຄຶດໃຄ່ຂ້າ ເຂົາບັ້ນນອກຊີວັງ ທ່ານເອີຍ
ໃຫ້ຄ່ອຍພາກັນຕັ້ງ ໃນຄອງພຸທບາດ
ຢ່າໄດ້ຂ້າຟັນເນື້ອ ທ່ານກິນ ບັ້ນເນີ
ແຕ່ບັ້ນຫັ້ນ ໆ ພ້ອມ ຊາວເທດຊຸມນານ
ເຂົາກໍເອົາກັນຟັງ ເທສນາທັ່ນເຈົ້າ
ເຂົາເລົ່າເອົາກັນເຂົ້າ ຮັກສາຄອງວິນັຍສູດ
ອັນວ່າສິບແປດຕັ້ງ ແຮມໄວ້ຊູ່ຄົນ ຫັ້ນແລ້ວ
ເມື່ອນັ້ນພຣະຈິ່ງກູບາໃຫ້ ສາຣະວັນເປັນໃຫ່ງ
ແຂງເຂື່ອນເສື້ອ ຜີຮ້າຍໝູ່ມານ
ແລ້ວກ່າວຕ້ານ ຈາຕໍ່ສາຣະວັນ
ທ່ານຈົ່ງໄປບຳລຸງ ແຫ່ງເຮົານາຟ້າວ
ເທື່ອນີ້ການກູ້ຮ້ອນ ເຮວພລັນໂດຍຮີບ
ເຮົາຈັກທົດໃສ່ບ້ານ ເມືອງນັ້ນນັ່ງສເວີຍ ກ່ອນແລ້ວ
ແຕ່ນັ້ນສາຣະວັນທ້າວ ບີເມືອງພຣະພີ
ຂ້າຮີບຮ້ອນ ພລັນຟ້າວຟັ່ງໄປ
ສອງກໍບ່ອງ ໆ ຜ້າຍ ປອນເມກເວຫາ
ກາຍພູຜາ ແມ່ກະແສແສນທ້າງ
ເລີນເລົ້າເຖິງຫີນຫ້ອງ ຣັດສີລຸງເນົາຢູ່
ສອງກໍລົງສູ່ພື້ນ ໂລມແກ້ວພຣະຣັດສີ
ແຕ່ນັ້ນຣືສີເຈົ້າ ເຫັນຜີສອງອ່ອນ
ຊະຊ່ອນໜ້າ ຣັດສີເຈົ້າເລົ່າຖາມ

| | |
|---|---|
| ເປັນໃດແທ້ | ສອງພຣະອົງດັ້ນດຸ່ງ ນາບໍ້ |
| ບັງຄ່ອຍລຸລາບໄດ້ | ເຫນ້າງໜູ່ນາງ ແດ່ ລື ? |
| ແດ່ນັ້ນພີເນືອງເຈົ້າ | ສາຣະວັນສອງອ່ອນ |
| ຂ້າກໍຄານເຂົ້າໄຫວ້ | ຣັດສີເຈົ້າເລົ້າກອບ |
| ເພື່ອຄ່ອຍເດີນດົງດົ້ນ | ເຫນານນ້າງມຸ່ນ |
| ໄດ້ທ່ອນທ້າວ | ເນືອງນັ້ນຂົມນັບ ພຣະເອີຍ |
| ເພື່ອຂ້າທົງສເວີຍສ້າງ | ນັບທະພານຫຼາຍຄ່ຳ ຄືນແລ້ວ |
| ແລ້ວຄືດຣຸ່ງຣູ້ | ລຸງເຈົ້າຢູ່ໄພ |
| ບານຸບໄຊ້ | ເພື່ອມາໂດຍຣີບ |
| ວ່າໃຫ້ເຊີນແຈ່ມເຈົ້າ | ເນື່ອສ້າງສືບແທນ ວ່ານາ |
| ເມື່ອນັ້ນມະຫາຣັດສີເຈົ້າ | ດີນລຸງຊົມຊື່ນ |
| ເຈົ້າກໍຫົວສະອື້ນ | ຫຼານໄຊ້ຮອດລຸງ ດີແລ້ວ |
| ບັດນີ້ລຸງຈັກລາສິບໄວ້ | ກາງໄພທົມເວດ |
| ເພື່ອຜ່ານຫ້ອງ | ກຸງກວ້າງນັ່ງສເວີຍ ກ່ອນແລ້ວ |
| ແດ່ນັ້ນຣືສີເຈົ້າ | ລາສິບສິກອອກ |
| ເປັນທິດແລ້ວ | ສອງເຈົ້າເລົ້າທານ |
| ເຂືອກໍພາຜັນຜ້າຍ | ເຫາະກາຍຂົງເຂດ |
| ນັ້ນປະເທດດ້າວ | ເຖິງຫ້ອງຮອດເມືອງ |
| ສອງກໍທານລຸງຂື້ນ | ຫໍປາວປາງໃຫ່ງ |
| ອັນວ່າສອງນາດໄທ້ | ຫົວໄຫ້ວ່ກັນ |
| ສອງພຣະອົງເວົ້າ | ຄຳຫຼັງໃຫ້ຣຸ່ງ |

| | |
|---|---|
| ຫົວຫອດກັ້ນ | ກອບໃຫ້ຮຸ່ງຫຼັງ |
| ເທື່ອນີ້ໝົດເວນແລ້ວ | ຄືນມາພົບຈອບ ກັນແລ້ວ |
| ອັນວ່າຊາມຍອດແກ້ວ | ຫາຍຮ້ອນສວ່າງວອນ |
| ແຕ່ນັ້ນທ້າວຈຶ່ງໄສງລຸງໃຫ້ | ສເວີຍເມືອງແທນສືບ |
| ເປັນເອກອ້າງ | ທັນເຫງົ້າເຜົ່ານີ |
| ອັນວ່າສຸນທຣີສ້ອຍ | ສຸນທອງຫຽມພ່າງ |
| ສາວສນົມໝຸ່ນນ້ອຍ | ຖວາຍເຈົ້າຊູ່ບາງ ຫັ້ນແລ້ວ |
| ອັນວ່ານີ ພີເຈົ້າ | ຄຸນມາກອະນັນຕັງ |
| ຈອມໃຈນັ້ງ | ຝາກຝືນລຸງໄວ້ |
| ເຈົ້າກໍທົດໄສງໃຫ້ | ຄອງບະຄອບຄຽງບາດ |
| ອຳນາດກວ້າງ | ດອມເຈົ້ານັ້ງປອງ |
| ເຊງວ່າອຸປຣາດທ້າວ | ແທນສືບນັນທະພານ |
| ການເມືອງນີ້ | ແຕ່ງເຕີມຕາງເຈົ້າ |
| ກໍທາກນໍຣະບວນແລ້ວ | ຫຼັກຄຳຕັ້ງໃໝ່ |
| ພວກເສນາໃຫ່ຍນ້ອຍ | ພຣະອົງຕັ້ງໃໝ່ແທນ |
| ເມື່ອນັ້ນສາຣະວັນທ້າວ | ຄືນເມືອເມືອງຣາດ |
| ແລ້ວຈຶ່ງນຳນາດນ້ອຍ | ເຈົ້າແກ່ນຈັນທອນ |
| ນຳນາງມາ | ສິງນາໄທທ້າວ |
| ອັນວ່າສີຍອດແກ້ວ | ແຝງບາດບຸນເຮືອງ |
| ສາວສນົມເນືອງ | ແກວ່ງວີຂວາຊ້າຍ |
| ແຕ່ນັ້ນພຣະຈຶ່ງປີປາຍຕ້ານ | ສາຣະວັນເມືອງເອກ |

ກັບຫັງຜີ ພີເຈົ້າ    ບຸນກວ້າງສິງເຮົາ ກ່ອນເຖິ້ນ
ຝູງໝູ່ບັກສາທ້າວ    ທັງເມືອງຮ້ອຍປະເທດ ກໍດີ
ເຊືອຈິງນຳສິງຂ້ອຍ    ເຖິງເທົ້າພໍ່ພຣະອົງ ທີ່ພຸ້ນ
ເມື່ອນັ້ນກະສັດຕີແກ້ວ    ນາດາແຕງອ່ອນ
ຟັງທ່ອນທ້າວ    ບຸນກວ້າງກ່າວຄືນ ຫັ້ນແລ້ວ
ນາງກ່າວຕ້ານ    ຖແລງວ່າຢ່າໄປ ແມ່ຖ້ອນ
ນັບຫາກຂິນໃຈຈິດ    ແຕ່ຫຼັງຈິງແທ້
ແມ່ບໍ່ປາກເຫັນໜ້າ    ຊຸງນັບຕາຊິແຕກ ລູກເອີຍ
ຄຶດເມື່ອຄາວກ່ອນກີ້    ຕີຊ້ຳໄລ່ໜີ ນັ້ນນາ
ໃຫ້ແມ່ຂໍຫ້າມເຈົ້າ    ບຸດຣາດຢ່າຄືນ ແມ່ຖ້ອນ
ເຮົາຄວນເນົາວິມານຜີ    ປູ່ທັງເມືອງນີ້
ເມື່ອນັ້ນທ້າວຕອບຕ້ານ    ຂານແມ່ນາດາ
ອັນວ່າອິນຕາເຈົ້າ    ເຫໄວສອນສັ່ງ
ວ່າໃຫ້ຄືນຄອບຫ້ອງ    ພາຍພຸ້ນຢ່າໄລ ວ່າອັນ
ລືຈັກຂືນຄຳເຈົ້າ    ອິນຕາສອນສັ່ງ ໄດ້ນັ້ນ
ອັນວ່າອິນທິຣາດເຈົ້າ    ສອນແລ້ວຫ່ອນຊິກາຍ ໄດ້ເດ
ແຕ່ນັ້ນນາງບໍ່ ຂືນຄຳເຈົ້າ    ອິນຕາສອນສັ່ງ
ນາງກໍບັ່ງ ໆ ໄຫ    ໃຈນ້ອຍບໍ່ປາກເມືອ
ນາງກໍຄຶດຄັ່ງຄ້ອຍ    ຄ້ອຍຄັ່ງໃນຈິດ
ຫັງເລົາເຫຫວງຄຶດ    ບາກກໍໃຈແສນຊັ້ນ
ນາງຈຶ່ງວັນທາໄຫວ້    ພຍາລຸງເລີຍສັ່ງ

ນ້ອງຈັກພາກພີ່ເຈົ້າ          ຄືນເຂົ້າສູ່ເມືອງ ກ່ອນແລ້ວ
ນ້ອງບໍ່ປາກພາກອ້າຍ          ໄກຫ່າງຮາມເຫັນ ພີ່ເອີຍ
ເປັນເພື່ອຫຼາບດຽວລຸງ          ບ່ງວເມືອເມືອງພຸ້ນ
ໃຫ້ພີ່ທົງສຸກສ້າງ          ຫໍປາງເປັນໃຫ່ງ ດີເນີ
ອັນວ່າໄພຍພຍາດໃຫ້          ໜີເວັ້ນຫຼີກໄກ ແດ່ຖອນ
ແຕ່ນັ້ນກຸມພາເຈົ້າ          ຕີນພີ່ພຍາເມືອງ
ບຸນເຮືອງເອີຍ          ກ່ອນເມືອດີຖ້ອນ
ປ່າໃຫ້ມີໄພຍຕ້ອງ          ອິນດາຍຈັກສີງ
ຂໍໃຫ້ທິກກີງແກ້ວ          ເດີນດ້າວດ່ອນສະຖຽນ ແດ່ຖ້ອນ
ແຕ່ນັ້ນບາຖານທ້າວ          ທັງສີສົມສີ
ເຂືອກໍ ມີຄໍາຈາ          ສັ່ງລຸງດີຄ້ອນ
ພັງບິນຄືນ ໆ ພ້ອມ          ຊາວເທດຂຸນນານ
ເຂົາກໍດາດີດິກ          ແຕ່ງແປງບວງບ້ານ
ແຕ່ນັ້ນສາຣະວັນທ້າວ          ພີເມືອງພຣະພີ່
ນີຣະມິດພາສາດຕັ້ງ          ໂຮງແກ້ວບອດສູງ
ແລ້ວຈິ່ງເຊີນສີສ້ອນ          ກະສັດດີແຕງອ່ອນ
ຊະຊ່ອນໜ້າ          ແພງລ້ານແມ່ນາ
ກັບທັງກັລຍາແກ້ວ          ເທວີທັງສີ
ເຂົ້າສູ່ຫ້ອງ          ໂຮງແກ້ວແທ່ນຄໍາ
ເມື່ອນັ້ນສາຣະວັນທ້າວ          ພີເມືອງທົງເດດ
ສອງກໍພາເຜັ່ນຜ້າຍ          ພາຍລ້ຳລ່ວງໄປ

ອັນວ່າບາດານທ້າວ　　ເທາະໄປຕາມແມ່
ຝູງໝູ່ນາງໜຸ່ມເໜົ້າ　　ຕາມເຈົ້າມືດມົວ
ເຂົາກໍທົນ ໆ ເຕັ້ນ　　ເທາະຕາມບຸດຣາດ
ເລີຍລ່ວງຂ້າມ　　ຫຼາຍລ້ານລູກດອຍ
ວອຍ ໆ ດັ້ນ　　ຕາມອິງເທາະຫອບ
ຄັນວ່າເຈັດຂວບມື້　　ວັນແລ້ວກໍຈຶ່ງເຖິງ
ຫຼີງເຫັນໂຮງສູງຫ້ອງ　　ປາງຫອງພຣະພໍ່
ມີແຕ່ຍອດພຸ່ງພົ້ນ　　ມະນີແກ້ວສ່ອງໃສ ແທ້ແລ້ວ
ແຕ່ນັ້ນເຈົ້າຈຶ່ງພາພົນຍັ້ງ　　ທໍປາງຜາສາດ
ດອນແມ່ເຈົ້າ　　ສວັນຟ້າຢູ່ຄອງ ຫັ້ນແລ້ວ
ແຕ່ນັ້ນຝູງຜີເສື້ອ　　ຮັກສາເມືອງພຣະພໍ່ ບາງນັ້ນ
ເຂົາກໍມາຫໍ່ຫຸ້ມ　　ບາທ້າວດັ່ງຫຼັງ
ເຂົາກໍແລເຫັນເຈົ້າ　　ຕົນບຸນຄືນຄອບ
ຝູງໝູ່ປາຢູ່ນ້ຳ　　ສະງອມນ້ອມດີດຫາງ
ອັນນຶ່ງພິຊໄພດພ້ອມ　　ນົ້ມ່ວງບາວກາງ ກໍດີ
ບູທ່າງຈືຈູມບານ　　ແຕ່ປາຍເຖິງເຄົ້າ
ບາງພ່ອງສຸກເຫຼືອງແລ້ວ　　ບັງຈີຈູມດອກ ກໍມີ
ເພື່ອວ່າບຸນແຈ່ມເຈົ້າ　　ກຸມານນ້ອຍຕ່າວຄືນ
ຂໍກໍຍິນດີແທ້　　ອິດນາຫຼາຍເຕີບ ປີແລ້ວ
ສືບເຈັດຂວບເຂົ້າ　　ຣະດູໄດ້ຖ່າຍມາ ນີ້ແລ້ວ
ຝູງໝູ່ຄົນຄ່ອນເປັ້ງ　　ເງາະງ່ອຍຂາຕີດ ກໍດີ

| | |
|---|---|
| ເຂົາກໍເປັນຂາດີ | ປີບຄະໂຍງເຍງເຕັ້ນ |
| ຝູງໝູ່ເຂເລຫ້ອງ | ຂະບີໄອໄຂ້ປ່ວຍ ກໍດີ |
| ຝູງໝູ່ຂີ້ໄມ້ເຮື້ອນ | ຫາຍສ້ຽງເພື່ອບຸນ ແທ້ແລ້ວ |
| ທ້າວຈຶ່ງເອົາບາງແກ້ວ | ແຫວີຫັ້ງສີ |
| ກັບທັງພຣະແມ່ເຈົ້າ | ແພງລ້ານສູ່ສະຖານ |
| ກໍຫາກຫື່ນ ໆ ພ້ອມ | ບັກໝຸ່ມຂຸນນານ |
| ເຂົາກໍສົນ ໆ ໄປ | ຄວ່າເມືອງພຍາເຈົ້າ |
| ອັນວ່າຊາວເມືອງກ້າ | ປີດຕາຕິນພໍ່ |
| ເຫັນໝູ່ບັກທ່ຽວຫຼີ້ນ | ກາງຄຸ້ມຂ່ວງສນາມ |
| ເຂົາກໍແລຫຼຽງຍ້ຽມ | ເຫັນນາມມາທ່ຽວ |
| ເປັນທີປ້ານ | ຟັນແຂ້ວທໍ່ຂວັນ |
| ເຂົາກໍພາກັນລື້ | ທັງເມືອງສງັດຢູ່ |
| ບໍ່ອາດມີຜູ້ອື້ | ໄອໄດ້ເພື່ອກິວ ແທ້ແລ້ວ |
| ເຂົາຈຶ່ງເມືອທູນໄຫວ້ | ມະຫາວິງອິງພຣະຣາດ |
| ເລົ່າເຫດໃຫ້ | ນາມຮ້າຍທ່ຽວເມືອງ |
| ເມື່ອນັ້ນບຸນເຮືອງເຈົ້າ | ມະຫາວິງຕິນພໍ່ |
| ພຣະກໍຟັງພາກຖ້ອຍ | ຂຸນທ້າວຂາບທູນ |
| ເຈົ້າກໍທົງພຣະໄທແຄ້ນ | ພາຍໃນຂ້ຽວຂຸ່ນ |
| ເພື່ອວ່າປີດຸຄາດຮ້າຍ | ເຂັນເຂົ້າຄອບເມືອງ |
| ເມື່ອນັ້ນແສນເມືອງເຈົ້າ | ນາຍຫຼວງຊາເບດ |
| ເຂົາກໍຮ້ອນເຣົ່ງຂ້ຽວ | ຕີຄ້ອງປ່າວເຕີນ |

ພຣະກໍຈັດມາພ້ອມ　　ເສນານ້ອຍໃຫຍ່
ຕົກແຕ່ງຕັ້ງ　　ດາໄວ້ຊູ່ພາຍ
ແຕ່ນັ້ນແສນເມືອງຜູ້　　ຖແລງກອນຖາມເຫດ
ສູນີ້ປູ່ເຂດດ້າວ　　ແດນຫ້ອງຝ່າຍໃດ
ສັງວ່າກາຍຄຳເຈົ້າ　　ເວສຸວັນສອນສັ່ງ ສັນນີ້
ອັນນີ້ກໍຫາກແມ່ນດ່ານດ້າວ　　ແດນທ້າວຝ່າຍຄົນ ແທ້ດ້າຍ
ແຕ່ນັ້ນຝູງເຂົາຂ້າ　　ຂຸນນາບຍັກໜຸ່ມ
ເຂົາກໍຮັບພາກຖ້ອຍ　　ໄຂແຈ້ງບໍ່ບັງ
ຕູນີ້ບໍ່ໄດ້ເປັນຂ້າເຈົ້າ　　ພຍາເວດສຸວັນ ທ່ານເອີຍ
ຕູຫາກເປັນບໍຣິວານເຈົ້າ　　ກຸມານພຣະເກດ
ເດີນເຫດດ້າວ　　ເອົາເຫງົ້າແມ່ນາ
ຊື່ວ່າກະສັດຕີແກ້ວ　　ນາງງາມແດງອ່ອນ
ທ່ານກໍນຳແມ່ເຈົ້າ　　ຄືນເຂົ້າສູ່ເມືອງ ນີ້ແລ້ວ
ແຕ່ນັ້ນແສນເມືອງຮູ້　　ບາຄານເດີນຮອດ
ເຈົ້າກໍຂື້ນຂາບໄຫວ້　　ທູນທ້າວພຣະຍອດເມືອງ
ອັນວ່າຂຸນນາບເຂົາ　　ເມືອງເຮົາເດີນທ່ຽວ ດຽວນີ້
ຫາກແມ່ນນາບ່າວທ້າວ　　ບຸນກວ້າງໜໍ່ເມືອງ
ທ້າວກໍນຳນາງແກ້ວ　　ມາດາຕົນແມ່
ມາປູ່ນັ້ງ　　ທໍແກ້ວແຫ່ງນາ ວ່າອັນ
ເມືອນັ້ນນ່າຍ ໆ ໜ້າ　　ປິດຕາຕົນພໍ່
ພຣະກໍຊົມຊື່ນຕ້ານ　　ຄຳເມ້ງແມ່ນມະໂນ ແທ້ແລ້ວ

ດີ ໆ ແລ້ວ ສາຍໃຈເຈົ້າພໍ່ ກູເອີຍ
ລູກຫາກບຳແມ່ເຈົ້າ ຄືນເຂົ້າສູ່ເມືອງ ດີແລ້ວ
ສູຈົ່ງປຸນເປືອງຟ້າວ ເຣວພລັນໂດຍຣີບ
ໃຫ້ໄປເຊີນທິພຍອດແກ້ວ ສອງເຈົ້າບັ້ງສເວີຍ ວ່າເນີ
ພຣະຈິ່ງບອກສໍ່າຂ້າ ຕໍໂກ່ນທົນຂຸດ
ແປງທາງໄປ ແຕ່ເມືອງເຖິງທ້າວ
ແລ້ວຈິ່ງປູກກ້ວຍອ້ອຍ ເດັ່ງດາດຕາມທາງ
ມີທັງແພຂາວກວັດ ກາດນຸງບິນກັ້ງ
ແລ້ວຈິ່ງປູສາດກັ່ງງ ຕາມແຜ່ນທໍຣະນີ
ຢ່າໃຫ້ມີດິນຕິດ ແປດຕີນບາທ້າວ
ແຕ່ນັ້ນແສນເມືອງຜູ້ ນາຍຫວງຊາເນດ
ຄືນຄອບທ້າວ ພຣະເມືອງຮູ້ຮ່າງການ
ບັດນີ້ຝູງຂ້າໂດຍອາດເຈົ້າ ຍັງຂະນ່ອມເໜືອຫົວ
ຂ້າກໍແປງທາງເຖິງ ຮອດບາພາຍພຸ້ນ
ມີທັງແພຂາວກັ້ງ ບັງບິນເຮືອງເຮືອ
ສາດອ່ອນກັ່ງງ ເຄືອກ້ວຍກ່າຍລໍາ
ແຕ່ນັ້ນມະຫາວົງເຈົ້າ ປິດຕາຕີນພໍ່
ເຈົ້າກໍເຕີນໄພ່ນ້ອຍ ດາຫ້າງແຕ່ງພາຍ
ກັບທັງຣິດເຫຼັ້ມແກ້ວ ທາງກົງສີວິກາຍ
ອາຊະໄນຫງມ ຫົງແຂວນຂວາຊ້າຍ
ຝູງໝູ່ນາຍນັກການໃຫ້ ດາດີຕິກແຕ່ງ

ແສນສ່ຳຫ້າວ ໄຫຼລົບອອກວຽງ
(ບຶດ ໆ ບ້າຍ ແສງອອກຫາງຫຼວງ
ພົບແພນໄຫຼ ລັ່ງການລືລ້າຍ
ປາຍເປັນຖ້ອງ ຫຼາຍແຖວຖັບຖີ)
ໄທທອກງ້າວ ລືລ້າຍແຫ່ພຣະອົງ
ກໍຫາກເສີບ ໆ ພ້ອມ ພັງທອງປ້ອງໝູ່
ເດີນກ່ອນໜ້າ ພຍາເຈົ້າລ່ວງໄປ ຫັ້ນແລ້ວ
ແຕ່ນັ້ນເສນາພ້ອມ ນຸບຕີແຫນແຫ່
ປະດືປືນຊ້ອງ ໄປໜ້າກ່ອນພົບ
ເທື່ອນີ້ເຮົາກໍ ມີໄຊໄດ້ ຕົນບຸນມາໂຜດ ເຮົາແລ້ວ
ເຂົາກໍສົບ ໆ ເຕັ້ນ ໄທລາໄປກ່ອນ
ຝູງໝູ່ສາວສ່ຳນ້ອຍ ປະສົງເອ້ອວດໄປ
ເຂົາກໍໄຫຼລັ່ງລົ້ນ ຈຳແຫ່ນບາດານ
ຫົກພຣະອົງຄອຍ ລ່ຳດູເຫຼືອລົ້ນ
ເນື້ອນັ້ນເໜືອຫົວເຈົ້າ ເຖິງອົງພຣະລູກ
ຊັດເຂົ້າໃກ້ ທັນເຫງົ້າທີປາງ
(ຄ້ອມຣອດແລ້ວ ພັກຈອດຖັບຄວນ
ບາດານຖວາຍບັງຄົມ ພໍ່ພຣະອົງເປັນເຈົ້າ
ທ້າວກໍວັບທາໄຫວ້ ປິດຕາຕົນປະເສີດ
ນາງນາດເຫງົ້າ ຖວາຍເຈົ້າປູ່ສະລອນ
ແຕ່ນັ້ນເຊື້ອສ່ຳເຫງົ້າ ແນວໜໍ່ນາມກະສັດ

ເສນາທັງມຸນຕີ ນັ່ງລຽນເປັນຖ້ານ
ເຂົາກໍເຫັນນາງແກ້ວ ກະສັດຕີແດງອ່ອນ
ຕັ້ງວ່າງາມລື່ນລົ້ນ ເຫຼືອລ້ຳກວ່າຫຼັງ
ກັບທັງກັລຍາແກ້ວ ນາງງາມທັງສີ
ເຂົາຫາກຫຼິງລ່ຳຢ້ຽມ ຕາກະດ້າງເພື່ອແລ ແທ້ແລ້ວ
ແຕ່ນັ້ນປິດຕາເຈົ້າ ເຫັນນາງພຣະແມ່ ນານັ້ນ
ກັບທັງລູກສະໃພ້ ທັນເທົ້າສີນາງ
ຕັ້ງວ່າແປ່ນແວ່ນໜ້າ ງາມຍິ່ງເຫຼືອຖນັດ
ຜັດແຕ່ໃນໂລກີ ບໍ່ຫ່ອນມີໃຜພ້ຽງ
ອັນວ່າປິດຕາເຈົ້າ ມະຫາວົງຕົນພໍ່
ເຈົ້າກໍເຫັນໜໍ່ນ້ອຍ ກຸມານທ້າວລູກຕົນ
ມີທັງລີພົນລ້ອມ ຂຸນນາງອະນັນເນກ
ຫຼາຍສ່ຳຖ້ານ ເຫຼືອລົ້ນໝູ່ນາງ
ພຣະກໍຈຳເຂົາເຂົ້າ ຖວາຍຫຽນຕົນລູກ
ບອກວ່າເຊີນໜໍ່ແກ້ວ ເມືອສ້າງສືບເມືອງ ວ່າເນີ
ແຕ່ນັ້ນແສນເມືອງເຈົ້າ ນາຍຫຼວງຊາເນດ
ກັບທັງເພັ້ງຈ່າບ້ານ ໄປພ້ອມພ່ຳກັນ
ເຂົາກໍທູນຊູລີໄຫວ້ ນັສການກົ້ມຂາບ
ບຸດຣາດນ້ອຍ ບຸນກວ້າງໜໍ່ເມືອງ
ສາທຸທ້ອນ ພຣະເພິ່ງຊີວາ
ຂໍກູນາ ໂຜດຜາຍຝູງຂ້າ

ຫ້າມຈຳໜ່າຍ

ຝູງຂ້າອັງເຊີນເຈົ້າ    ນີຣະມິນດິນປະເສີດ
ເມືອສືບສ້າງ    ເປັນເຈົ້ານັ່ງປອງ ພຣະເອີຍ
ຝູງຂ້າຄຶດຄ່ອງຂໍ້    ຄອງຂ່າວເໜືອຫົວ
ອັນວ່າປິດຕາທົງ    ແທ່ນທອງດູເຖົ້າ
ເຊີນແຈ່ມເຈົ້າ    ແທນສືບວົງກະສັດ
ຕາມປະເພນີ    ແຕ່ປາງປະຖົມຕັ້ງ
ແຕ່ນັ້ນອົງບານເຈົ້າ    ກຸມານຂານຕອບ
ຊອບທີພຣະພໍ່ເຈົ້າ    ທົງສ້າງສືບເມືອງ ຫັ້ນຖ້ອນ
ເຮົາບໍ່ເຊື້ອຊາດຊັ້ນ    ສັດຖ່ອຍກຸມພີ
ກໍບໍ່ຄວນແທນທົງ    ສືບເມືອງສເວີຍສ້າງ
ອັນນຶ່ງເຮົາກໍບີນອາຍໜ້າ    ເສນາພວກໄພ່
ໃຫພວກນ້ອຍ    ຊີຫົວລ້ຫຼໍ່ ຂວັນ ຫັ້ນແລ້ວ
ອັນນຶ່ງເຮົາຈັກແປງເມືອງຕັ້ງ    ຫາງເມືອງຮຽງພໍ່ ນີ້ແລ້ວ
ຝູງໝູ່ຍັກລັ້ງລົ້ນ    ນາພ້ອມຊີແຕ່ງເມືອງ ທ່ານເອີຍ
ລືຈັກໄລລາຖົ້ມ    ປາງທອງພຣະແມ່ ເປັນລື
ອັນວ່ານາງແມ່ລ້ຽງ    ປະສົງຕັ້ງແຕ່ງມາ ແທ້ນາ
ອັນນຶ່ງເຮົາຈັກພາເຂົາຕັ້ງ    ແປງເມືອງພາຍນອກ ນີ້ແລ້ວ
ປູ່ຂອກຂ້າງ    ພຣະເມືອງເຈົ້າພໍ່ເຮົາ ທ່ານເອີຍ
ແຕ່ນັ້ນເມືອງແສນເຖົ້າ    ສອງທີນ້ອມນ່ຽວ
ເຂົາກໍເກາະກ່ຽວເຈົ້າ    ບຸນກວ້າງຄ່ອຍເມືອ ກ່ອນຖ້ອນ
ອັນວ່າຝູງຍິງຮ້າຍ    ໂວຍະກາແມ່ລູກ

| | |
|---|---|
| ພຣະກໍຈັບພູກຄ້ອງ | ຂັງໄວ້ພ່ານານ ແລ້ວເດ |
| ຕາມແຕ່ເຈົ້າ | ທັງສອງຊິທຳໂທດ |
| ແມ່ນຊິຟັນເລືອດລ້າງ | ບຳຊືບໃສ່ເກືອ ກໍຕາມ |
| ຝູງໄດ້ກິນຄ່າຈ້າງ | ນ້ອຍໃຫ່ງຂຸນນາງ ດັ່ງນັ້ນ |
| ພຣະກໍປົງອາດບາ | ໃສ່ຄາຈຳໃສ້ |
| ຈັບໜົດສ້ຽງ | ຖວາຍອົງບຸດຣາດ ຖ້ວນແລ້ວ |
| ບັດນີ້ພຣະຈັກເຊີນຍອດແກ້ວ | ນາງເໜົ້າແມ່ເມືອ ວ່າອັນ |
| ເມືອນັ້ນນາໄທທ້າວ | ໄປທູນພຣະພໍ່ |
| ເອົາແຕ່ແມ່ແຈ່ມເຈົ້າ | ເປັນຖ້ອຍລູກບໍ່ ຂືນ ພຣະເອີຍ |
| ຄັນວ່າແມ່ແຈ່ມເຈົ້າ | ຄືນສູ່ສເວີຍເມືອງ ດັ່ງນັ້ນ |
| ລູກບໍ່ ຂືນບຸນເຮືອງ | ພໍ່ພຣະອົງຄືນສ້າງ |
| ແຕ່ນັ້ນກໍຫາກຈົນໃຈເຈົ້າ | ປົດຕາຕົນພໍ່ |
| ຄຶດເມື່ອຄາວກ່ອນກີ້ | ຕີຊ້ຳໄລ່ໜີ ແທ້ແລ້ວ |
| ພຣະກໍຄຶດໃຄ່ຄ້ານ | ອາຍອ່ອນເມັຽຂວັນ |
| ເປັນພຣະເວີພຣະວາຈິດ | ຍາກກໍໃຈຫຼາຍຊັ້ນ |
| ຄັນຈັກຍໍຂັນຂຶ້ນ | ຂໍຍອມຍັງໂທດ ດັ່ງນັ້ນ |
| ກໍຫາກພິດຣີດບ້ານ | ຄອງເຖົ້າແຕ່ປະຖົມ ແທ້ແລ້ວ |
| ອັນນຶ່ງກໍຈັກເສັງຍອດແກ້ວ | ນາງນາດມະເຫສີ |
| ປ້ານທໍ່ເສັງເທວີ | ພຣະຍອດນາງເມັຽເຖົ້າ |
| ຄວນທີ່ກູອອຍເບົ້າ | ປອງເອົາໄດຍວາດ ຈຶ່ງເຖິງ |
| ຊາດທີ່ແນວໜໍ່ເຊື້ອ | ບິງນີ້ຫາກມັກອອຍ ແທ້ແລ້ວ |

ແຕ່ນັ້ນທ້າວກໍຄັກເຄັ່ງເຂົ້າ ຫາບາງເມັງເກົາ
ທ້າວກໍຊັບຊິນເວົ້າ ສຽງນ້ອຍອິນອອຍ
ບັດນີ້ພີກໍຂໍເຊີນນ້ອງ ເຫວີເມືອແທ່ນ ເຮົາຖ້ອນ
ໃຫ້ເມືອຕຸ້ມໄພ່ນ້ອຍ ຫອມຂ້າໄພ່ເມືອງ ນ້ອງເອີຍ
ອັນວ່ານັກເຣດລ້າ ລ້ານໂຍດບູຂວາງ
ພີຂໍຖວາຍຈອມນາງ ນັ້ງປອງເປັນເຈົ້າ
ແຕ່ນັ້ນຈອມໃຈເທງົ້າ ນາງງາມແຕງອ່ອນ
ນາງກໍເປື້ອງງ່ອນດົ້ນ ສະແດງຂ້າງໃສ່ພຣະອົງ
ນາງບໍ່ມີຈາຕ້ານ ນຳພຣະອົງຈັກສິງ
ຄຶດເມື່ອຄາວກ່ອນກົ້ ບໍ່ມີເອື້ອອ່າວຄອຍ ດອກນາ
ອັນນຶ່ງຍັງເລົາເຈັບຂມອງໄໜ້ ໃນທວງກັ້ນສວາດ
ເຈັບເພື່ອໄດ້ຈາກບ້ານ ໄກໜ້າພຣະລູກຄີງ
ອັນວ່າຄາວກ່ອນພຸ້ນ ສອງຮ່ວມຮຽງສເນ ແທ້ແລ້ວ
ພາຍຫຼັງມາ ເລົ່າມີຄົບພ້ອງ
ເຈົ້າບໍ່ມີຄຳຕ້ານ ຕາມຄວາມຄຳຊອບ
ເສງທໍ່ໃຈໂກດກ້າ ຕີຂ້າໄລ່ໜີ
ອັນນຶ່ງນ້ອງນີ້ບໍ່ປາກເດີນດຽວດັ້ນ ຄີ ຣີຣາວເຄືອນ
ຈິງໄດ້ເບື້ອນຍາກກັ້ນ ກອຍໄຫວ້ຣ່ຳຣຽນ
ອອດ ໆ ກັ້ນ ກັບບາດປາທາ
ວອຍ ໆ ຂໍ- ໂຫດໂພຍດອມເຈົ້າ
ພີບໍ່ມີຈາເວົ້າ ນຳອວນຈັກສິງ

ມືທໍ່ຈັບຂວັນໄວ້ ຫວາຍແສ້ໃສ່ຫຼັງ
ເຊີນພຣະເມືອນັ່ງສ້າງ ສເວີຍຣາດໂກສີ ນັ້ນຖ້ອນ
ພຣະຈິງເອົາເຫວີ ຫ້ານາງຫຽນຊ້ອນ
ແຕ່ນັ້ນຣາຊາເຈົ້າ ມະຫາວິງຄະນິງນາກ
ພຣະກໍປາກບໍ່ໄດ້ ຂາຍນ້ອງນາຖແພງ
ແຕ່ນັ້ນຈັກກີເຈົ້າ ສອງທີນ້ອມນ່ຽວ
ພີ່ກໍຂໍກ່ຽວເຈົ້າ ຄືນເຂົ້າສູ່ເມືອງ ແດ່ຖ້ອນ
ໃຫ້ພີ່ຂໍດອມເຈົ້າ ຈອມພຣະນາງເບື້ອນໃພດ
ພີ່ນີ້ໄພດພາດແທ້ ຂໍນ້ອງໃພດພາຍ ກ່ອນຖ້ອນ
ພີ່ຫາກໃນໃຫຮ້າຍ ຟັງຄຳຄືນຖ່ອຍ
ພີ່ກໍຄຶດບໍ່ຖ້ອງ ໃຈລ້ຽວແຫ່ງເຂົາ ນ້ອງເອີຍ
ພີ່ຈິງຄຶດຮຸ່ງຮູ້ ໄດ້ເມືອພາຍລຸນ ນີ້ແລ້ວ
ຈິງໄດ້ຈັບເອົາຂັງ ໃສ່ຈອນຈຳໄວ້
ອັນວ່າໄອຍະກາເຖົ້າ ແສນເມືອງຄືນຖ່ອຍ
ຜູ້ໄດ້ກິນຄ່າຈ້າງ ຈຳເຂົ້າຄອກຂັງ ຖ້ວນແລ້ວ
ຕາມແຕ່ນ້ອງ ຊິທຳໂທດສັນໃດ
ນ້ອງຈັກຟັນຫົວເສັຽ ກໍສ່ວນຕາມໃຈເຈົ້າ
ນ້ອງຈັກເອົາເຂົາເຂົ້າ ມອງຫາງຕຳສາກ ກໍຕາມຖ້ອນ
ລືຈັກເອົາເຂົ້າໜ້ຳ ຂາງຕົ້ນຕ່າວຈືນ ຢ່າເປີ
ພີ່ບໍ່ຂືນຖ່າວກ້ອຍ ການມ່ອມມີປະສິງ
ພີ່ຫາກຕາມໃຈອວນ ຊູ່ອັນລາງແລ້ວ

ພຣະກໍໂລມນາງແກ້ວ ຄຳງາມຫຼາຍສິ່ງ
ເດີກຊັກໃຊ້ ນາງແກ້ວປາກນອນ
ນາງຕ່າວໜ້າ ຖແລງຕໍ່ພຣະອົງການ
ຕາມແຕ່ໃຈນາງຄານ ທີ່ເຄືອງພຣະໄທແຄ້ນ
ປງວວ່າເມັງແພງເຈົ້າ ຈອມຂວັນກັບປະຖົບ ອີຫຼີ ນາ
ສັງວ່າເອົາເພີນເອົ້າ ຂັງໄສ້ໃສ່ຈວນ ນັ້ນເດ
ຕັ້ງແມ່ນເມັງແຕ່ຟ້າ ພຣະອົງຮ່ວມແນນມາ ແທ້ດາຍ
ເມັງແຕ່ແນນພຣະອົງອວນ ກ່ອນພຣະໄມໝາຍໝັ້ນ
ຮຽມນີ້ຍິ່ງເກຣ້າຍ ສາທານໃນໂລກ
ລົງຫຼື້ ນນ້າຊູ່ ນີ້ ບໍ່ມີເວັ້ນວ່າງວັນ ຫັ້ນແລ້ວ
ອັນນຶ່ງຂ້ອຍກໍເອົາແນວເຊື້ອ ກຸມພີສິນເສບ
ກໍຈິງນັງເກີດຂຶ້ນ ເປັນເຊື້ອຊາດຮຽມ ພຣະເອີຍ
ກໍບໍ່ຄວນທີ່ເອົາເມືອຊ້ອນ ດອມພຣະອົງຮຽງພ່າງ
ຂໍໃຫ້ພູທີອ້າງ ເມືອສ້າງນັ່ງເມືອງ ຫັ້ນຖ້ອນ
ຄ້ອນວ່ານາງກ່າວແລ້ວ ສະລຶງປູ່ ມີຈາ
ຣາຊາພຣະ ຊ່າງດູນອນແທນເຮືອງ
ໂອນໍ້ອງເອີຍເຈົ້າຢ່າໄສກາດັ້ງ ນັນທະພານເມືອງໃຫ່ງ ຊີໄດຖ້ອນ
ຫັດຈັກມັນຫາກມໍຣະນຶງມ້ຽນ ເມືອຟ້າຢ່າຄອງ ພີຖ້ອນ
ແໜງນ້ອງຄືນເມືອຫ້ອງ ໂກສີເມືອງໃຫ່ງ ເຮົາຖ້ອນ
ເຈົ້າຈິ່ງເມືອສືບໄວ້ ສີນຊ້ອຍສົງທານ ນ້ອງເອີຍ
ແມ່ນວ່ານັນທະພານກວ້າງ ລວງຍາວສິບສອງໂຍດ ກໍດາຍຖ້ອນ

ຫັຖຈັກມັນຫາກຕາຍຈາກແລ້ວ ພຣະນາງນ້ອງຢ່າຄອງ ພີ່ເນີ
ຄວນນ້ອງເພື່ອສິມສ້າງ ສິບຫານບຳສິ່ງ ມັນຖ້ອນ
ນ້ອງຈິ່ງເພື່ອກໍ່ສ້າງ ບຸນບູ້ຮອດມັນ ພີ່ຖ້ອນ
ອັນນີ້ພູຫອນຫ້າວ ຖຸໃນນາງສວຍສຽດ
ນາງຊ້ຳຄຽດບໍ່ແລ້ວ ນາງແກ້ວຊ້ຳບໍ່ຈາ
ມະຫາກະສັດເຈົ້າ ຈາໄປຫຼາຍສິ່ງ
ຕ້ານຕໍ່ເຈົ້າ ແພງຊ້ອຍຊ່າງຖນອມ
ແມ່ນວ່າພີ່ຫາກໄດ້ຂຶ້ນຟ້າ ເຖິງຍອດດາວະດຶງ ກໍດີ
ນ້ອງບໍ່ບິນດີດອມ ເພິ່ງບຸນເພື່ອໜ້າ ແດ່ລື ?
ແມ່ນພີ່ເປັນເຈົ້າຟ້າ ຕິບຊື່ ສີສຸດໂທ ກໍດີ
ນາງບໍ່ປາຖນາບຳ ດ່ວນໂດຍດອມອ້າຍ ແຫ້ບໍ່ ?
ແຕ່ນັ້ນນາງກະສັດແກ້ວ ຄຶດຮ່ຳຄະນຶງໃນ
ກູນີ້ແນວນາມຍິ່ງ ບິດພອນພາງນ້ອຍ
ລືຈັກຫຽມຫັນເຫົ້າ ສະກຸນຊາຍບິດມາກ ໄດ້ນັ້ນ
ປຽບດັ່ງແສງຫິ່ງຫ້ອຍ ຊິຫຽມເຫົ້າໜ່ວຍພຣະຈັນ ໄດ້ເດ
ອັນທີ່ຄວາມຜິດນັ້ນ ທັມມະດາເດີມໂລກ
ໃນໍ່ ມີອາດຂ້ວາມ ຂີນໄດ້ຮ່ອນໄດ
ອັນນີ້ໂລກເລົ່າໄວ້ ປາງກ່ອນປູຂວາງ
ກູນີ້ແນວນາມຍິ່ງ ປາຖນາກໍບັງເອີ້ງ
ແມ່ນວ່າມີສຸກລົ້ນ ລືຊາເຊັ່ງຊ່າ ກໍດີຖ້ອນ
ກໍເພື່ອບຸນເພົ່າຜູ້ ຜິວແກ້ວເຫຼື້ອມງຳ ຫັ້ນແລ້ວ

ອັນນຶ່ງແມ່ນວ່າສິນບັດລົ້ນ ອະນັນຕັງແສນໂກດ ກໍດີຖ້ອນ
ຄັນວ່າໝົດເຜົ່າຜູ້ ຜິວແກ້ວສາບສູນ ແທ້ແລ້ວ
ຄັນວ່ານາງຮ່ຳແລ້ວ ຄະນິງປູ່ຊື່ງລື່ງ
ພໍປະມານເລີຍ ທ່ຽງຄືນຫນາວຈ້ອຍ
ນັບແຕ່ພຣະອອນນ້ອງ ເຖິງແຖໃກ້ຮຸ່ງ ນາແລ້ວ
ອັນວ່ານາງນາດນ້ອຍ ເຫງົາງ້ວງນັ່ງຊິງ
ນັບແຕ່ສອງຈາຕ້ານ ອອຍກັນໃກ້ຊິຮຸ່ງ ນາແລ້ວ
ສຸຣິເຍດຍ້າຍ ເຮືອງຂຶ້ນຂອບເຂົາ
ແຕ່ນັ້ນເສເນດເຕົ້າ ຄ້ອນຕ່ອຍຕີກອງ
ເຄັງ ໆ ສຽງ ຂຸ່ຍລະບຳເຟືອນຟື້ນ
ເຂົາກໍຍິນດີໄດ້ ຕິນບຸນສເວີຍຣາດ
ຝູງໝູ່ອາມາດທ້າວ ຂຸນເຖົ້າຊືນຊົມ
ຫົມ ໆ ຫ້າງ ກວຽນທອງຣົດຣາດ
ອາມາດພ້ອມ ເຊີນທ້າວທ່ຽວລີງ
ແຕ່ນັ້ນກຸມານທ້າວ ບາບຸນບຸຕຣາດ
ສະເດັດດ່ວນຂຶ້ນ ກົງແກ້ວນັ່ງສະຖຽນ
ອັນວ່າສືບອດແກ້ວ ທັງແມ່ມາດາ
ທັງສີວິກາຍ ຊູ່ນາງຕາມທ້າວ
ອັນວ່າສາຣະວັນທ້າວ ຜີເມືອງຕີນພີ
ພຣະກໍທັງຣົດແກ້ວ ຫຼາຍເຫຼັ້ນລ່ວງຕາມ
ດີທໍ່ນານ ໆ ເຫຼື້ອມ ປະດີໄຊຄັນກົງ

ຝູງໝູ່ຄົນມາກລົ້ນ ຕາມສົ້ນແຫ່ພຣະອົງ
ກໍຫາກເຫຼືອຫຼາຍແທ້ ທໍຣະນີເຟືອນຟັ່ງ
ສຽງເສບເຈົ້າລຸ່ມຟ້າ ດັງຂຶ້ນຮອດພົມ
ມີທັງທົມ ໆ ພ້ອມ ຊຸບມາບຍັກໃຫ່ງ
ປົນແປກເຊື້ອ ຊາວບ້ານບໍ່ກົວ
ໜົວ ໆ ເຕົ້າ ກະທໍາການກັບແຫ່
ເສບພຣະຜູ້ເປັນເຈົ້າ ຄືນເຂົ້າສູ່ເມືອງ
ເລີບເລົ່າຖອງເຖິງຫ້ອງ ວຽງໄຊຄຸ້ມຂ່ວງ
ສຽງມີກ້ອງ ດັງຂຶ້ນຮອດພົມ
ແຕ່ນັ້ນເຂົາກໍເຊັງຊ່າເວົ້າ ເທົ້າທົ່ວທັງເມືອງ
ແຊວ ໆ ສຽງ ແລ່ນມາທັງຄ້າຍ
ເຂົາວ່າພຣະບາດເຈົ້າ ບຸດຣາດບຸນມີ
ທັງເທວີ ສີພຣະອົງງາມລົ້ນ
ກັບກະສັດດີແກ້ວ ບາງງາມແຕງອ່ອນ
ງາມລື່ນລົ້ນ ເຫຼືອພົ້ນກວ່າຫຼັງ ໆ ແທ້ແລ້ວ
ລາງຄົນຕາບອດເບື້ອງ ຟ້າວແລ່ນງົມງວາ
ຕີນຕໍາຕໍ ແລ່ນຖອຍຫຼັງໜ້າ
ລາງຄົນບົນຍາບເທົ້າ ລົງເຖິງຫ້ອງປ່ອນ
ບັງວ່າຟ້າວແລ່ນເຕັ້ນ ບົນກ້ຽວຮອບໂຕ
ລາງສາວຟ້າວ ໂຕນເຮືອນສົ້ນຂາດ
ສົ້ນເລົ້າເກາະກອດຄ້າງ ຂັ້ນໄດໄວ້ຂາດສະເດັນ

ລາງຄົນຍັງກິນເຂົ້າ ຫງ້າປູ່ບໍ່ຫັນກິນ ກໍມີ
ເຫັນເຂົາໄປ ພົບເສັ້ງໂຕນເຕັ້ນ
ລາງຄົນບັ້ງປ່ອງບໍ້ ໃຫ້ລູກກິນນົມ
ເຫັນເຂົາໄປແຊວ ໆ ກໍເລົ້າຫຼົງບາຍຖິ້ມ
ກໍເພາະໃຈຫຼົງຟ້າວ ປົບໄປນຳເພິ່ນ
ແມ່ນວ່າອຸ້ມລູກໄວ້ ກໍບາຍຖິ້ມດັ່ງຂອນ ຫັ້ນແລ້ວ
ລາງພ່ອງຟ້າວ ຊູນກັນຫົວແຕກ ກໍມີ
ປາກເຫັນຫົກແຈ່ມເຈົ້າ ເຂົາຫົວງວ່າງາມ ຫັ້ນແລ້ວ
ລາງຄົນປະລູກໄວ້ ໃນອູ່ປົບໜີ
ຜົວກໍຈາສຽງແຂງ ດ່ານຳເມັຽແກ້ວ
ນຶ່ງສັງປະລູກໄວ້ ໃນອູ່ປົບໜີ ດັ່ງນີ້
ນຶ່ງປ່ານມາເຮືອນກູ ຊິບໍ່ດີຈັງແທ້
ລາງສາວຟ້າວ ໂດນເຮືອນສົ້ນເຄັ້ງ ກໍມີ
ບັງເລົາປົບແລ່ນເຕັ້ນ ເຫັນໜ້ອງເຕົາສະກົນ
ຝູງບ່າວນ້ອຍ ຫົວຂວັນຊີຊວ່າ
ຕັ້ງຫາກມາໜ່ານເດ ດີແທ້ເພດຜີ ນີ້ນໍ
ນັນກໍກຸມຈົກໄດ້ ງົມງວາຊອກເບິ່ງ
ຫຼຽວງວາກພຸ້ນງວາກພີ້ ນຶ່ງອຸ້ມແລ່ນຄືນ
ແຕ່ນັ້ນບາງຈົກພ້ອມ ນົງພາວຫ້າອ່ອນ
ເຂົາຫາກດາຄອກໄສ້ ດາດົ້ນປາກເຫັນ
ແຕ່ນັ້ນບາຄານຫ້າວ ພານາງກັບແມ່

ຂຶ້ນສູ່ຫ້ອງ ທໍ່ແກ້ວແທ່ນທອງ
ກໍຫາກບໍ່ຣະບວນບັ້ນ ບາຄານທັງແທ່ນ
ແລ້ວທໍ່ນີ້ ຖວາຍໃຫ້ທີ່ຄວນ ກ່ອນແລ້ວ ຯ

## ບັ້ນພຣະອິນມາຫົດໂສງທ້າວເກດສຸຣິຍົງບ້ງເມືອງ

ບັດນີ້ຈັກກ່າວເຖິງອິນຕາເຈົ້າ ຄອງສວັນດິນອາດ ກ່ອນແລ້ວ
ພຣະກໍຫຼີ ໆ ລ່ຳປ້ຽມ ບາເຂົ້າສູ່ເມືອງ
ເຈົ້າຈິ່ງວິກແຕ່ງຫ້າງ ເຄື່ອງທິບເມືອງສວັນ
ເຮົາຈັກລົງໄປຫົດ ທໍ່ໃພທີ່ບານເຈົ້າ
ແຕ່ບັ້ນອິນກໍເອົາມາພ້ອມ ສາວປະເສີດເມືອງສວັນ
ສາມພັນນາງ ລ່ວນລົງມາພ້ອມ
ກັບທັງຫອຍສັງບັ້ນ ພຣະອິນເອົາມາເປົ່າ
ກັບທັງພິນສີໜ້າ ລົງເນ້ອມເສບພຣະອົງ
ຟັງບິນໃບງ ໆ ຄ້ອງ ພຣະອິນເອົາມາເສບ
ກັບທັງຝົນທ່າແກ້ວ ລົງເທົ້າທົ່ວເມືອງ
ເຂົາກໍເນືອງນັບເຕົ້າ ຊາວເມືອງຊົມຊື່ນ
ຝູງໝູ່ຊ້າງແລະມ້າ ສະຖຸງບຣ້ອງມີນັບ
ແຕ່ບັ້ນອິນພົມພ້ອມ ເທໂວລົງຮອດ
ກັບທັງນາງແມ່ລ້ຽງ ລົງພ້ອມພ່ຳກັບ
ມີທັງນາຄຣາດກ້ຽວ ເປັນຮູບຣາງໂສງ

ລາຍເຄືອເກາະ ກ່ຽວກັນງາມລົ້ນ
ອັນວ່າເສົາໃສງນັ້ນ ປະດັບດາຖຸທຣາດ
ມີແຕ່ແກ້ວ ຄຳເຫຼື້ອມສ່ອງໃສ
ແຕ່ນັ້ນອິນດາເຈົ້າ ເຊີນບາບຸດຣາດ
ກັບທັງອົງອາດແກ້ວ ນາງເຫນົ້າສີຄົນ
ລົງໃສງນ້ຳ ລົນຄຳນາກກ່າຍ
ອັນວ່າອິນທີຣາດເຈົ້າ ບໍ່ນ້ຳລົງລົງ
ພົມມາເຈົ້າ ກະເສລາເຫງັ້ນລັ້ງ
ກັບທັງນາງແມ່ລ້ຽງ ສວັນຟ້າລົ້ງຕາມ
ມະຫາວົງເຈົ້າ ປົດຕາຕົນພໍ່
ພຣະແມ່ເຈົ້າ ບໍ່ເຫງັ້ນລັ້ງແຖມ
ກັບທັງເສນາພ້ອມ ນົວນາງນ້ອຍໃຫ່ຽ
ເຂົາກໍໄຫຼລົ້ງເຫງັ້ນ ລົນແກ້ວອານອົງ
ກໍຫາກນໍຣະນວນແລ້ວ ໃສງພຣະອົງຄົນໄດວ່
ອິນກໍພາແຈ່ມເຈົ້າ ນຸນກວ້າງສູ່ສະຖານ
ແຕ່ນັ້ນນັບດຶດຜູ້ ອາຈານທັງສີ
ເຂົາກໍເຂົ້າແຫນໃກ້ ປະນົມນີ້ວອ່ານພອນ
ໃຫ້ສວັສດີລົ້ນ ຢືນຍາວແສນຂວບ ປີຖ້ອນ
ອັນວ່າໄພຍພຍາດຣ້າຍ ໃຫ້ໜີເວັ້ນຫຼີກໄກ
ອັນນຶ່ງໃຫ້ໄດ້ທົ່ງສຸກສ້າງ ໂກສີສັດນາກ
ຣ້ອຍປະເທດດ້າວ ໄຫຼເຂົ້າສ່ວຍທອງ ເຈົ້າເນີ

ກ້ອນວ່າຖວາຍພອນແລ້ວ　　ອິນພົມປະສົມເສບ
ສຽງປີ່ຫ້　　ສະໄບໂອ້ກ່ອນສັງ
ຟັງຍິນຄວານ ໆ ກ້ອງ　　ພີເນືອງດີເສບ ພຸ້ນເປີ
ຕະໂພນພາດກ້ອງ　　ພົມເຈົ້າເສບພຣະອົງ
ແຕ່ນັ້ນເທພລີລາເຈົ້າ　　ເທພລີໄລທັງຄູ່
ສອງພີ່ນ້ອງ　　ຜັງເທົ້າແຫ່ງພຣະອິນ
ຂາກໍທວຍທົງເປື້ອງ　　ອັນຄຳລີງຫວ່ານ
ເຂົ້າຕອກທັງດອກໄມ້　　ບູຊາທ້າວໜໍ່ພຸດໂທ
ແຕ່ນັ້ນອິນຈຶ່ງເອົານາງໃຫ້　　ສາມພັນຖວາຍບາດ
ເປັນນຶ່ງແກ້ວ　　ຜັງເທົ້າຕ່ຳລົງ
ອັນວ່າປັດທຸມມານ້ອຍ　　ນາງສວັນລົງເກີດ
ເປັນເອກເຄົ້າ　　ທຽມເຈົ້າຝ່າຍຂວາ
ອັນວ່າກັລເຍດເຈົ້າ　　ນາງແກ່ນຈັນທອນ
ທຽມນາຄານ　　ປູ່ແຜງພາຍຊ້າຍ
ອັນວ່າອິນທອງແກ້ວ　　ແນວອິນລົງເກີດ
ທຽມແທນໃກ້　　ນາທ້າວຝ່າຍຫຼັງ
ອັນວ່າຄຳປາດຟ້າ　　ແກ້ວເຄືອບຄຳໄຫຼ
ສີໄວທຽມ　　ປູ່ເຜືອແຜງໜ້າ
ອັນວ່າສາວສວັນຟ້າ　　ສາມພັນອິນສົ່ງ ມານັ້ນ
ເປັນເອກເຄົ້າ　　ສນົມເທົ້າພໍ່າກັບ ແທ້ແລ້ວ
ອັນວ່າປິດຕາເຈົ້າ　　ມະຫາວົງອົງພໍ່ ພຣະອົງນັ້ນ

ຫົກໝື່ນນາງມອບໃຫ້    ເປັນໃຊ້ແກ່ບາ
ບາກໍທົງແຫ່ນສ້າງ    ໂກສີສເວີຍຣາດ
ແຫນຊາດເຊື້ອ    ຫອມຂ້າແປດອັກໂຂ ແຫ້ແລ້ວ
ບັດນີ້ບັດຖືບັ້ນ    ພຍາຫັນສເວີຍຣາດ
ແລ້ວທໍ່ນີ້    ຍໍໄວ້ທີຄວນ ກ່ອນແລ້ວ ຯ

## ບັ້ນອິນພົມສັ່ງລາທ້າວເກດສຸຣິຍົງຍານ

## ຄືນເມືອງເມືອງສວັນ

ບັດນີ້ຈັກກ່າວເຖິງອິນພົມເຈົ້າ    ນາງສວັນພຣະແມ່ ກ່ອນແລ້ວ
ຕ້ານສັ່ງພຣະຍອດແກ້ວ    ແພງລ້ານຊີລ່ວງເມືອ
ຄ່ອຍຢູ່ດີເປີເໜືອຫົວເຈົ້າ    ພຍາຫັນຜູ້ປະເສີດ ກູເອີຍ
ແມ່ຈັກລາຈາກເຈົ້າ    ເມືອຟ້າສູ່ສວັນ ກ່ອນແລ້ວ
ອັນນຶ່ງຢ່າໄດ້ມີໄພຍຕ້ອງ    ອິນຕາຍບັງບຽດ ແມ່ເນີ
ກັບທັງໄພຍພຍາດໄຂ້    ໃນເນື້ອຢ່າມີ ແດ່ຖ້ອນ
ແດ່ນັ້ນບຸນເຮືອງເຈົ້າ    ພຍາຫັນດີນລູກ
ຂານແມ່ເຈົ້າ    ນາງຟ້າສັ່ງລາ
ຄ່ອຍເມືອດີເປີສາຍຄໍແກ້ວ    ຈອມຂວັນພຣະແມ່ ຂ້ອຍເອີຍ
ຄັນເຈົ້າເມືອຮອດຫ້ອງ    ສວັນຟ້າລ່ຳແຍງ ລູກເນີ
ອັນນຶ່ງຫລອນວ່າມີໄພຍຕ້ອງ    ອິນຕາຍບັງບຽດ
ຂໍແກ່ຜູ້ທີ່ເຫງົ້າ    ມາດາເຈົ້າຢ່າໄລ ແດ່ຖ້ອນ

ທ້າວສັ່ງແລ້ວ　　ເທເວດອິນພົມ
ພຣະກໍນຳກົງຈັກ　　ຕ່າວຄືນເມືອງຟ້າ
ເຖິງຫີນຫ້ອງ　　ດາວະດຶງເມືອງເທບ
ເນົາຢູ່ຫ້ອງ　　ສວັນຟ້າຢູ່ສເວີຍ ຫັ້ນແລ້ວ
ເຈົ້າກໍບໍ່ເດືອດຮ້ອນ　　ສັພສິງການໃດ
ຢູທ່າງທິງວິມານຄຳ　　ສວ່າງສະບາຍເບົາຮ້ອນ
ບັງເລົ້າຫຼີງແລປ້ຽມ　　ບາບຸນຕິນປະເສີດ
ບໍ່ວ່າງເວັ້ນ　　ວັນນີ້ເປີງສເນີ ຫັ້ນແລ້ວ ຯ
　　ບັດນີ້ຈັກກ່າວກ້າ　　ເມືອງໃຫຍ່ຊຸມພູ ກ່ອນແລ້ວ
ກັບທັງເມືອງທັກຂິນ　　ຂອບຂີງໂກກວ້າງ
ເລີຍບໍ່ເຫັນຍັງແກ້ວ　　ບຸດຕີລູກນີງ
ເຂືອກໍກິ້ງເກືອນໄຫ້　　ຫາແກ້ວທ່ຽວເດີນ
ທຸກແງ່ເງື້ອມ　　ເຂົາໃຫຍ່ດອຍສູງ
ກໍບໍ່ເຫັນບາງແພງ　　ລູກຕິນຫີວໄຫ້
ພຣະຊ້ຳເດີນດ່ານດ້າວ　　ໃນເດືອນຫີມພານ
ຫຼາຍເມືອງໄປ　　ທ່ຽວດູພອງຜ້ຽນ
ກໍຈີງໄປເຖີງກ້າ　　ອະນໍຣະໂຄຍາທີບ
ຜັນຄືນເຂົ້າ　　ເຖີງເຫົ້າຊູ່ພາຍ
ແລ້ວຈີງໄປເຖີງເຫົ້າ　　ເມືອງໃຫຍ່ໂກສີ
ທູບພູນີ　　ຂ່າວຄາມເຖີງເຈົ້າ
ເລີຍເລົ້າເຫັນຍອດແກ້ວ　　ບາງບາດອິນທອງ

ສອງພຍາເຫັນ ລູກຕົນຫຽມຫ້າວ
ເຈົ້າກໍບ່າວ ໆ ໜ້າ ຊົລເນດນອງໄຫຼ
ພຣະຈຶ່ງມີຄຳໄຂ ຕໍ່ໄປເມືອໜ້າ
ແຕ່ນັ້ນບຸນເຮືອງເຈົ້າ ພຍາຫັນຫຼີງລ່ຳ
ເຫັນເພົາຜູ້ ສອງເຈົ້າບ່າວບົນ
ແຕ່ນັ້ນບຸພິດເຈົ້າ ພຍາຫັນຖາມຖີ່
ອັນວ່າລຸງທ່ານເຈົ້າ ມາໄຫ້ເຫດໃດ ນັ້ນເດ ?
ແຕ່ນັ້ນຣາຊາເຈົ້າ ຊຸມພູຂານຕອບ
ຂ້າກໍຮ້ອງຮ່ຳໄຫ້ ເຫັນແກ້ວລູກຕົນ ທ່ານເອີຍ
ອັນວ່າອິນທອງນ້ອຍ ຟ້າປາດຄຳເຫຼົາ
ບຸນເຮືອງເອົາ ແຕ່ ທີໃດມາພີ້ ?
ແຕ່ນັ້ນບຸນມີເຈົ້າ ພຍາຫັນຂານຕອບ
ເຮົາກໍເອົາແຕ່ດ້າວ ແດນເສື້ອບັກໄຂ
ກັບທັງມາດາແກ້ວ ຕົນເຮົາພ້ອມພ່ຳ
ອັນວ່າບັກແອ່ວອູ້ນ ເອົາໄດ້ດ່ອນໜີ ທ່ານເອີຍ
ເຮົາກໍເຫຼືອໃຈແທ້ ທະບານໄປມ້າງມຸ່ນ
ຕັດທ່ອນບັ້ນ ມັນນັ້ນຂາດລະເດັນ
ເຮົາຈຶ່ງສວາຍເອົາໄດ້ ນາງງາມທັງແມ່
ພາລ່ວງເຂົ້າ ເມືອງກວ້າງແຫ່ງຕົນ ນີ້ແລ້ວ
ແຕ່ນັ້ນສອງພຍາໄດ້ ຍິນຄຳທ້າວກ່າວ
ສອງກໍຊົມຊື່ນແມ້ງ ນະໂບຊ້ອຍຊອບພຣະໄທ

| | |
|---|---|
| ອັນວ່າສອງພຣະບາງແກ້ວ | ທຽມພຣະອົງເປັນລູກ ເຮົາແລ້ວ |
| ຂ້າກໍເປັນພີນ້ອງໃກ້ | ສາຍໄສ້ແຫ່ດຽວ ພຣະເອີຍ |
| ແຕ່ນັ້ນພຣະບາດເຈົ້າ | ຕ້ານຕໍ່ສອງພຍາ |
| ຄັນວ່າພຣະຈັກເອົາບາງເມືອ | ກໍບໍ່ຂືນໄຫຫ້າວ |
| ແຕ່ນັ້ນສອງພຍາຕ້ານ | ຖວາຍອົງພູວະບາດ |
| ຂ້າກໍຂໍເພິ່ງເຈົ້າ | ບຸນກວ້າງເຫຼືອມງຳ ແທ້ແລ້ວ |
| ຂໍໃຫ້ເປັນຂົວແກ້ວ | ຕະພານທອງທຽວທ່ອງ |
| ອັນວ່າເມືອງພຸ້ນພີ້ | ສເມີດ້າມດັ່ງດຽວ ຫັ້ນຖ້ອນ |
| ອັນນຶ່ງຂໍໃຫ້ໄມຕີຝັ້ນ | ພັນປີເທົ້າຊົ່ວ |
| ຂໍໃຫ້ເປັນຄູ່ແກ້ວ | ກັບແທ້ຊົ່ວຊີວັງ ພຣະເອີຍ |
| ແຕ່ນັ້ນພຣະກໍເທຂອງໃຫ້ | ເງິນຄຳທານທອງ |
| ໃຫ້ແກ່ສອງຜົວຜູ້ | ພຍາເຈົ້າພໍ່ບາງ ຖ້ວນແລ້ວ |
| ເມື່ອນັ້ນຫຼາຍວັນໄດ້ | ຫຼາຍຄືນແຖມຖ່າຍ ມາແລ້ວ |
| ອັນວ່າສອງທ່ານທ້າວ | ລາແກ້ວຍອດບາງ |
| ພ້ອມພໍ່ຕ້ານ | ລາລູກສາຍໃຈ |
| ຈອມຂວັນເອີຍ | ປູ່ດີປ່າເສົ້າ |
| ພໍ່ຈັກລາສູເຈົ້າ | ຄືນເມືອເມືອງເກົ່າ ກ່ອນແລ້ວ |
| ອັນວ່າສອງແຈ່ມເຈົ້າ | ທຽມເທວ້າປູ່ດີ ພໍ່ເນີ |
| ອັນນຶ່ງຄັນຫາກພໍ່ແມ່ພ້ອມ | ລຶດຊົ່ວເມືອພົມ ເມື່ອໃດ |
| ເຊືອຈົງພາກັນທານ | ສົງບຸນໄປຄ້ຳ |
| ອັນນຶ່ງເຊືອຈົງກອບໃຈຕັ້ງ | ພຸດທັງເປັນທີເພິ່ງ |

ຫັນສິງເປັນທີຕັ້ງ ສິບແກ້ວປ່າໄລ ແທ້ເນີ
ອັນນຶ່ງໃຫ້ຄ່ອຍອຸປຖາກເຈົ້າ ຜິວມີງບິວອະບັດ
ຄອງໄດດີ ແຕ່ງເດີນຕາມເຈົ້າ
ບານເມື່ອພູມີເຂົ້າ ໄສບາເບຫເບ່ງ
ສອງພີ່ນ້ອງ ພູບຮ້ອນແກວ່ງວີ ພໍ່ເນີ
ເມື່ອໃດພູມີຫ້າວ ໄສບາສະດຸ້ງດິ້ນ ນາງນັ້ນ
ໃຫ້ເຈົ້າບິກບຶ່ນບ້າ ຖວາຍແລ້ວກໍຈຶ່ງໜີ
ອັນນຶ່ງຜູ້ນຶ່ງບັງປູ່ຫັ້ນ ຜູ້ນຶ່ງລາໜີ
ສິນສີເອີຍ ຈຶ່ເອົາຄຳໝັ້ນ
ອັນນຶ່ງເສນາຫ້າວ ມຸນຕີນ້ອຍໃຫຍ່
ເຂົາຫາກມາປູ່ເຜົ້າ ແຜງລ້ອມຊູ່ວັນ
ໃຫ້ເຈົ້າຫຼີງແລປ້ຽມ ກະກູບສູງຕ່ຳ
ສຳຫຼັບເຂົ້າ ປຸນລ້ຽງພ່ຳສເນີ ພໍ່ເນີ
ອັນນຶ່ງເຖິງຣະດູຕັ້ງ ສັງຂານແຖມຖ່າຍ ນາງນັ້ນ
ເບັ້ງອັດເຈົ້າ ທານໃຫ້ຊູ່ຄືນ ພໍ່ເນີ
ເຂົາກໍກາງກີນຍ້ອນ ປີເດືອນສືບຕໍ່ ໄປແລ້ວ
ພໍ່ຫາກສອນສັ່ງແລ້ວ ຈອມແກ້ວຈຶ່ເອົາ ພໍ່ຖ້ອນ
ອັນນຶ່ງເສນາເຖົ້າ ມຸນຕີນ້ອຍໃຫຍ່
ເຂົາມອບນ້ອມ ຈອມເຈົ້າສັ່ງສອນ
ປ່າລອບຂ້າ ພັນແທງປ້ອຍດ່າ ເຂົາເນີ
ປ້ານແຕ່ໂທດແລ່ນຕ້ອງ ນາງນ້ອຍປ່າກະທຳ ແທ້ເນີ

ເຂົາບັ້ນກະກູບນ້ອຍ ປັນຍາຕ້ອຍຕ່ຳ
ພໍທີເປັນຂ້ອຍຂ້າ ເຂົາບັ້ນກໍຈຶງເປັນ ລູກເອີຍ
ຄ້ອນວ່າພໍ່ສັ່ງແລ້ວ ແກ້ວແກ່ນທັງສອງ
ນາງກໍບໍ ມີຫູນ ຈືຈຳເອົາໄວ້
ແຕ່ນັ້ນສອງພຍາເຈົ້າ ລາເມືອໂດຍດ່ວນ
ເບັດຊືໜ້າ ຫັນກ້າປ່າຍຫັກຂືນ
ນັບແຕ່ເດີນທາງໄດ້ ເດືອນປາຍຫ້າຄ່ຳ ຄືນແລ້ວ
ກໍຈຶງຫຼີງລ່ຳປ້ຽນ ເຫັນຄ້າຍເມກວຽງ
ຫຼີງເຫັນຍອດຊໍ່ຊ້ອງ ເງື້ອນໂງ່ນເງິນຂາວ
ຫຼັງສູງສຸດ ປູ່ປິນປອມຟ້າ
ມະຫາກະສັດເຫົ້າ ປາງຫອງຫົງປູ່
ນາງເອກເຄົ້າ ຫຽມຫ້າວຮ່ອມແພງ
ສຽງຊວ່າກ້ອງ ນັບຄອບໂຮງຫຼວງ
ລຸງອາວຖາມ ຂ່າວນາງນັບຫ້ອງ
ພູມີຫ້າວ ໄຂຄະດີເດີນພາກ
ທຸກທີຮຸ້ຂ່າວນ້ອຍ ນັບໃຫ້ຮຸ່ງຫາ ຫັ້ນແລ້ວ
ເທື້ອນີ້ໄປຕິກາບັ້ນ ສອງພຍາຫາລູກ
ຄັນວ່າພົບແກ່ນເຫງົ້າ ຄືນບ້ານປູ່ສຳຣານ ກ່ອນແລ້ວ

ບັດນີ້ຈັກກ່າວເຖິງມະຫາວົງເຈົ້າ ພຍາທັມສເວີຍຣາດ ກ່ອນແລ້ວ

ພຣະກໍທານທອດໃຫ້ ຄົນໄຮ້ທ່ຽວຂໍ
ມີທັງແສນຄຳພ້ອມ ແສນເງິນທານທອດ

ທຸກຄ່ຳເຊົ້າ  ບໍ່ມີເວັ້ນວ່າງວັນ ເຈົ້າເອີຍ
ແຕ່ນັ້ນພຣະພໍ່ເຈົ້າ  ຕ້ານຕໍ່ພຍາຫັມ
ອັນວ່າຝູງໂທສາ  ຄອງຂັງຈຳໄວ້
ຄວນທີ່ເອົາໄປຂ້າ  ຟັນຫົວຫຼາວສຽບ
ຢ່າໄດ້ໄວ້  ໃນໜ້າກົດເມືອງ ລູກເອີຍ
ແຕ່ນັ້ນພຍາຫັມເຈົ້າ  ຂໍວອນນ້ອມນ່ຽວ
ບໍ່ຄວນທຳໂທດຮ້າຍ  ຂໍຫ້າມພໍ່ພຣະອົງ ແດ່ຖ້ອນ
ຂ້າກໍກົວເວນຕ້ອງ  ພາຍລຸນນີ້ມາກ
ຂໍໃຫ້ປົກໂທດໃຫ້  ປາງນີ້ແກ່ເຂົາ ກ່ອນຖ້ອນ
ແຕ່ນັ້ນພຣະກໍເອົາເຂົາຂ້າ  ຊາວເມືອງແກ້ປ່ອຍ
ຝູງໄພ່ນ້ອຍ  ບາຫ້າວປ່ອຍເສັງ
ຍັງແຕ່ນາງທັງຫ້າ  ກັບແມ່ໄວຍະກາ
ທັງແສນເມືອງ  ໝູ່ເສນາເຖົ້າ
ເຂົາຢູ່ຫັ້ນ  ໝົດເຂດອາຍຸ
ຄັນວ່າມໍຣະນາດາຍ  ແກ່ລົງວັງນ້ຳ
ຝູງໝູ່ແຮ້ງ  ກາຍາດດື່ງກິນ
ທັງກັບໄຕ  ໂພ່ນພຸງທະລາຍມ້າງ
ຟັງເປີ້ນັກປາດເຈົ້າ  ຝູງໝູ່ບັນດິດ
ທັງຈານທິດ  ຊູ່ຄົນຟັງພ້ອມ
ກັບທັງຍິງຊາຍເຖົ້າ  ສາວຣາມແມ່ຮ້າງຖ່ວາ ຟັງຖ້ອນ
ສາວສ່ຳເລັກສ່ຳນ້ອຍ  ຟັງແລ້ວໃສ່ໃຈ

ຢ່າໄວ້ຄຶດໂລບລົ້ນ ລົ້ນແກ່ໂກທາ ແທ້ເນີ
ຢ່າໄດ້ພາງານ- ສັບສົ່ນຄວາມຮ້າຍ
ມັນຈັກເປັນໂທດກ້ານ ໄວຍະກາຍູງກ່າວ ມານີ້
ຄຶດຂ້າແດງອ່ອນນ້ອຍ ເວນຫ້ອຍສິງທັນ ແທ້ແລ້ວ
ອັນນຶ່ງຢ່າໄດ້ສັບສອນໃຫ້ ຜົວເມັຽຮ້າງຈາກ ກັນນັ້ນ
ປຸງວ່າເວນໄດ່ເຖົ້າ ຕາມສົ້ນສິງເຖິງ ບໍ່ຮູ້
ເປັນດັ່ງແສນເມືອງເຖົ້າ ກະທຳການສັບສົ່ ປາງນັ້ນ
ເຮັດໃຫ້ແດງອ່ອນນ້ອຍ ພອຍຫ້ອງພາກຜົວ
ເລີຍໄດ້ທົນທຸກຮ້າຍ ທັນທີຕາເຫັນ
ເປັນດິນມີກັນຫນາ ປູ່ຕລາງໜອງໃໝ້
ຕາຍໄປໄຊ້ ອະເວຈີຈົມຢູ່
ເນົາແຜ່ນພື້ນ ໃນໜ້ພ່ຳນານ ນັ້ນແລ້ວ
ຈຽມແດ່ເຈົ້າປູ່ສ້າງ ສເວີຍຣາດໂກສີ
ຫຼາຍຣະດູປີ ກໍບໍ່ເຄືອງຄຳຮ້ອນ
ອັນວ່າສາຣະວັນທ້າວ ຜີເມືອງພຣະພີ
ສອງກໍດ້ານສັ່ງທ້າວ ບຸນກວ້າງດ່າວເມືອ
ກ່ອຍຢູ່ດີເປີເໜືອຫົວເຈົ້າ ພຍາທັມທົສຣາດ ຂ້ອຍເອີຍ
ຄຶດເມື່ອເຈົ້າຮັກອ້າຍ ພາຜ້າຍທົ່ງວເດີນ
(ບັດນີ້ພີ່ຈັກຄືນສູ່ຫ້ອງ ທົນແທ່ງບັນທະພານ ກ່ອນແລ້ວ
ປຸງວ່າທັງເມືອງຄອງ ຂ່າວຮຽມເຫັນໜ້າ
ທັງພຍາລຸງເຈົ້າ ຈອມເມືອງຄອງຂ່າວ ມີຮູ້

24/VII

ພີ່ຈັກຟ້າວດ່ວນດັ້ນ　ວັນນີ້ພາກເນື້ອ ກ່ອນແລ້ວ)
ແຕ່ນັ້ນທ້າວຕອບຕ້ານ　ຂານສັ່ງພີ່ເນື້ອງ
ສອງບຸນເຣືອງ　ຄ່ອຍເນື້ອດີຖ້ອນ
ຄຶດເນື້ອສາມກະສັດນ້າງ　ເຫມານນ້າງມຸ່ນ ວັນນັ້ນ
ບານເນື້ອເຮົາເນື້ອຍແລ້ວ　ພຣະອິນລ້ຽງເຄື້ອງສເວີຍ ແທ້ນາ
ຄ່ອຍເນື້ອດີເປີສອງກະສັດໄທ້　ພີ່ເນື້ອງພຣະພີ່ ເນື້ອເປີ
ຄັນວ່າເນື້ອຮອດແລ້ວ　ຄະນີງນ້ອງປ່າລືມ ແດ່ຖ້ອນ
ອັນນຶ່ງຖ້າວ່າການເນື້ອງຮ້ອນ　ສິງຄານບັງເກີດ ເນື້ອໃດ
ເຈົ້າຈິງໃຊ້ຄີບນ້າ　ມາພີ້ທ່ຽວພລັນ ພີ່ເອີຍ
ຄ້ອນວ່າສາມກະສັດຕ້ານ　ດອນກັບການສັ່ງ
ສາມຂາບໄຫວ້　ກັບແລ້ວເລົ້າໜີ
ຝູງໝູ່ຊາຍໂຖງຜູ້　ເຂົາມານຳສິ້ງ ບານັ້ນ
ບາງພ່ອງມີລູກເຕົ້າ　ເມັ້ຽແລ້ວບໍ່ປາກໜີ
ບາງພ່ອງຍັງຕິດຊູ້　ຈຳແຫວນຝືນຝາກ
ຕັ້ງວ່າລຳບາກເດ　ຊີໄກນ້ອງບາຖແພງ ຂິນເອີຍ
ບາງພ່ອງບາຍເອົາໄດ້　ແຫວນຄຳບໍ່ບິ້ນ
ໄວ້ພໍ່ເໜືອນໜ້າອ້າຍ　ພາຍພຸ້ນພີ່ຊີລາ ກ່ອນແລ້ວ
ອັນນຶ່ງມັນຫາກຈິນໃຈຂ້ອຍ　ສາຣະວັນຊີພາດ່ວນ ໜີແລ້ວ
ພີ່ບໍ່ເປັນຈັ້ງຊັ້ນ　ເດືອນທ້າວ່າຊີໂອນ ນ້ອງແລ້ວ
ບັດນີ້ພໍ່ແຕ່ຈັບແຂນນ້ອງ　ບາຍບິນແລ້ວສັ່ງ ໄປແລ້ວ
ບໍ່ໄດ້ທັ້ງໜ້ອງທ້າຍ　ພາຍຂ້ອຍຊີຕ່າວລາ ກ່ອນແລ້ວ

| | |
|---|---|
| ຄ້ອນວ່າສອງຈາຕ້ານ | ດອນກັບອ້ອຍອິ້ນ |
| ສອງກໍແປ້ປິ້ນໜ້າ | ຈາຊູ້ຊ່າງຄຸບອນ |
| ຈິນວ່າສຸຣິໂຍຂຶ້ນ | ເຮືອງແສງແຈ້ງຮຸ່ງ ມາແລ້ວ |
| ສ່ວນວ່າຝູງພວກພ້ອມ | ບວງບ້າຍຈາກວຽງ |
| ຟັງບິນຫ່ວນ ໆ ກ້ອງ | ສຽງກອງຕີເສບ ພຸ້ນເປີ |
| ພິນພາດພ້ອມ | ຕາມເຈົ້າເສບເມືອ |
| ບາງພ່ອງໄປນອນຊ້ອນ | ດອນສາວຂັງຢູ່ ກໍມີ |
| ອອກຈາກສ້ວມບໍ່ໄດ້ | ສາວຊ້ຳຊ່ອຍອຳ |
| ຈິນວ່າເຖິງຍາມຄ້ອຍ | ຄອຍລິງແລ້ວຄ່ຳ |
| ສອງກໍກັບຕ່າວປິ້ນ | ຟູມຫຼີ້ ນດັ້ງຄວາຍ |
| ຕັ້ງວ່າສົມກໍໃຈແລ້ວ | ສອງຄືນຫັດທ່ຽງ |
| ເປັນດັ້ງກ້ວຍບິນໄວ້ | ຫຼາຍມື້ນວນໃບ ນັ້ນແລ້ວ |
| ບັດນີ້ເດີກ ໆ ຂ້ອນ | ຈິນຍາມໃກ້ຊີຮຸ່ງ ມາແລ້ວ |
| ແຕ່ນັ້ນບາລ່າຍເອົ້າ | ບວງບ້າຍຈາກສາວ |
| ສາວກໍຄວາມີຟ້າວ | ເຣວພລັນຈັບຕ່ຽວ |
| ມັນຫາກກາຍຄ່ຳແລ້ວ | ສັງເຈົ້າຊິຕ່າວເມືອ ນັ້ນເດ |
| ມັນບໍ່ມີຟັງແທ້ | ໂດນເຮືອນປິນແລ່ນ |
| ເສື້ອບໍ່ຜ້າ | ໜີແທ້ແຕ່ໂຕ |
| ມັນກໍປິນຟັ່ງຟ້າວ | ຮີບແລ່ນນຳພິນ |
| ເຂົາກໍແຊວ ໆ ສຽງ | ເຜດເປືອຍມາພຸ້ນ |
| ສັງວ່າແປນໂຕແທ້ | ຫາສັງປົກຫົ່ມ ບໍ່ມີນັ້ນ |

ອັນວ່າເສື້ອແລະຜ້າ ປະໄວ້ທີ່ໃດ ?
ມັນກ່າວຕ້ານ ຕົວະລ່າຍລວງພາງ
ຂ້ອຍກໍຫຼົງຫົນທາງ ຄວ່າໄປລອຍນ້ຳ
ຕັ້ງວ່າຖືກບ່ອນແກ້ງ ຕີຕາດຟອງໄຫຼ
ຂ້ອຍກໍລອຍໄປຄາ ເກືອບຊິຕາຍນໍຣະມ້ຽນ
ຝູງເສື້ອຜ້າ ຫາຍເສັຽທຸກສິ່ງ
ເກືອບບໍ່ເຫັນໜ້າເຈົ້າ ເມືອບ້ານຮ່ວມເພືອ ແທ້ແລ້ວ
ອັນວ່າຝູງພວກພ້ອງ ໝູ່ເພື່ອນທັງຫຼາຍ
ຄຶດອີດູຕົນມັນ ບິ້ນແພປັນໃຫ້
ເຂົາກໍໄຫຼ ໆ ຍ້າຍ ກາຍບາທີ່ງໃຫ່ງ ໄປແລ້ວ
ຫອມດອກໄມ້ ບານຮ້ອນເຣ່ງວອນ
ຟັງຍິນກາເວົາຮ້ອງ ດັງສີລອງຈັບຕົ້ນຊາຍຊູ່ ພຸ້ນເປີ
ບາງພ່ອງຄຶດຮອດຊູ້ ໃຊມໃຫ້ຮຸ່ງຫາ
ບານພີ້ລາໜີແລ້ວ ປ່າລືມຄວາມພີ້ສັ່ງ ນັ້ນເນີ
ຜູ້ບ່າວນັ່ງລ້າຍຊ້າຍ ປ່າຫາງາຍໃຫ້ແກ່ໃຜ ພີ້ເນີ
ບາງພ່ອງເສັ້ງດາຍໂອ້ ຄະນຶງສາວຮ້ອງຮ່ຳ
ຄຶດນຳຊູ້ພ່ອງນັ້ນ ລາງຊ້ຳຄຶດເມັ້ງ
(ລາງພ່ອງຄຶດຮອດນ້ອງ ຜູ້ບໍ່ປາກຈາດອມ
ມັນຫາກວຽນໄປຫາ ຊູ່ ຄືນອີງຮົ້ວ
ເທື່ອນີ້ຂວັນຫົວຂ້ອຍ ຮານຄືງມືດຸ່ງ ດອມແລ້ວ
ລອຍເລົາວຽນເຂົ້ານຸ້ງ ນຳນ້ອງຜູ້ປະສົງ ພຸ້ນແລ້ວ

ລອນທີ່ຊີກຂຶ້ນມ້າ ຕີແລ່ນນຳທາງ
ກາງຄືນທັງກາງວັນ ຄຶດບໍ່ລືມຄາວນ້ອຍ
ໂອນໍປານນີ້ນິງສີສ້ອຍ ປັດທຸມມາຍັງຄ່ອຍຢູ່ ດີບໍ່
ລືນ້ອງມີຄູ່ຊ້ອນ ນອນຝັ້ນກ່ອນພີ່ຊາຍ ແລ້ວເດ
ເຂົາກໍວູນວາຍໄຫ້ ໜີໄປທັງໂສກ
ກໍຈຶງພົ້ນໂຄກກວ້າງ ເຖິງເຫົ້າເຂດເມືອງ ຫັ້ນແລ້ວ
ແຕ່ນັ້ນເຂົາກ່າວເວົ້າ ຕ້ານຕໍ່ຈາກັນ
ອັນນີ້ເປັນແດນຂິງ. ເຂດນັນທະພານແລ້ວ
ກໍບໍ່ດົນນານແທ້ ພໍປະມານຈັກຮອດ
ຕັ້ງແຕ່ນີ້ ໄປໜ້າແປດຄືນ ເຈົ້າເອີຍ
ຈິງຈັກເຖິງຫີນຫ້ອງ ອະມໍຣະໂຄຍາທີບ
ເປັນກົບກ້ຳ ເມືອງບ້ານແຫ່ງເຮົາ ແທ້ແລ້ວ
ແຕ່ນັ້ນເຂົາກໍພາກັນຜ້າຍ ຫາຍຄືນຄາວເຄງ
ຮ້ອນເຮ່ງຮ້າຍ ໂຄຍ້ອນອານຄີງ
ຫາຍວັນແລ້ວ ຫາຍຄືນເລີຍຮອດ
ເລີຍເລົ່າພັກຈອດຊ້າງ ຮຽງຮ້ານກ່າຍເກີບ
ເຂົາກໍຂົນຂອງຂຶ້ນ ເມືອໂຮງນິບານ
ມ້ຽນເຄືອງຊ້າງ ເຂັນໄວ້ທີສູງ
ແຕ່ນັ້ນສາຣະວັນທ້າວ ຜີເມືອງມາຮອດ
ລຸງຍອດທ້າວ ບຸນກວ້າງເລົ່າຖາມ
ອັນວ່າສົມງາມເຈົ້າ ທິກພຣະອິງເມືອຮອດ

ເມືອງບອກແກ້ວ ປູ່ສ້າງສຳຣາບ ແດ່ລື ?
ແຕ່ນັ້ນສາຣະວັນໄຫວ້ ນີເມືອງທູນບາດ
ອັນວ່າທິກບາດເມື້ອ ບຸນກວ້າງສຳຣາບ ພຣະເອີຍ
ອັນວ່າບາດຖານທ້າວ ທິງສີສເວີຍຣາດ ພາຍພຸ້ນ
ພຣະໄດ້ທິງທ່ອນທ້າວ ເມືອຂ້າກໍຈິງມາ ໜີ້ແລ້ວ
ເມື່ອນັ້ນກຸມພາທ້າວ ດີນລຸງຮູ້ຂ່າວ
ຊີນຊື່ນຕ້ານ ກອນທ້າວຊອບໃຈ ແທ້ແລ້ວ
ແຕ່ນັ້ນນີເມືອງທ້າວ ເມືອໂຮງເຖິງແທ່ນ
ທິງປູ່ສ້າງ ທຳກວ້າງທີ່ກະເສີນ
ອັນວ່າສາຣະວັນທ້າວ ອຳລາແລ້ວສັ່ງ
ທ້າວກໍເມືອສູ່ຫ້ອງ ເມືອງບ້ານແທ່ງດີນ ຫັ້ນແລ້ວ
ອັນວ່າພຍາຫັນເຈົ້າ ທິງເມືອງສເວີຍຣາດ ພາຍພີ້
ເຈົ້າກໍເທເທດໃຫ້ ຫັນແຈ້ງຊູ່ປະກາບ
ບູທ່າງທາສາຂ້າ ທຳບຸນທານທອດ
ບໍ່ຫອດໄຮ້ ຫຼາຍລ້ານລູກຊຸນ
ນີແຕ່ທຳບຸນສ້າງ ຫຼາຍເມືອງມາສ່ວຍ
ຮ້ອຍປະເທດດ້າວ ໄຫຼເຂົ້າເພີ່ງບຸນ
ຟັງຍິນແຊວ ໆ ພ້ອມ ລະງິນສຽງສາວບ່າວ
ເຂົາກໍຊິນຊື່ນຫຼືບ ຈາເວົ້າຈ່າຍພຍາ
ຕັ້ງຫາກປາກິດແທ້ ໂກສີສບຸກມາກ ຈິງແລ້ວ
ບູທ່າງຟູງໄພ່ນ້ອຍ ຊາວຄ້າທ່ຽວເຖິງ

ບໍ່ຫ່ອນໄຣ້　　ສັພສິງການໃດ
ເຊງວ່າໃນໂກສີ　　ຊ່າກຽນໄກບ້ອງ
ພໍເມືອຫຼາຍປີໄດ້　　ສັງຂານແຖມຖ່າຍ ມາບັ້ນ
ພຣະພໍ່ເຖົ້າແກ່ແລ້ວ　　ຊະຣາລ້າລ່ວງເຖິງ
ກັບທັງນາດາແກ້ວ　　ກະສັດຕີແຕງອ່ອນ
ນາງກໍເຖົ້າແກ່ແລ້ວ　　ເລີຍຂຶ້ນສູ່ສວັນ
ພຣະກໍງັບສິບເຈົ້າ　　ສອງພຣະອົງພໍ່ແມ່
ສາມຂວບເຂົ້າ　　ຣະດູໄດ້ຖ່າຍມາ
ແລ້ວກໍເຊີນແຈ່ມເຈົ້າ　　ຂຶ້ນສູ່ພຣະເມນຫຼວງ
ພຣະຈິ່ງໂກວພູສາ　　ເດດແຂງສຸມໃຫ້
ພໍເມືອຄວັນໄຟມ້ວຍ　　ດັບໄປມຸດມອດ
ທ້າວຈິ່ງເກັບດູກເຈົ້າ　　ມາສ້າງແຕ່ງປະນົມ
ທັງເລົ່ານິມົນເຈົ້າ　　ສັງໂຄມາສູດ
ທານເທດແລ້ວ　　ໝາຍນ້ຳສົ່ງບຸນ
ກໍຫາກໂຮງ ໆ ເຫຼື້ອນ　　ເຈດີແກ້ວກໍ່
ເປັນທີ່ແລ້ວ　　ທັງຄ້າຍຂອບພຣະຄຸນ ເຈົ້າເອີນ
ອັນນຶ່ງກໍຫາກການສະເດັດສ້ຽງ　　ສອງພຣະອົງພໍ່ແມ່
ອາບຸໄຂຂອດສ້ຽງ　　ບໍໄວ້ທີ່ຄວນ ກ່ອນແລ້ວ ຯ
ແຕ່ນັ້ນທ້າວກໍທິງສືບສ້າງ　　ນະຄອນໃຫ່ງໂກສີ
ໂດຍຄະດີເດີມ　　ແຕ່ງແປງເມືອງບ້ານ
ພຣະກໍສຳຣານສ້າງ　　ສິບທານຫຼາຍຂວບ ມາແລ້ວ

ຜິຈັກນັບອ່ານໄດ້ ພັນເຂົ້າເຂດວະສາ
ອາຍຸໄດ້ ພັນຂວບສັງຂຍາ
ພຣະກໍຕະເດີນສອນ- ສັ່ງຄົນທັງຄ້າຍ
ເຖິງຫີນຫ້ອງ ຂຸນນາງທຸກທົ່ວ
ເຂົາກໍກົວອ່ອນນ້ອມ ຟັງເຈົ້າເທສນາ ແທ້ແລ້ວ
ອັນວ່າຍັກສາເສື້ອ ເມືອງນາກກຸມພີ ກໍດີ
ເຂົາກໍຍິນດີຊົມ ເພິ່ງປາຣະມີເຈົ້າ
ພຣະສເວີຍເມືອງໄດ້ ພັນປີເປັນຂນາດ
ກໍຈິ່ງສຸຣະຄຸດມ້ຽນ ເມືອຟ້າຮ່ວມພຣະອົງ
ຍູທ່າງທົງສຸກລົ້ນ ເມືອງສວັນແສນສິງ
ມີແຕ່ຂອງທິບລ້ວນ ໃນຫັ້ນຊູ່ອັນ
ອັນວ່າສາວຊ່ວງໃຊ້ ນາງເທພອັກສອນ
ນາງສນົມກຳນັບ ແຫ່ຕີນຕາມເຝົ້າ
ລວນແຕ່ຄົນຂອງເຈົ້າ ເມືອງຫຼັງເມືອເກີດ
ເຂົາຫາກເມືອຮ່ວມເຈົ້າ ເມືອງຟ້າຊູ່ຄົນ ຫັ້ນແລ້ວ
ເທື່ອນີ້ບຸຕິໄວ້ ສັງໂຣມຣອມທາດ
ບໍ່ບົກໄວ້ ຖວາຍໃຫ້ພຣະບອດຄຸນ ກ່ອນແລ້ວ

ບັດນີ້ຮຽມຈັກມ້ວນຊາດທ້າວ ປາງກ່ອນພາຍຫຼັງ
ພໍໃຫ້ເປັນນິພານ ສືບປຸນໄປໜ້າ
ອັນວ່າມະຫາວົງເຈົ້າ ຈັກກີຕົນພໍ່ ວັນນັ້ນ
ບໍ່ໃຊ່ຜູ້ຜາງຊ້າ ຊົ່ວສະເລ ເຈົ້າເອີຍ

ຊິວ່າສີສຸດໂທທ້າວ    ເກີຍມາເປັນພໍ່ ບາແລ້ວ
ກໍຫາກທຸກຊາດໃຊ້    ລົງພ້ອມພ່ຳພຣະອົງ ແທ້ແລ້ວ
ອັນວ່າກະສັດຕີເຈົ້າ    ບາງງາມແດງອ່ອນ ວັນນັ້ນ
ກໍສີຫານາຍາແມ່ເຈົ້າ    ປາງນັ້ນທ່ຽງຈິງ
ອັນວ່າຫັດຖຈັກທ້າວ    ເອົາບາງລັກລອບ ວັນນັ້ນ
ກໍຫາກແມ່ນສິດເຈົ້າ    ຕົນລ້ຳໂມກລະລາ ແທ້ແລ້ວ
ອັນວ່າສາຣະວັນທ້າວ    ພຍາຜີທົງເດດ ວັນນັ້ນ
ພາພຣະວິເສດເຈົ້າ    ໄປມ້າງໝູ່ມານ
ຫາກແມ່ນລູກສິດເຈົ້າ    ຕົນຊື່ສາຣີບຸດ
ເປັນຜູ້ແນບນຳແຝງ    ແຫ່ງພຣະອົງລົງພ້ອມ
ອັນວ່າກຸມພາທ້າວ    ຕົນລູງໂພທິຣາດ ວັນນັ້ນ
ກັບຊາດມາໃກ້ ໆ    ດຽວນີ້ບໍ່ແມ່ນໃຜ
ຊື່ວ່າອະນຸຣຸທເຖນໄທ້    ຫຼຽນອົງພຸທບາດ
ກິເລດທັນຂາດສ້ຽງ    ນຳເຈົ້າບໍ່ໄລ ແທແລ້ວ
ອັນວ່າພີເມືອງຜູ້    ຮັກສາອົງຕາມຣາດ ປາງນັ້ນ
ຊື່ວ່າອານັນເຖຣາຊເຈົ້າ    ບານເທົ້າລູກອາວ
ອັນວ່າເທພແຫ່ງຫຼ້າ    ທ້າວຊື່ຫັສໄນ
ເປັນກະບິດຖາ    ແຫ່ງອົບໂທເຈົ້າ
ພັນຕາໃຊ້    ເຮວພລັບລົງໂພດ ປາງນັ້ນ
ຊື່ວ່າຣາຫຸນເຖນທ່ຽງແທ້    ຈອມເຈົ້າລູກພຣະອົງ ຫັ້ນແລ້ວ
ອັນວ່ານາງຍອດແກ້ວ    ອົງເອກລີລາ

ເນົາໃນເມືອງສວັນ　　　ດ່ວນລົງມາລ້ຽງ
ເອົາບາທ້າວ　　　ໄພທິຍາບລ້ຽງວ່ ປາງນັ້ນ
ຊື່ວ່າບາງເຂນາທ່ຽງແທ້　　　ທຽມໃຫ້ບໍ່ວາງ ແທ້ແລ້ວ
ອັນວ່າປັດທຸມນາບ້ອຍ　　　ອົງເອກນະເທສີ
ເປັນເທວີ　　　ຝ່າຍຂວາທຽມທ້າວ ວັນນັ້ນ
ບໍ່ໃຊ່ສາມານເຊື້ອ　　　ແຊງນາມແນວອື່ນ
ຫາກແມ່ນໄສທະຣາພິມພາຍອດແພ້ນ ປາງນີ້ທ່ຽງຈິງ
ອັນວ່າຈັນທອນນ້ອຍ　　　ອິນທອງຄຳປາດ ປາງນັ້ນ
ກັບຊາດມາຊາດນີ້　　　ຈິນໃກ້ບໍ່ແມ່ນໃຜ
ຫາກແມ່ນພວກຣັບໃຊ້　　　ສອນສາສນາທັ້ນ
ສາວິກາພິກຂຸນີ　　　ຮ່ວມທັນພຸດໂທເຈົ້າ
ອັນວ່າຝູງເຂົາຜູ້　　　ໄວຍະກາສັບສໍ່
ຈຳໃຫ້ພຣະພໍ່ເຈົ້າ　　　ຕີຂ້ຽນແມ່ພຣະອົງ ວັນນັ້ນ
ກັບມາໃນຊາດນີ້　　　ຍັງບຽດບຽນພຣະອົງ
ຟັງຄວາມເດັຽຣັດຖີສົງ　　　ເລົ່າທຳກົນລໍ້
ມັນກໍເອົາຍັງຜ້າ　　　ພັນປູມອຸ້ມຣໍ່
ສັບສໍ່ວ່າພຣະເຈົ້າ　　　ເຮົາທີ້ ບນິສຈານ
ກັບເລົ່າບັນດານໃຫ້　　　ກັບເກີດໄວວາ
ນຸສີກາກັດເສັຽ　　　ທ່ອນທອງໃນຜ້າ
ຊາວມະຫາຊົນພ້ອມ　　　ພາກັນຮ້ອງໂຫ່

ຈັບຈ່ອງມັນຊັດຖິ້ມ ໜີໄດ້ຊີວໄກ
ແຜ່ນດິນອິດບໍ່ໄດ້ ບະປ່ອງເປັນຮູ
ພ້ອມທັງແປວບາຣິກ ລວາກມັນຄວັນກຸ້ມ
ມັນກໍຕົກໄປໃໝ້ ອະເວຈີຈົມຈຸ່ມ
ເພົາປູ່ພື້ນ ໃນໝໍ້ພ່ຳບານ ແທ້ແລ້ວ
ເຖິງວ່າເມດໄຕເຈົ້າ ຊີລົງມາຕັດເກດ ຄາວພຸ້ນ
ພຣະກໍຈັກລ່ຳປ້ຽມ ຕາສີ້ງເບິ່ງດາຍ ຫັ້ນແລ້ວ
ອັນວ່າແສນເມືອງຜູ້ ກິນຄຳພັນບ່ຳງ ປາງນັ້ນ
ຫາກແຜ່ນເວນບໍ່ແລ້ວ ບຳບຽດສັບພັນຍູ
ເປັນສັດຕູສຳຄັນ ແທ່ງອົງພຸດໂທເຈົ້າ
ອັນນີ້ເວນຂອງເຈົ້າ ປາງຫຼັງໃຊ້ຊາດ
ໃຜຫາກບັງອາດໃຫ້ ເຫັນຮ້າຍປູ່ເລີງ ຫັ້ນແລ້ວ
ຟັງເປີແສນສ່ຳເຊື້ອ ຊາວໂລກບົ່ງຊາບ ເຮົາເອີຍ
ຟັງນິຍາຍຊາດົກ ກ່າວມານີ້ໄວ້
ອັນວ່ານໍຣິນໃຫ້ ຕົນບຸນພຣະເກດ
ເຈົ້າຜູ້ວິເສດນ້າງ ນາງມ້ວຍດຸ່ມຕາຍ ວັນນັ້ນ
ຫາກແຜ່ນອິກເອກອ້າງ ຕົນອາດສັບພັນຍູ ນີ້ແລ້ວ
ຄືພຣະບໍຣົມຄຣູ ສາສດາອົງລ້ຳ
ເປັນຜູ້ນຳສັດເຂົ້າ ນິຣະພານພົ້ນຝັ່ງ
ສາສນາພຸດຕັ້ງທ່ຽງໄວ້ ດຽວນີ້ສືບມາ ເຈົ້າເອີຍ

24/VII

| | |
|---|---|
| ນິດຖິດາສ້ຽງ | ທັມມະເທດນິທານ |
| ທ່ານປຸຣານາກາຈານ | ຣິຈນາຕາໄວ້ |
| ຮຽນໄດ້ກອບໃຈແກ້ | ຕັດຕອນຕາມຕື່ມ |
| ຫຼູດລື່ນຫຼອນພາດພັ້ງ | ຂໍໄດ້ໂຜດອະໄພ |
| ຂ້າຜູ້ໄດ້ກວດແກ້ | ກອບເກົ້ານິທານ ນີ້ນັ້ນ |
| ບານກອບບັນຫານ | ວ່າຈູນເປັນເກົ້າ |
| ເນົາປະຈຳການຫ້ອງ | ກອງວັນນາຄະດີສາດ |
| ເປັນນັກປາດນ້ອຍ ໆ | ຄຳຮູ້ຄ່າຂໍ້ນີ ນີ້ແລ້ວ |
| ກັບທັງຜູ້ກວດແກ້ | ແປປັ່ນຕາມກອນ |
| ຊື່ວ່າທອງໝັ້ນ ປ. | ຈື່ຈຳນານເກົ້າ |
| ເນົາຢູ່ໃນຫີບຫ້ອງ | ກອງວັນນະຄະດີສາດ |
| ເປັນນັກປາດນ້ອຍ ໆ | ສເນີດ້ານດັ່ງດຽວ ກັບແລ້ວ ຯ |

- ຈບ -